# ປື້ມຄູ່ມື

## ການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງ

(ບາດກ້າວການຮຽບຮຽງຄຳກ່າວອ້າງ-ປະເດັນຂັດແຍ່ງຂອງຄູ່ຄວາມ)

# Handbook of Fact Finding in Civil Procedure

(Steps for Arranging the Parties' Allegations and Points at Issue)




(ສະບັບປັບປຸງ ປີ 2025)

# ປື້ມຄູ່ມື
# ການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງ
## (ບາດກ້າວການຮຽບຮຽງຄຳກ່າວອ້າງ-ປະເດັນຂັດແຍ່ງຂອງຄູ່ຄວາມ)

# Handbook of Fact Finding in Civil Procedure
## (Steps for Arranging the Parties' Allegations and Points at Issue)


**ໂດຍ ກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມໃນຂົງເຂດຍຸຕິທຳ (ກຸ່ມຍ່ອຍແພ່ງ)**

ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍ

ໃນຂົງເຂດຍຸຕິທຳ

ດ້ວຍການຮ່ວມມື ລະຫວ່າງ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ,

ອົງການໄອຍະການປະຊາຊົນ, ສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ

ກັບ ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA)



**(ສະບັບປັບປຸງ ປີ 2025)**

## ຄະນະຊີ້ນຳໂຄງການ

(ໄລຍະທີ II)

| | |
|---|---|
| ທ່ານ ຣສ. ປອ. ອຸ່ນຫຼ້າ ສີວັນເພັງ | ຮອງຜູ້ອຳນວຍການໃຫ່ຍມະຫາວິທະຍາໄລແຫ່ງຊາດ |
| ທ່ານ ຄຳເພັດ ສິມວໍລະຈິດ | ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ບຸນຂວາງ ທະວີສັກ | ຮອງປະທານສານປະຊາຊົນສູງສຸດ |
| ທ່ານ ເກດສະໜາ ພົມມະຈັນ | ຮອງລັດຖະມົນຕີກະຊວງຍຸຕິທຳ |

## ຄະນະບໍລິຫານງານໂຄງການ

(ໄລຍະທີ II)

| | |
|---|---|
| ທ່ານ ປອ. ສົມເດດ ແກ້ວວົງສັກ | ຫົວໜ້າຄະນະວິຊານິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ບົວລີ ເພັດມີໄຊ | ຫົວໜ້າກົມຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ນ. ລັດຕະນະພອນ ພະພັກດີ | ຮອງຫົວໜ້າກົມຮ່ວມມືກັບຕ່າງປະເທດ ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ເກດມະນີ ຈັນໄຕທິບ | ຮອງຫົວໜ້າກົມຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ອານຸສິດ ສຸຂະທຳມະວົງ | ຫົວໜ້າກົມຮ່ວມມື ສານປະຊາຊົນສູງສຸດ |
| ທ່ານ ສັກກຸນາ ຍະພິຈິດ | ຮັກສາການຫົວໜ້າຄະນະສານຄອບຄົວ ສານປະຊາຊົນສູງສຸດ |
| ທ່ານ ນະລົງລິດ ນໍລະສິງ | ຫົວໜ້າກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ, ກະຊວງຍຸຕິທຳ |
| ທ່ານ ສຸພີ ນໍລິນທາ | ຮອງຫົວໜ້າກົມຮ່ວມມື ກະຊວງຍຸຕິທຳ |

## ຄະນະປັບປຸງ ແລະ ຮຽບຮຽງ ກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມກົດໝາຍແພ່ງ

| | |
|---|---|
| ທ່ານ ກັ້ງ ເຕັມສົມບັດ | ສານປະຊາຊົນສູງສຸດ |
| ທ່ານ ນາງ ທັດສະນາລອນ ສີສຸນົນທ໌ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ນາງ ເພັດສະໄໝ ໄຊມຸງຄຸນ | ສະຖາບັນຄົ້ນຄວ້າຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |
| ທ່ານ ກິ່ງເພັດ ບົວລະພັນ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ໄຊຊະນະ ລາດຊະວົງ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ບຸນສີ ບູລົມ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຊາຍປະສິງ ອຸ່ນສີດາ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ມານະພອນ ທອງດີຍະລາດ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຈັນສຸກ ຄຳພູ | ສານປະຊາຊົນສູງສຸດ |
| ທ່ານ ນາງ ຄຳຮູ້ ວໍລະບຸດ | ສານປະຊາຊົນສູງສຸດ |
| ທ່ານ ສົມບູນ ສີປະເສີດ | ສານປະຊາຊົນສູງສຸດ |
| ທ່ານ ລິຄິດ ໄຊຍະວົງ | ສານປະຊາຊົນສູງສຸດ |
| ທ່ານ ນາງ ວິໄລຈັນ ທ່າວ | ກະຊວງຍຸຕິທຳ |
| ທ່ານ ເພັງພາວັນ ອິນທະວົງ | ກະຊວງຍຸຕິທຳ |
| ທ່ານ ເຂັມເພັດ ແສງທອງຄຳ | ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |
| ທ່ານ ລັງສີ ກິ່ງພະຈັນ | ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |
| ທ່ານ ແກ້ວສາຍຈິງ ສາຍສຸວັນນະວົງ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ພູໄຊ ຈັນທະວົງ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ທອງຄຳ ລໍ່ຢ່າງ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ນາງ ຄຳຜິວ ວິໄລພອນ | ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ນາງ ມະນີຈັນ ພິລາພັນ | ສະພາທະນາຍຄວາມ |

## ຜູ້ຮ່ວມມີຄຳເຫັນຈາກຝ່າຍຍີ່ປຸ່ນ

(ໄລຍະທີ II)

Mr. Akito ISHISAKI JICA Project Legal Expert

## ຜູ້ອອກແບບ ແລະ ປັບເຕັກນິກ

ທ່ານ ດານຸພົນ ຈັນທະກຸມມານ

ທ່ານ ນາງ ມະລິສາ ແສງສຸວັນ

## ຜູ້ແປພາສາປະຈຳຂອງກຸ່ມ

ທ່ານ ມະໂນເດດ ຈຸນທະວົງ

## ຄະນະຊີ້ນຳໂຄງການ

(ໄລຍະທີ I)

| | |
|---|---|
| ທ່ານ ສຈ. ປອ. ຮຸ່ງເພັດ ຈັນທະວົງ | ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ |
| ທ່ານ ຄຳເພັດ ສົມວໍລະຈິດ | ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ບຸນຂວາງ ທະວີສັກ | ຮອງປະທານສານປະຊາຊົນສູງສຸດ |
| ທ່ານ ເກດສະໜາ ພົມມະຈັນ | ຮອງລັດຖະມົນຕີກະຊວງຍຸຕິທຳ |

## ຄະນະບໍລິຫານງານໂຄງການ

(ໄລຍະທີ I)

| | |
|---|---|
| ທ່ານ ຣສ. ວຽງວິໄລ ທ່ຽງຈັນໄຊ | ຄະນະບໍດີ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ບົວລີ ເພັດມີໄຊ | ຫົວໜ້າກົມຕິດຕາມກວດກາການດຳເນີນຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຈັນທະລີ ດວງວິໄລ | ຜູ້ພິພາກສາອາວຸໂສ ສານປະຊາຊົນສູງສຸດ |
| ທ່ານ ນະລົງລິດ ບໍລະສິງ | ຫົວໜ້າຫ້ອງການ ກະຊວງຍຸຕິທຳ |

## ຄົ້ນຄວ້າ ແລະ ຮຽບຮຽງໂດຍ ກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມໃນຂົງເຂດຍຸຕິທຳ (ກຸ່ມຍ່ອຍແພ່ງ)

| | |
|---|---|
| ທ່ານ ອຈ ວິໄຊ ສີຫາປັນຍາ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ນ. ສຸກສະຫວາດ ບຸນມາແສງ | ສານປະຊາຊົນສູງສຸດ |
| ທ່ານ ປອ. ວຽງເພັດ ເຊັ່ງຊື້ງເຢຽລໍໄຟຈົງ | ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |
| ທ່ານ ດາບສະດາຈັນ ວົງໄຊ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ປອ. ນ. ດວງມາລາ ຄຳສິງກາ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ອຈ. ປອ. ສົມເດດ ແກ້ວວົງສັກ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ຣສ. ບຸນທ່ຽງ ພົມມະຈັນ | ຄະນະນິຕິສາດ ແລະ ລັດຖະສາດ |

| | |
|---|---|
| | ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ບຸນສີ ບູລົມ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຄຳປະກອນ ທອງປະທຸມ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຄຳໄພ ໄຊຍະສຸກ | ສານປະຊາຊົນສູງສຸດ |
| ທ່ານ ນ. ວິໄລພອນ ວົງສະຫວັດ | ສານປະຊາຊົນສູງສຸດ |
| ທ່ານ ບຸນຕາ ສ.ຜາບມີໄຊ | ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |
| ທ່ານ ນ. ເພັດສະໄໝ ໄຊມຸງຄຸນ | ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |
| ທ່ານ ຊອ ສຸກັນຍາ ຈັນທະວົງສາ | ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |
| ທ່ານ ອຈ ເຂັມເພັດ ແສງທອງຄຳ | ສະຖາບັນຍຸຕິທຳແຫ່ງຊາດ ກະຊວງຍຸຕິທຳ |

## ຜູ້ຮ່ວມມີຄຳເຫັນຈາກນັກກົດໝາຍຜູ້ຊົງຄຸນວຸດທິ

| | |
|---|---|
| ທ່ານ ສຈ. ດາວອນ ຫວ່າງວິຈິດ | ນັກກົດໝາຍຜູ້ຊົງຄຸນວຸດທິ |
| ທ່ານ ສຈ. ເກດ ກຽດຕິສັກ | ນັກກົດໝາຍຜູ້ຊົງຄຸນວຸດທິ |

## ຜູ້ຮ່ວມມີຄຳເຫັນຈາກຝ່າຍຍີ່ປຸ່ນ

| | |
|---|---|
| Mr. SHIGA Koichi | Attorney at Law |
| Mr. KATO Satoshi | Tokyo High Court Judge |
| Mr. SAWAI Hiroshi | JICA Project Legal Expert |
| Ms. SUZUKI Ichiko | JICA Project Legal Expert |
| Mr. SATAKE Ryo | JICA Project Legal Expert |
| Expert of ICD Professors | ICD, Ministry of Justice, Japan |

**ບົດຄຳຫັນ**

ປຶ້ມຄູ່ມື ການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງ ໄດ້ຮັບການຈັດພິມໃນປີ 2023 ຊຶ່ງເປັນຄູ່ມືທີ່ສຳຄັນ ແລະ ເປັນປະໂຫຍດໃຫ້ແກ່ການຄົ້ນຄວ້າຫຼັກການ ແລະ ພາກປະຕິບັດໃນການດຳເນີນຄະດີແພ່ງ ໂດຍສະເພາະການກຳນົດຂໍ້ເທັດຈິງໃນຄະດີທາງແພ່ງ, ເປັນບ່ອນອີງໃຫ້ຜູ້ພິພາກສາ, ພະນັກງານໄອຍະການປະຊາຊົນ, ທະນາຍຄວາມ ແລະ ນັກກົດໝາຍນຳໃຊ້ເຂົ້າໃນການປະຕິບັດໜ້າທີ່ໃນການກຳນົດຂໍ້ເທັດຈິງ ປະກອບສ່ວນໃນການດຳເນີນຄະດີແພ່ງມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ຂຶ້ນເທື່ອລະກ້າວ. ໃນປີ 2024 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໄດ້ຮັບການປັບປຸງ ແລະ ມີຜົນບັງຄັບໃຊ້ໃນເດືອນສິງຫາ 2025, ມີຫຼາຍເນື້ອໃນທີ່ປັບປຸງ ເຮັດໃຫ້ຄູ່ມືການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງມີບາງເນື້ອໃນບໍ່ສອດຄ່ອງກັບກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງ. ສະນັ້ນ, ຄະນະຄົ້ນຄວ້າຂອງ 4 ພາກສ່ວນ ຄື: ກະຊວງຍຸຕິທຳ, ມະຫາວິທະຍາໄລແຫ່ງຊາດ ຄະນະນິຕິສາດ ແລະ ລັດຖະສາດ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຮ່ວມກັບ ຊ່ຽວຊານກົດໝາຍຍີ່ປຸ່ນ ພາຍໃຕ້ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ ໄຈກາ (JICA) ປະເທດຍີ່ປຸ່ນ ຈຶ່ງໄດ້ຄົ້ນຄວ້າປັບປຸງຄູ່ມືສະບັບນີ້ ໃຫ້ສອດຄ່ອງຕາມຫຼັກການໃນການແກ້ໄຂບັນຫາທາງແພ່ງ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 ຊຶ່ງມີການກ່ຽວພັນກັບການກຳນົດເຫດການຂອງຄະດີ, ການກຳນົດສິດທວງ, ເງື່ອນໄຂທີ່ພາໃຫ້ເກີດສິດທວງ, ການກຳນົດປະເດັນຂັດແຍ່ງ ແລະ ການກຳນົດຂໍ້ມູນຫຼັກຖານທີ່ກ່ຽວຂ້ອງກັບຄະດີ.

ປຶ້ມຄູ່ມືສະບັບປັບປຸງນີ້ ເລັງໃສ່ບາດກ້າວການຮຽບຮຽງຄຳກ່າວອ້າງ-ປະເດັນຂັດແຍ່ງຂອງຄູ່ຄວາມ ຊຶ່ງປະກອບມີ 2 ພາກຄື ພາກທີ I ຄວາມຮູ້ພື້ນຖານກ່ຽວກັບການກຳນົດຂໍ້ເທັດຈິງ ຊຶ່ງເປັນພາກກຳນົດຂຶ້ນໃໝ່ ແລະ ພາກທີ II ກໍລະນີສຶກສາ ທີ່ປັບປຸງ 4 ກໍລະນີສຶກສາຂອງປຶ້ມຄູ່ມືສະບັບກ່ອນ. ຄະນະຄົ້ນຄວ້າຮ່ວມກັບຊ່ຽວຊານຍີ່ປຸ່ນ ໄດ້ກຳນົດແຕ່ລະກໍລະນີສຶກສາດ້ວຍວິທີການຕັ້ງຄຳຖາມ, ກຳນົດເງື່ອນໄຂທີ່ພາໃຫ້ເກີດສິດທວງ, ກຳນົດປະເດັນຂັດແຍ່ງ ແລະ ກຳນົດຫຼັກຖານເພື່ອພິຈາລະນາປະເດັນຂັດແຍ່ງ. ວິທີການຄົ້ນຄວ້າທາງກຸ່ມໄດ້ອ້າງອີງກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ໂດຍສະເພາະປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຫຼັງຈາກນັ້ນ ກໍໄດ້ນຳເອົາຜົນການຄົ້ນຄວ້າໄປປຶກສາຫາລືນຳນັກກົດໝາຍຜູ້ຊົງຄຸນວຸດທິ, ກວດແກ້ຈາກຄະນະຊີ້ນຳໂຄງການ ແລະ ຄະນະບໍລິຫານງານໂຄງການ.

ປຶ້ມຄູ່ມືສະບັບປັບປຸງໃໝ່ນີ້ ເປັນປຶ້ມທິດສະດີທາງກົດໝາຍແພ່ງ ແລະ ພາກປະຕິບັດຕົວຈິງ ທີ່ມີຄຸນຄ່າທາງດ້ານວິຊາການ ແລະ ເປັນຜົນປະໂຫຍດສູງໃຫ້ແກ່ການສຶກສາຄົ້ນຄວ້າທິດສະດີ ແລະ ພຶດຕິກຳຕົວຈິງ ເພື່ອຮຽບຮຽງຄຳກ່າວອ້າງຂອງຄູ່ຄວາມ ທີ່ຈະນຳໄປສູ່ການແກ້ໄຂຄະດີທີ່ພົວພັນເຖິງເລື່ອງທາງແພ່ງຈະກາຍເປັນຄູ່ມືທາງດ້ານວິຊາການ ເພື່ອປະກອບສ່ວນເຂົ້າໃນການເສີມສ້າງ ແລະ ພັດທະນາລະບົບກົດໝາຍຂອງ ສປປ ລາວ ກໍຄືການສ້າງລັດໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍຢ່າງແທ້ຈິງ. ພ້ອມກັນນີ້ ຂໍຮັບຄຳຕຳນິຕິຊົມຈາກບັນດາທ່ານ ເພື່ອເປັນແນວທາງໃນການປັບປຸງແກ້ໄຂປຶ້ມການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງສະບັບນີ້ໃຫ້ສົມບູນຍິ່ງໆຂຶ້ນໃນຄັ້ງຕໍ່ໄປ.

ໃນໂອກາດນີ້ ຂໍສະແດງຄວາມຂອບໃຈມາຍັງຊ່ຽວຊານກົດໝາຍລາວ, ຊ່ຽວຊານກົດໝາຍແພ່ງຈາກປະເທດຍີ່ປຸ່ນ, ຊ່ຽວຊານອົງການໄຈກາ ແລະ ປະຊາຊົນ ກໍຄືລັດຖະບານຍີ່ປຸ່ນທີ່ໄດ້ໃຫ້ການຊ່ວຍເຫຼືອອັນມີຄ່າໃຫ້ ແກ່ ສປປ ລາວ ໃນການພັດທະນາຂົງເຂດຍຸຕິທຳທາງດ້ານເຕັກນິກວິຊາການ ແລະ ທຶນຮອນໃນການສ້າງປື້ມການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງນີ້ຈົນສຳເລັດຜົນ.

**ຮອງປະທານສານປະຊາຊົນສູງສຸດ**

**(ຄະນະຊີ້ນຳໂຄງການ)**

ບຸນຂວາງ ທະວິສັກ

# ຄຳນຳ

ປຶ້ມຄູ່ມື ການກຳນົດຂໍ້ເທັດຈິງ ໃນການດຳເນີນຄະດີແພ່ງເຫຼັ້ມນີ້ ມີຄວາມສຳຄັນ ແລະ ຈຳເປັນຫຼາຍ ສຳລັບຜູ້ທີ່ກຳລັງສຶກສາກົດໝາຍ, ວິຊາຊີບກົດໝາຍ, ທະນາຍຄວາມ, ໄອຍະການ, ຜູ້ພິພາກສາ ກໍຄື ນັກວິຊາການກົດໝາຍຂອງ ສປປ ລາວ ເນື່ອງຈາກວ່າຄວາມເຂົ້າໃຈຂອງພາກສ່ວນທີ່ກ່ຽວຂ້ອງຕໍ່ການກຳນົດຂໍ້ເທັດຈິງ ໃນການດຳເນີນຄະດີແພ່ງໄລຍະຜ່ານມາ ເຫັນວ່າ ຍັງບໍ່ທັນມີ ວິທີການທີ່ຊັດເຈນ ແລະ ບໍ່ທັນປັນເອກະພາບກັນເທົ່າທີ່ຄວນ. ສະນັ້ນ, ເພື່ອເຮັດໃຫ້ການກຳນົດຂໍ້ເທັດຈິງມີຄວາມຊັດເຈນ ແລະ ກ້າວໄປຫາຄວາມເປັນເອກະພາບກັນເທື່ອລະກ້າວ. ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ, ອົງການໄອຍະການປະຊາຊົນ, ສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ຈຶ່ງໄດ້ແຕ່ງຕັ້ງຄະນະຮັບຜິດຊອບຈາກພາກສ່ວນຂອງຕົນ ເປັນຄະນະຄົ້ນຄວ້າຮ່ວມກັບຊ່ຽວຊານ ຈາກປະເທດຍີ່ປຸ່ນ ເພື່ອຄົ້ນຄວ້າ ການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງ ເປັນກໍລະນີສຶກສາ ສ້າງວິທີຄິດຢ່າງເປັນລະບົບ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນໃນຂົງເຂດຍຸຕິທຳຂອງ ສປປ ລາວ.

ປຶ້ມຄູ່ມືເຫຼັ້ມນີ້ ປະກອບມີ ສີ່ ກໍລະນີສຶກສາ ຄື 1) ການທວງໃຫ້ຊຳລະເງິນໃນການຊື້ຂາຍ, 2) ການທວງໃຫ້ສົ່ງເງິນທີ່ກູ້ຢືມຄືນ, 3) ການຮ້ອງຂໍໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບ ແລະ 4) ການທວງເອົາການໃຊ້ແທນຄ່າເສຍຫາຍ. ກໍລະນີສຶກສາທີ່ກ່າວມານີ້ ມີຈຸດປະສົງ ເພື່ອນຳໃຊ້ສິດສອນ ແລະ ຝຶກອົບຮົມ ໃນສະຖາບັນການສຶກສາຂອງແຕ່ລະພາກສ່ວນ.

ຄະນະຄົ້ນຄວ້າຮ່ວມກັບຊ່ຽວຊານຍີ່ປຸ່ນ ໄດ້ກຳນົດແຕ່ລະກໍລະນີສຶກສາ ດ້ວຍວິທີການຕັ້ງຄຳຖາມ, ກຳນົດເງື່ອນໄຂທີ່ພາໃຫ້ເກີດສິດທວງ, ກຳນົດປະເດັນຂັດແຍ່ງ ແລະ ກຳນົດຫຼັກຖານເພື່ອພິຈາລະນາປະເດັນຂັດແຍ່ງ. ວິທີການຄົ້ນຄວ້າ ທາງກຸ່ມໄດ້ອ້າງອີງກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ໂດຍສະເພາະປະມວນກົດໝາຍແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຫຼັງຈາກນັ້ນ ກໍໄດ້ນຳເອົາຜົນການຄົ້ນຄວ້າໄປປຶກສາຫາລືນຳ ນັກກົດໝາຍຜູ້ຊົງຄຸນວຸດທິຂອງ ສປປ ລາວ, ກວດແກ້ຈາກຄະນະຊີ້ນຳໂຄງການ ແລະ ຄະນະບໍລິຫານງານໂຄງການ.

ເຖິງແນວໃດກໍຕາມ, ປຶ້ມຄູ່ມືເຫຼັ້ມນີ້ປາສະຈາກບໍ່ໄດ້ຂໍ້ຂາດຕົກບົກພ່ອງ ຫວັງຢ່າງຍິ່ງວ່າ ທ່ານຜູ້ອ່ານ, ນັກຮຽນຮູ້ປັນຍາຊົນ, ນັກຄົ້ນຄວ້າ ແລະ ຜູ້ທີ່ສົນໃຈ ຊ່ວຍຕຳນິຕິຊົມ ແລະ ໃຫ້ຄຳແນະນຳແກ່ຄະນະຄົ້ນຄວ້າ ເພື່ອຈະນຳໄປປັບປຸງປຶ້ມຄູ່ມືເຫຼັ້ມນີ້ ໃຫ້ມີເນື້ອໃນຄົບຖ້ວນ ແລະ ສົມບູນຍິ່ງຂຶ້ນໃນຕໍ່ໜ້າ.

ຂ້າພະເຈົ້າຕາງໜ້າໃຫ້ຄະນະຊີ້ນຳໂຄງການ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງນັກວິຊາການກົດໝາຍລາວ ແລະ ຊ່ຽວຊານກົດໝາຍ ປະເທດຍີ່ປຸ່ນ ທີ່ໄດ້ທຸ້ມເທສະຕິປັນຍາ, ເຫື່ອແຮງ ແລະ ໄດ້ສະຫຼະເວລາເຂົ້າຮ່ວມໃນການຄົ້ນຄວ້າ ເຮັດໃຫ້ປຶ້ມຄູ່ມືເຫຼັ້ມນີ້ໄດ້ຮັບຜົນສຳເລັດດ້ວຍດີ. ປຶ້ມຄູ່ມືເຫຼັ້ມນີ້ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກອົງການໄຈກາ (JICA) ປະເທດຍີ່ປຸ່ນ ໂດຍຜ່ານໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍ ໃນຂົງເຂດຍຸຕິທຳ.

**ຄະນະຊີ້ນຳໂຄງການ**

ສຈ.ປອ ຮຸ່ງເພັດ ຈັນທະວົງ

# ສາລະບານ

**ພາກທີ I ..........1**

**ຄວາມຮູ້ພື້ນຖານກ່ຽວກັບການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງ ..........1**

**1. ຄວາມຮັບຮູ້ທາງກົດໝາຍກ່ຽວກັບສິດ ແລະ ສິດທວງ ..........1**

1.1 ສິດໃນປະມວນກົດໝາຍແພ່ງ ..........1

1.2 ສິດທວງ ..........1

1.3 ການເກີດສິດທວງ ..........2

1.4 ຄວາມຈຳເປັນໃນການກຳນົດສິດທວງ ..........3

**2. ຄວາມຮັບຮູ້ທາງກົດໝາຍກ່ຽວກັບຂໍ້ຂັດແຍ່ງ ແລະ ປະເດັນຂັດແຍ່ງ ..........4**

2.1 ຂໍ້ຂັດແຍ່ງ ..........4

2.2 ປະເດັນຂັດແຍ່ງ ..........4

2.3 ຄວາມກ່ຽວພັນຂອງຂໍ້ຂັດແຍ່ງ, ປະເດັນຂັດແຍ່ງ ແລະ ສິດທວງ ..........4

**ພາກທີ II ..........7**

**ກໍລະນີສຶກສາກ່ຽວກັບການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງ ..........7**

**ການທວງໃຫ້ຊຳລະເງິນໃນການຊື້ຂາຍ ..........8**

1. ກໍລະນີສຶກສາ ແລະ ຄຳຖາມ ..........9

2. ຄຳຕອບ ຕໍ່ຄຳຖາມ 1 ..........9

3. ຄຳຕອບ ຕໍ່ຄຳຖາມ 2 ..........12

4. ຄຳຕອບ ຕໍ່ຄຳຖາມ 3 ..........13

**ການທວງໃຫ້ສົ່ງເງິນທີ່ກູ້ຢືມຄືນ ..........16**

1. ກໍລະນີສຶກສາ ແລະ ຄຳຖາມ ..........17

2. ຄຳຕອບ ຕໍ່ຄຳຖາມ 1 (ການກ່າວອ້າງຂອງ ຂ ຮູບແບບ 1) ..........17

3. ຄຳຕອບ ຕໍ່ຄຳຖາມ 2 (ການກ່າວອ້າງຂອງ ຂ ຮູບແບບ 1) ..........20

4. ຄຳຕອບ ຕໍ່ ຄຳຖາມ 3 (ການກ່າວອ້າງຂອງ ຂ ຮູບແບບ 1) ..........22

5. ຄຳຕອບ ຕໍ່ຄຳຖາມ 1 (ການກ່າວອ້າງຂອງ ຂ ຮູບແບບ 2) ..........24

6. ຄຳຕອບ ຕໍ່ຄຳຖາມ 2 (ການກ່າວອ້າງຂອງ ຂ ຮູບແບບ 2) ..........24

7. ຄຳຕອບ ຕໍ່ຄຳຖາມ 3 (ການກ່າວອ້າງຂອງ ຂ ຮູບແບບ 2) ..........25

8. ຄຳຕອບ ຕໍ່ຄຳຖາມ 1 (ການກ່າວອ້າງຂອງ ຂ ຮູບແບບ 3) ..........26

9. ຄຳຕອບ ຕໍ່ຄຳຖາມ 2 (ການກ່າວອ້າງຂອງ ຂ ຮູບແບບ 3) ..........26

10. ຄຳຕອບ ຕໍ່ຄຳຖາມ 3 (ການກ່າວອ້າງຂອງ ຂ ຮູບແບບ 3) ..........26

**ການຮ້ອງຂໍໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບ ..........27**

1. ກໍລະນີສຶກສາ ແລະ ຄຳຖາມ ..........28

2. ຄຳຕອບ ຕໍ່ຄຳຖາມ 1 ........................................................................................28
3. ຄຳຕອບ ຕໍ່ຄຳຖາມ 2 ........................................................................................33
4. ຄຳຕອບ ຕໍ່ຄຳຖາມ 3 ........................................................................................35
**ການທວງເອົາການໃຊ້ແທນຄ່າເສຍຫາຍ ........................................................................37**
1. ກໍລະນີສຶກສາ ແລະ ຄຳຖາມ ..................................................................................38
2. ຄຳຕອບ ຕໍ່ຄຳຖາມ 1 ........................................................................................39
3. ຄຳຕອບ ຕໍ່ຄຳຖາມ 2 ........................................................................................41
4. ຄຳຕອບ ຕໍ່ຄຳຖາມ 3 ........................................................................................42
5. ຄຳຕອບ ຕໍ່ ຄຳຖາມ 4 ........................................................................................44

# ພາກທີ I
# ຄວາມຮູ້ພື້ນຖານກ່ຽວກັບການກຳນົດຂໍ້ເທັດຈິງໃນການດຳເນີນຄະດີແພ່ງ
## (ບາດກ້າວການຮຽບຮຽງຄຳກ່າວອ້າງ-ປະເດັນຂັດແຍ່ງຂອງຄູ່ຄວາມ)

## 1. ຄວາມຮັບຮູ້ທາງກົດໝາຍກ່ຽວກັບສິດ ແລະ ສິດທວງ

### 1.1 ສິດໃນປະມວນກົດໝາຍແພ່ງ

ປະມວນກົດໝາຍແພ່ງ ແມ່ນກົດໝາຍພື້ນຖານທີ່ຕິດພັນກັບການດຳລົງຊີວິດຂອງຄົນທີ່ສຸດ, ຊຶ່ງປະມວນກົດໝາຍແພ່ງເປັນກົດໝາຍເນື້ອໃນ ທີ່ກຳນົດວ່າສິດໃດຈະຂຶ້ນກັບຜູ້ໃດ ແລະ ເປັນກົດໝາຍທີ່ກຳນົດສິດ ແລະ ພັນທະຂອງຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ, ພ້ອມກັນນັ້ນ ປະມວນກົດໝາຍແພ່ງຍັງເປັນກົດໝາຍທົ່ວໄປ ທີ່ກຳນົດສິດ ແລະ ພັນທະພື້ນຖານໃນສາຍພົວພັນທາງແພ່ງ.

ສິດທີ່ກຳນົດໃນປະມວນກົດໝາຍແພ່ງ ຫຼື ສິດທີ່ປະມວນກົດໝາຍແພ່ງຮັບຮູ້ ປະກອບມີ: ສິດສ່ວນບຸກຄົນ, ສິດໃນກຳມະສິດ ແລະ ສິດອື່ນຕໍ່ຊັບ (ສິດຄອບຄອງ, ທາດສະພາບ, ສິດເໜືອທີ່ດິນ, ສິດຕໍ່ການຄໍ້າປະກັນໂດຍກົດໝາຍ, ສິດຕໍ່ການຈຳນຳ, ສິດຕໍ່ການຈຳນອງ...), ສິດໃນຂໍ້ຜູກພັນ (ເກີດຂຶ້ນບົນພື້ນຖານສັນຍາ, ການລະເມີດ, ການເຮັດວຽກແທນຜູ້ອື່ນໂດຍບໍ່ໄດ້ຮັບມອບໝາຍ, ການໄດ້ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ), ສິດໃນສາຍພົວພັນຄອບຄົວ (ສິດຂອງຜົວ-ເມຍ, ສິດຂອງພໍ່-ແມ່, ສິດຂອງລູກ, ສິດຂອງຜູ້ປົກຄອງເດັກ)[1].

### 1.2 ສິດທວງ

ປະມວນກົດໝາຍແພ່ງ ມາດຕາ 3 ຂໍ້ 13 ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ມາດຕາ 3 ຂໍ້ 33 ໄດ້ໃຫ້ຄຳອະທິບາຍວ່າ "ສິດທວງ ໝາຍເຖິງ ສິດຂອງຝ່າຍໜຶ່ງ ຊຶ່ງຮຽກຮ້ອງໃຫ້ອີກຝ່າຍໜຶ່ງ ປະຕິບັດພັນທະຂອງຕົນ ຕາມສັນຍາ ຫຼື ກົດໝາຍ". ຈະເຫັນໄດ້ວ່າສິດທວງຕາມມາດຕາ 3 ຂໍ້ 13 ນີ້ ໝາຍເຖິງກໍລະນີສິດທວງຕາມຂໍ້ຜູກພັນທີ່ເກີດຂຶ້ນຈາກສັນຍາ ເຊັ່ນວ່າ ສິດທວງຂອງຜູ້ຊື້ ທີ່ມີຕໍ່ຜູ້ຂາຍ ເພື່ອໃຫ້ສົ່ງມອບຊັບທີ່ເປັນເປົ້າໝາຍທີ່ເກີດຂຶ້ນຈາກສັນຍາຊື້-ຂາຍ ຫຼື ສິດທວງໃຫ້ສົ່ງຊັບຄືນເຈົ້າກຳມະສິດ ເພື່ອໃຫ້ປະຕິບັດພັນທະສົ່ງຄືນຕາມທີ່ກົດໝາຍຮັບຮູ້ ກໍລະນີທີ່ຊັບທີ່ເປັນເປົ້າໝາຍຂອງກຳມະສິດດັ່ງກ່າວຫາກຖືກບຸກຄົນອື່ນເອົາໄປ.

ເມື່ອສິດທີ່ປະມວນກົດໝາຍແພ່ງຮັບຮູ້ ຫາກຖືກລະເມີດໂດຍບຸກຄົນອື່ນ ຫຼື ການປະຕິບັດສິດດັ່ງກ່າວໃຫ້ປະກົດເປັນຈິງໂດຍເຈົ້າຂອງສິດເອງ ຫາກເກີດຄວາມຫຍຸ້ງຍາກ. ເມື່ອຈຳເປັນຕ້ອງມີການປົກປ້ອງສິດ ຫຼື ເຮັດໃຫ້ສິດດັ່ງກ່າວປະກົດເປັນຈິງໂດຍຜ່ານກົນໄກການດຳເນີນຄະດີຂອງສານນັ້ນ ເຈົ້າຂອງສິດຕ້ອງສະແດງເຈດຈຳນົງໃຫ້ເຫັນຢ່າງຈະແຈ້ງວ່າ ຕົນເອງຕ້ອງການປົກປ້ອງສິດອັນໃດ ຫຼື ຕ້ອງການໃຫ້ສິດອັນໃດປະກົດເປັນຈິງ.

---

[1] ຮິໂຣຊິ ມັດສືໂອະ, ປຶ້ມທິດສະດີພື້ນຖານກົດໝາຍແພ່ງ, ໜ້າ 36, 37.

ດັ່ງນັ້ນ, ການກ່າວອ້າງທາງກົດໝາຍ ເພື່ອຮຽກຮ້ອງເອົາການປົກປ້ອງ ຫຼື ເພື່ອປະຕິບັດສິດໃຫ້ປະກົດເປັນຈິງ ເມື່ອສິດທີ່ປະມວນກົດໝາຍແພ່ງຮັບຮູ້ຫາກຖືກບຸກຄົນອື່ນລະເມີດ ຫຼື ການປະຕິບັດສິດດັ່ງກ່າວໃຫ້ປະກົດເປັນຈິງຫາກເກີດຄວາມຫຍຸ້ງຍາກນັ້ນ ເອີ້ນວ່າ **"ສິດທວງ".**

ສິດທີ່ເປັນພື້ນຖານທີ່ປະມວນກົດໝາຍແພ່ງຮັບຮູ້ ໂດຍສະເພາະ ສິດສ່ວນບຸກຄົນ, ສິດໃນກຳມະສິດ, ສິດໃນຂໍ້ຜູກພັນ, ສິດໃນສາຍຜົວພັນຄອບຄົວ ເອີ້ນວ່າ ສິດຂັ້ນທີ 1 ສ່ວນສິດທວງໃຫ້ສິ່ງຄືນ ຫຼື ສິດທວງເອົາການໃຊ້ແທນຄ່າເສຍຫາຍ ໃນກໍລະນີທີ່ສິດດັ່ງກ່າວຫາກຖືກລະເມີດ ຫຼື ສິດທວງໃຫ້ສົ່ງມອບ ຫຼື ສິດທວງໃຫ້ປະຕິບັດ ເພື່ອເຮັດໃຫ້ສິດໃນຂໍ້ຜູກພັນ ປະກົດເປັນຈິງນັ້ນ ເພິ່ນເອີ້ນວ່າ ສິດຂັ້ນທີ 2 ໃນນີ້ສິດຂັ້ນທີ 1 ແມ່ນສິດທີ່ເປັນເນື້ອໃນ ຊຶ່ງເຈົ້າຂອງສິດມີຢູ່ແລ້ວ, ສ່ວນສິດຂັ້ນທີ 2 ເປັນສິດທີ່ເປັນເຄື່ອງມືຊ່ວຍເຫຼືອໃນການພິຈາລະນາຄະດີ ເພື່ອປົກປ້ອງ ຫຼື ເຮັດໃຫ້ສິດຂັ້ນທີ 1 ປະກົດເປັນຈິງ[2].

| **ສິດຂັ້ນທີ 1** | **ສິດຂັ້ນທີ 2** |
|---|---|
| - ສິດສ່ວນບຸກຄົນ<br>- ສິດໃນກຳມະສິດ<br>- ສິດໃນຂໍ້ຜູກພັນ<br>- ສິດໃນສາຍຜົວພັນຄອບຄົວ | - ສິດທວງໃຫ້ສິ່ງຄືນ<br>- ສິດທວງໃຫ້ໃຊ້ແທນຄ່າເສຍຫາຍກໍລະນີສິດດັ່ງກ່າວຫາກຖືກລະເມີດ<br>- ສິດທວງໃຫ້ສົ່ງມອບ<br>- ສິດທວງໃຫ້ປະຕິບັດເພື່ອໃຫ້ສິດໃນຂໍ້ຜູກພັນປະກົດຜົນເປັນຈິງ |
| ສິດຂັ້ນທີ 1 ແມ່ນສິດທີ່ເປັນເນື້ອໃນ ຊຶ່ງເຈົ້າຂອງສິດມີຢູ່ ແລະ ເປັນສິດພື້ນຖານທີ່ເປັນບ່ອນອີງໃຫ້ແກ່ການທວງ. | ສິດຂັ້ນທີ 2 ເປັນສິດທີ່ເປັນເຄື່ອງມືຊ່ວຍເຫຼືອໃນການພິຈາລະນາຄະດີ ເພື່ອປົກປ້ອງ ຫຼື ເຮັດໃຫ້ສິດຂັ້ນທີ 1 ປະກົດເປັນຈິງ |

### 1.3 ການເກີດສິດທວງ

ສິດທວງ ຈະເກີດຂຶ້ນ ໃນກໍລະນີຄົບເງື່ອນໄຂຕາມທີ່ກຳນົດໄວ້ໃນກົດໝາຍ, ເມື່ອຄົບເງື່ອນໄຂແລ້ວກໍຈະມີຜົນສະທ້ອນເຮັດໃຫ້ ສິດທວງເກີດຂຶ້ນ. ສ່ວນວ່າຈະຮູ້ໄດ້ແນວໃດວ່າ ເງື່ອນໄຂສິດທວງ ຄົບ ຫຼື ບໍ່ຄົບຕ້ອງຜ່ານຂະບວນການດຳເນີນຄະດີຂອງສານ.

ເງື່ອນໄຂທີ່ພາໃຫ້ເກີດສິດທວງ ແມ່ນສິ່ງທີ່ກຳນົດມາຈາກມາດຕາຂອງກົດໝາຍທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ, ກຳນົດໃນຂອບເຂດທີ່ຈຳເປັນທີ່ສຸດ ແລະ ເປັນສິ່ງທີ່ສຳຄັນທີ່ເປັນແກ່ນແທ້ ທີ່ພາໃຫ້ເກີດມີສິດທວງ, ຖ້າຂາດເງື່ອນໄຂໃດໜຶ່ງແລ້ວ ສິດທວງກໍຈະບໍ່ເກີດຂຶ້ນ.

[2] ຮີໂຣຊິ ມັດສຶໂອະ, ເອກະສານຄົ້ນຄວ້າ "ສິດໃນກົດໝາຍແພ່ງ ແລະ ສິດທວງ".

### 1.4 ຄວາມຈຳເປັນໃນການກຳນົດສິດທວງ

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ມາດຕາ 172 ກຳນົດໃຫ້ເນື້ອໃນຂອງຄຳຮ້ອງຟ້ອງຕ້ອງກຳນົດສິດທວງ, ເງື່ອນໄຂທີ່ພາໃຫ້ເກີດສິດທວງ, ມາດຕາ 180 ການສັງລວມຄຳຮ້ອງຟ້ອງຂອງສານພາຍຫຼັງທີ່ສານຮັບຄຳຮ້ອງຟ້ອງແລ້ວ ຕ້ອງໄດ້ສັງລວມເຫດການ, ສິດທວງ, ປະເດັນຮ້ອງຟ້ອງ..., ມາດຕາ 196 ການຄົ້ນຄວ້າຄະດີຂອງສານ ພາຍຫຼັງໄດ້ຂຶ້ນຟ້ອງເປັນຄະດີແລ້ວ ຜູ້ພິພາກສາທຳການຄົ້ນຄວ້າໂດຍສຸມໃສ່ປະເດັນ: ກຳນົດເຫດການຂອງຄະດີ, ກຳນົດສິດທວງ ແລະ ເງື່ອນໄຂທີ່ພາໃຫ້ເກີດສິດທວງ, ກຳນົດປະເດັນຂັດແຍ່ງ ແລະ ກຳນົດຂໍ້ມູນ ຫຼັກຖານ ແລະ ບຸກຄົນທີສາມ ທີ່ກ່ຽວຂ້ອງກັບຄະດີ, ມາດຕາ 201 ຜູ້ພິພາກສາ ຕ້ອງຮຽກຄູ່ຄວາມເຂົ້າມາສານ ເພື່ອໃຫ້ຢັ້ງຢືນເຫດການ, ສິດທວງ, ເງື່ອນໄຂທີ່ພາໃຫ້ເກີດສິດທວງ, ປະເດັນຂັດແຍ່ງ, ສະເໜີບັນຊີຂໍ້ມູນ ຫຼັກຖານທັງໝົດທີ່ກ່ຽວຂ້ອງກັບຄະດີ ແລະ ມາດຕາ 262 ວັກ 4 ພາກເນື້ອຄະດີ ຕ້ອງຂຽນໂດຍສັງເຂບ ເນື້ອໃນຄຳຮ້ອງຟ້ອງຂອງໂຈດ ແລະ ຄຳແກ້ຟ້ອງ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍ ລວມທັງຂອງບຸກຄົນທີສາມ ຊຶ່ງກວມເອົາ ສິດທວງ, ເງື່ອນໄຂທີ່ພາໃຫ້ເກີດສິດທວງ. ຈະເຫັນໄດ້ວ່າ ສິດທວງ ຈະກ່ຽວຂ້ອງທຸກຂັ້ນຕອນຂອງການດຳເນີນຄະດີແພ່ງນັບຕັ້ງແຕ່ຄຳຮອງຟ້ອງ, ການຄົ້ນຄວ້າຄະດີຂອງສານຈົນເຖິງຂັ້ນຕອນການພິຈະລານາຕັດສິນຂອງສານ.

| | **ຂັ້ນຕອນການຍື່ນຄຳຮ້ອງຟ້ອງ** | **ຂັ້ນຕອນການປະກອບສຳນວນຄະດີ, ການຊອກຂໍ້ມູນ** | **ຂັ້ນຕອນການໄຕ່ສວນ** | **ຂັ້ນຕອນຕັດສິນ** |
|---|---|---|---|---|
| ສິດທວງ | ການລະບຸໃສ່ໃນຄຳຮ້ອງຟ້ອງ (ມ. 172) | ການກຳນົດສິດທວງ, ເງື່ອນໄຂ, ປະເດັນຂັດແຍ່ງ ແລະ ຫຼັກຖານ (ມ.196, ມ. 201) | → | ການລະບຸໃນຄຳຕັດສິນ (ມ. 262) |
| ມາດຕາກົດໝາຍທີ່ເປັນບ່ອນອີງໃຫ້ແກ່ສິດທວງ | | ການສ້າງແຜນການຄົ້ນຄວ້າຄະດີ (ມ. 202) | → | |
| ເງື່ອນໄຂທີ່ພາໃຫ້ເກີດສິດທວງ | ການຮຽບຮຽງບັນຫາສຳຄັນໃນຄຳຮ້ອງຟ້ອງ (ມ. 180) | ຜົນການຄົ້ນຄວ້າ (ມ. 207) | → | |
| ຂໍ້ເທັດຈິງລະອຽດທີ່ເປັນພື້ນຖານໃຫ້ເງື່ອນໄຂການເກີດສິດທວງ | | ຖ້າບໍ່ມີການໂຕ້ແຍ່ງລະຫວ່າງຄູ່ຄວາມ ກໍບໍ່ຈຳເປັນຊອກຫຼັກຖານ (ມ. 103, ມ. 194) | ຂໍ້ເທັດຈິງທີ່ບໍ່ຈຳເປັນຊອກຫຼັກຖານ ກໍຮັບຮອງເອົາຕາມນັ້ນ (ມ. 103, ມ. 194) → | |

| | | | | |
|---|---|---|---|---|
| ປະເດັນຂັດແຍ່ງ | | ຂໍ້ເທັດຈິງທີ່ຄູ່ຄວາມໂຕ້ແຍ່ງກັນ ແມ່ນ ເປັນປະເດັນຂັດແຍ່ງ (ມ. 3 ຂໍ້ 28, ມ. 194) | ການພິສູດ-ການຮັບຮອງກ່ຽວກັບປະເດັນຂັດແຍ່ງ<br>ການໄຕ່ສວນພະຍານຕາມປະເດັນຂັດແຍ່ງ (ມ. 221, ມ. 246), ຫຼັກຖານທາງວັດຖຸ (ມ. 247), ຫຼັກຖານທາງເອກະສານ (ມ. 248) ການໂຕ້ຖຽງຂອງຄູ່ຄວາມ (ມ. 251) | |

**2. ຄວາມຮັບຮູ້ທາງກົດໝາຍກ່ຽວກັບຂໍ້ຂັດແຍ່ງ ແລະ ປະເດັນຂັດແຍ່ງ**

**2.1 ຂໍ້ຂັດແຍ່ງ**

**ຂໍ້ຂັດແຍ່ງ** ໝາຍເຖິງ ຄວາມບໍ່ຖືກຕ້ອງປອງດອງກັນ, ຄວາມບໍ່ເຂົ້າໃຈກັນ, ບໍ່ສາມາດ ຕົກລົງ ຫຼື ບໍ່ລົງລອຍກັນ ທີ່ເກີດຂຶ້ນລະຫວ່າງ ບຸກຄົນ ກັບ ບຸກຄົນ, ບຸກຄົນ ກັບ ການຈັດຕັ້ງ ກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ, ແຮງງານ, ສິ່ງແວດລ້ອມ, ຂໍ້ຂັດແຍ່ງອື່ນທີ່ກຳນົດໄວ້ໃນກົດໝາຍ...[3]

**2.2 ປະເດັນຂັດແຍ່ງ**

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ມາດຕາ 3 ຂໍ້ 28 **ປະເດັນຂັດແຍ່ງ** ໝາຍເຖິງ ບັນຫາທີ່ຄູ່ຄວາມ ບໍ່ເປັນເອກະພາບກັນ ກ່ຽວກັບຂໍ້ເທັດຈິງ ທີ່ພາໃຫ້ເກີດສິດທວງ ທີ່ສານຕ້ອງໄດ້ຊອກຫາຂໍ້ມູນ ຫຼັກຖານ ມາພິສູດ;

**2.3 ຄວາມກ່ຽວພັນຂອງຂໍ້ຂັດແຍ່ງ, ປະເດັນຂັດແຍ່ງ ແລະ ສິດທວງ**

ດັ່ງທີ່ໄດ້ກ່າວມາເບື້ອງຕົ້ນ ສິດທວງ ແມ່ນ ສິດທີ່ກຳນົດໃນກົດໝາຍ ຊຶ່ງເປັນບ່ອນອີງໃນການທວງ ແລະ ເພື່ອແກ້ໄຂຂໍ້ຂັດແຍ່ງທາງແພ່ງນັ້ນ ຈຳເປັນຕ້ອງໄດ້ວິເຄາະວ່າ ສິດທວງແມ່ນອັນໃດ, ເງື່ອນໄຂທີ່ພາໃຫ້ເກີດສິດທວງດັ່ງກ່າວມີຫຍັງແດ່, ການຮຽບຮຽງບັນຫາໃນຂໍ້ຂັດແຍ່ງໂດຍຄຳນຶງເຖິງສິດທວງ ແລະ ເງື່ອນໄຂທີ່ພາໃຫ້ເກີດສິດທວງດັ່ງກ່າວ ຈະເຮັດໃຫ້ເຮົາກຳປະເດັນຂັດແຍ່ງໄດ້ຢ່າງຖືກຕ້ອງ ຊຶ່ງເປັນແກ່ນແທ້ຂອງບັນຫາໃນຂໍ້ຂັດແຍ່ງ ທັງເຮັດໃຫ້ການດຳເນີນຄະດີຂອງສານ ສາມາດແກ້ໄຂຂໍ້ຂັດແຍ່ງໄດ້ຢ່າງວ່ອງໄວ, ແທດເໝາະ ແລະ ມີປະສິດທິພາບ.

ການຮຽບຮຽງບັນຫາໃນຂໍ້ຂັດແຍ່ງໂດຍຄຳນຶງເຖິງສິດທວງ ແລະ ເງື່ອນໄຂທີ່ພາໃຫ້ເກີດສິດທວງ ກ່ອນອື່ນໝົດຕ້ອງຮຽບຮຽງເບິ່ງວ່າ ຈາກການກ່າວອ້າງຂອງຄູ່ຄວາມໃນຄະດີນັ້ນ, ສິດທວງ, ເງື່ອນໄຂທີ່ພາໃຫ້

[3] ດຳລັດວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ 2021 ມາດຕາ 3 ວັກ 1 ຂໍ້ 1

ເກີດສິດທວງ ມີອັນໃດແດ່. ຖ້າເງື່ອນໄຂທີ່ພາໃຫ້ເກີດສິດທວງ ເງື່ອນໄຂໃດເງື່ອນໄຂໜຶ່ງຂາດໄປ ສິດທວງກໍຈະບໍ່ເກີດຂຶ້ນ[4].

**<u>ຕົວຢ່າງ: 1 ກໍລະນີບໍ່ຄົບເງື່ອນໄຂ</u>**




**<u>ຕົວຢ່າງ: 2 ກໍລະນີຄົບເງື່ອນໄຂ</u>**




---

[4] ຮິກຸຈິ ຣຸຍ, ເອກະສານການບັນຍາຍ "ວິທີຮຽນຮຽງຄະດີແພ່ງ".

# ຄວາມສຳຄັນຂອງການຄົ້ນຄວ້າຄະດີ

ປະມວນກົດໝາຍແພ່ງ

**ຕົວຢ່າງ:**

ການທວງໃຫ້ສົ່ງເງິນທີ່ກູ້ຢືມຄືນ

= ມາດຕາ 430 **ສັນຍາກູ້ຢືມ**

① ໄດ້ມີການຕົກລົງກູ້ຢືມເງິນ

② ໄດ້ມອບເງິນໃຫ້

③ ບໍ່ປະຕິບັດສັນຍາ

(④ ບາງທັດສະນະກໍໃຫ້ຖືເອົາສັນຍາເປັນລາຍລັກອັກສອນເປັນເງື່ອນໄຂ)

★ ກຳນົດຈາກມາດຕາ

★ ຕີຄວາມໝາຍ ຫຼື ອະທິບາຍ

ກຳນົດຂໍ້ເທັດຈິງແຕ່ ① ຫາ ③ ຫຼື ④

★ ກຳນົດຈາກຫຼັກຖານ

**ສິດທວງ**

↓

**ເງື່ອນໄຂ**

↓

**ຂໍ້ເທັດຈິງ**

↓

ສະຫຼຸບ (ຄຳຕັດສິນ, ຄວາມຄິດເຫັນຈາກນັກກົດໝາຍ)

## ແຕ່ລະກໍລະນີສຶກສາ ມີວິທີການກຳນົດຕາມຂັ້ນຕອນ ດັ່ງນີ້:

**ກໍລະນີສຶກ**

↓

**ຄຳຖາມ**

↓

**ກຳນົດເງື່ອນໄຂທີ່ພາໃຫ້**

ກຳນົດຈາກມາດຕາທີ່ກ່ຽວຂ້ອງກັບ

↓

**ກຳນົດປະເດັນຂັດແຍ່ງ**

- ມາດຕາ 194 ວັກ 1, ວັກ 2

↓

**ກຳນົດຫຼັກຖານເພື່ອພິຈາລະນາ**

- 95
- 96,
- 97 ວັກ 3, 4
- 101

# ພາກທີ II
# ກໍລະນີສຶກສາກ່ຽວກັບການກໍານົດຂໍ້ເທັດຈິງໃນການດໍາເນີນຄະດີແພ່ງ
# (ຂັ້ນຕອນການຮຽບຮຽງຄໍາກ່າວອ້າງຂອງຄູ່ຄວາມ)

**ກໍລະນີສຶກສາ I**

# ການທວງໃຫ້ຊໍາລະເງິນໃນການຊື້ຂາຍ

# ການທວງໃຫ້ຊຳລະເງິນໃນການຊື້ຂາຍ

## 1. ກໍລະນີສຶກສາ ແລະ ຄຳຖາມ

**ການກ່າວອ້າງຂອງ ກ**

ຂ້ອຍເຄີຍມີກ້ອງຖ່າຍຮູບດິຈິຕອນຂອງປະເທດຍີ່ປຸ່ນ, ແຕ່ໃນວັນທີ 1 ທັນວາ 2020 ໄດ້ຂາຍກ້ອງໃຫ້ກັບໝູ່ກໍຄື **ຂ** ລາວເວົ້າວ່າ ມັກກ້ອງໜ່ວຍນີ້ຕັ້ງແຕ່ເຫັນຄັ້ງທຳອິດ ແລະ ໃນມື້ນັ້ນ ກໍໄດ້ມອບກ້ອງຖ່າຍຮູບດັ່ງກ່າວໃຫ້ລາວ. ລາຄາຊື້ຂາຍແມ່ນ 30,000,000 ກີບ ຊຶ່ງ **ຂ** ໄດ້ສັນຍາວ່າ ຈະຈ່າຍເງິນໃຫ້ໃນວັນທີ 31 ທັນວາ 2020 ເນື່ອງຈາກວ່າ ລາວຈະໄດ້ຮັບເງິນໂບນັດຈາກບໍລິສັດໃນທ້າຍເດືອນ.

ເມື່ອຮອດກຳນົດຈ່າຍເງິນແລ້ວ, ຂ້ອຍໄດ້ທວງໃຫ້ **ຂ** ຈ່າຍເງິນ, ແຕ່ **ຂ** ກໍຍັງບໍ່ຈ່າຍເງິນໃຫ້ຂ້ອຍເທື່ອ.

ໃນວັນທີ 15 ມັງກອນ 2021, ຂ້ອຍໄດ້ສະເໜີ ຂໍໄກ່ເກ່ຍ ເພື່ອທວງໃຫ້ຈ່າຍເງິນຄ່າກ້ອງຖ່າຍຮູບ ແຕ່ **ຂ** ກໍຍັງປະຕິເສດ.

ດັ່ງນັ້ນ, ຂ້ອຍຈຶ່ງຮ້ອງຟ້ອງຕໍ່ສານ ໃນວັນທີ 14 ກຸມພາ 2021 ເພື່ອທວງໃຫ້ **ຂ** ຈ່າຍເງິນຄ່າກ້ອງຖ່າຍຮູບຈຳນວນ 30,000,000 ກີບ ໃຫ້ແກ່ຂ້ອຍ.

**ການກ່າວອ້າງຂອງ ຂ**

ກ້ອງຖ່າຍຮູບນີ້ ຂ້ອຍບໍ່ໄດ້ເວົ້າວ່າ ຢາກໄດ້, ພຽງແຕ່ຄິດຢາກຊ່ວຍເຫຼືອ **ກ** ທີ່ມີບັນຫາທາງດ້ານການເງິນ ຢູ່ໃນຕອນນັ້ນ, ແຕ່ໃນໃຈ ຂ້ອຍເອງກໍຢາກໄດ້ກ້ອງຖ່າຍຮູບນີ້ຢູ່, ແຕ່ **ກ** ເວົ້າລາຄາ 30,000,000 ກີບ ຊຶ່ງຂ້ອຍຄິດວ່າມັນແພງເກີນໄປ ຂ້ອຍຈຶ່ງບໍ່ຊື້.

ແຕ່ມາຮອດປັດຈຸບັນ **ກ** ກໍຍັງມາເວົ້າວ່າ ໃຫ້ຂ້ອຍຈ່າຍເງິນຄ່າກ້ອງໃຫ້ລາວ ຂ້ອຍກໍບໍ່ຮູ້ຊິເຮັດແນວໃດ.

**ຄຳຖາມ 1** ເງື່ອນໄຂທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊຳລະເງິນໃນການຊື້ຂາຍ ມີຫຍັງແດ່ ?

**ຄຳຖາມ 2** ປະເດັນຂັດແຍ່ງໃນກໍລະນີສຶກສານີ້ ແມ່ນຫຍັງ ?

**ຄຳຖາມ 3** ເພື່ອພິຈາລະນາ ປະເດັນຂັດແຍ່ງໃນກໍລະນີສຶກສານີ້ ຕ້ອງມີຫຼັກຖານຫຍັງແດ່ ?

## 2. ຄຳຕອບ ຕໍ່ຄຳຖາມ 1

### 2.1 ການເກີດສິດທວງຂອງ ກ ຕໍ່ ຂ ເພື່ອໃຫ້ຊຳລະເງິນ ໃນການຊື້ຂາຍ ຕ້ອງມີເງື່ອນໄຂ ດັ່ງນີ້:

1) ການຕົກລົງຊື້ຂາຍ ລະຫວ່າງ **ກ** ແລະ **ຂ**;
2) **ກ** ເປັນເຈົ້າກຳມະສິດຕໍ່ຊັບສິ່ງຂອງ;
3) **ຂ** ບໍ່ປະຕິບັດສັນຍາ.

### 2.2 ການວິເຄາະຄຳຕອບ

#### 2.2.1 ກ່ຽວກັບເງື່ອນໄຂ 1

ພວກເຮົາສາມາດເວົ້າໄດ້ວ່າ "ການຕົກລົງຊື້ຂາຍ ລະຫວ່າງ **ກ** ແລະ **ຂ**" ເປັນເງື່ອນໄຂໜຶ່ງທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊຳລະເງິນໃນການຊື້ຂາຍ.

ເປັນຫຍັງເງື່ອນໄຂ 1 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ສັນຍາຊື້ຂາຍນັ້ນຈະມີການຕົກລົງ. ໃນການຕົກລົງນັ້ນ ຈະປະກອບດ້ວຍ ປະເພດຂອງ ຊັບ, ລາຄາ, ກຳນົດເວລາຈ່າຍເງິນ ເປັນເນື້ອໃນພື້ນຖານສຳຄັນຂອງການຕົກລົງຊື້ຂາຍ.

ມາດຕາ 406 ວັກ 1 ຂອງປະມວນກົດໝາຍແພ່ງ ໄດ້ກຳນົດໄວ້ວ່າ "ສັນຍາຊື້ຂາຍ ແມ່ນການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ຂາຍມີພັນທະມອບຊັບສິ່ງຂອງ ໃຫ້ເປັນກຳມະສິດຂອງຜູ້ຊື້ ແລະ ຜູ້ຊື້ຕ້ອງຮັບເອົາຊັບສິ່ງຂອງ ແລະ ມີພັນທະຈ່າຍເງິນຕາມລາຄາທີ່ໄດ້ຕົກລົງກັນ". ຊັບ ແລະ ລາຄາ ແມ່ນເນື້ອໃນສຳຄັນຂອງສັນຍາຊື້ຂາຍ ຕົວຢ່າງ ເຮົາຊື້ປີ້ງໄກ່ຢູ່ຕະຫຼາດໃນລາຄາ 30,000 ກີບ, ເມື່ອມີການຕົກລົງກ່ຽວກັບ ຊັບ ແລະ ລາຄາ ກໍສາມາດຮັບຮູ້ວ່າ ໄດ້ມີການບັນລຸຂໍ້ຕົກລົງກ່ຽວກັບສັນຍາຊື້ຂາຍແລ້ວ. ແຕ່ເຖິງຢ່າງໃດກໍຕາມ, ໃນຫຼາຍກໍລະນີຂອງສັນຍາຊື້ຂາຍ ຍັງຕ້ອງໄດ້ມີການຕົກລົງກ່ຽວກັບ ກຳນົດເວລາໃນການຊຳລະເງິນ ຫຼື ການສົ່ງມອບ. ໃນກໍລະນີນີ້ ກຳນົດເວລາ ແມ່ນລວມຢູ່ໃນເນື້ອໃນສຳຄັນຂອງສັນຍາຊື້ຂາຍ. **ຕົວຢ່າງ ກ** ໄດ້ຊື້ຄອມພິວເຕີໜຶ່ງໜ່ວຍ ກັບ **ຂ** ໃນມູນຄ່າ 500 ໂດລາ ໂດຍໄດ້ຕົກລົງກັນວ່າ ຈະຈ່າຍກ່ອນ 250 ໂດລາ ໃນມື້ຊື້ ແລະ ຈະຈ່າຍສ່ວນທີ່ເຫຼືອອີກ 250 ໂດລາ ໃນມື້ສົ່ງມອບເຄື່ອງ.

### 2.2.2 ກ່ຽວກັບ ເງື່ອນໄຂ 2

ພວກເຮົາສາມາດເວົ້າໄດ້ວ່າ "**ກ** ເປັນເຈົ້າກຳມະສິດຕໍ່ຊັບສິ່ງຂອງ" ເປັນເງື່ອນໄຂໜຶ່ງ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊຳລະເງິນໃນການຊື້ຂາຍ, ໂດຍສະເພາະໃນກໍລະນີນີ້ **ກ** ຕ້ອງເປັນເຈົ້າຂອງກ້ອງຖ່າຍຮູບດິຈິຕອນ.

ເປັນຫຍັງເງື່ອນໄຂ 2 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າເງື່ອນໄຂ 2 ໄດ້ກຳນົດໄວ້ໃນມາດຕາ 406 ວັກ 2 ຂອງປະມວນກົດໝາຍແພ່ງວ່າ "ຜູ້ຂາຍ ຈະຂາຍຊັບສິ່ງຂອງອັນໃດກໍໄດ້ ທີ່ເປັນກຳມະສິດຂອງຕົນ" ຖ້າຫາກຂາຍຊັບສິ່ງຂອງທີ່ບໍ່ເປັນກຳມະສິດຂອງຕົນ ຈະເຮັດໃຫ້ສັນຍານັ້ນເປັນໂມຄະ.

ຕໍ່ກັບບັນຫາດັ່ງກ່າວນີ້ ມີບາງທັດສະນະໄດ້ກ່າວວ່າ "ສຳລັບວັກ 2 ຂອງມາດຕານີ້, ກໍລະນີທີ່ໄດ້ເຮັດສັນຍາຊື້-ຂາຍ ຊັບສິ່ງຂອງທີ່ ຍັງເປັນກຳມະສິດຂອງບຸກຄົນອື່ນ. ຈາກນັ້ນ, ຈຶ່ງໂອນຊັບນັ້ນມາເປັນກຳມະສິດ ຂອງຜູ້ຂາຍກ່ອນ ແລ້ວຈຶ່ງມອບໃຫ້ຜູ້ຊື້ກໍໜ້າຈະເປັນໄປໄດ້"[5].

### 2.2.3 ກ່ຽວກັບ ເງື່ອນໄຂ 3

ພວກເຮົາສາມາດເວົ້າໄດ້ວ່າ "**ຂ** ບໍ່ປະຕິບັດສັນຍາ" ເປັນເງື່ອນໄຂໜຶ່ງ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊຳລະເງິນໃນການຊື້ຂາຍ, ໂດຍສະເພາະ ໃນກໍລະນີສຶກສານີ້ ເປັນເງື່ອນໄຂຈຳເປັນ ເມື່ອ **ຂ** ບໍ່ໄດ້ຊຳລະເງິນ ພາຍຫຼັງວັນທີ 31 ທັນວາ 2020.

ເປັນຫຍັງ ເງື່ອນໄຂ 3 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ເງື່ອນໄຂ 3 ໄດ້ກຳນົດໄວ້ໃນມາດຕາ 392 ແລະ 393 ຂອງປະມວນກົດໝາຍແພ່ງ ຊຶ່ງມີລາຍລະອຽດດັ່ງນີ້:

---

[5] ປຶ້ມອະທິບາຍປະມວນກົດໝາຍແພ່ງ, ໜ້າ 368.

ປະມວນກົດໝາຍແພ່ງ ໄດ້ກຳນົດ ສິດ ແລະ ສິດທວງ ແຍກກັນຕ່າງຫາກ. ອີງຕາມມາດຕາ 364 ຂອງປະມວນກົດໝາຍແພ່ງ ສິດເກີດຂຶ້ນເມື່ອເຮັດສັນຍາ ແລະ ອີງຕາມມາດຕາ 392 ສິດທວງ ຈະເກີດຂຶ້ນ ເມື່ອຝ່າຍກົງກັນຂ້າມຫາກບໍ່ປະຕິບັດສັນຍາ.

ນັກວິຊາການກົດໝາຍຈຳນວນໜຶ່ງ ມີແນວຄວາມຄິດວ່າ ເງື່ອນໄຂ 3 ນັ້ນມີຄວາມສຳຄັນ ເອີ້ນວ່າ "ທັດສະນະ A".

ໃນທາງກັບກັນ ມີນັກວິຊາການກົດໝາຍອີກຈຳນວນໜຶ່ງ ມີແນວຄວາມຄິດທີ່ວ່າ ເງື່ອນໄຂ 3 ບໍ່ມີຄວາມສຳຄັນ ມີພຽງເງື່ອນໄຂ 1 ແລະ 2 ທີ່ມີຄວາມສຳຄັນ ພໍຈະເປັນເງື່ອນໄຂພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊຳລະເງິນໃນການຊື້ຂາຍ ເອີ້ນວ່າ " ທັດສະນະ B". ອີງຕາມທັດສະນະ B ແລ້ວ ສັນຍາ ແມ່ນມີ ອຳນາດທີ່ພາໃຫ້ເກີດສິດທວງ ຕາມມາດຕາ 375 ຂອງປະມວນກົດໝາຍແພ່ງ ແລະ ບໍ່ແມ່ນພຽງແຕ່ ສິດ ແຕ່ຍັງລວມເຖິງ ສິດທວງທີ່ຈະເກີດຂຶ້ນໄດ້ ເມື່ອມີການເຮັດສັນຍາຕາມມາດຕາ 364 ຂອງປະມວນກົດໝາຍແພ່ງ. ທັດສະນະ B ໄດ້ເວົ້າວ່າ ມາດຕາ 392 ຂອງປະມວນກົດໝາຍແພ່ງ ກຳນົດ "ສິດທວງ" ໃນເວລາຮ້ອງຟ້ອງ ເມື່ອອີກຝ່າຍໜຶ່ງຫາກບໍ່ປະຕິບັດສັນຍາ.

## 2.3 ບັນຫາອື່ນທີ່ຄວນພິຈາລະນາ

### 2.3.1 ຕໍ່ກັບ ການມອບຊັບສິ່ງຂອງທີ່ເປັນເປົ້າໝາຍ

ພວກເຮົາສາມາດເວົ້າໄດ້ວ່າ "ການມອບຊັບສິ່ງຂອງທີ່ເປັນເປົ້າໝາຍຂອງການຊື້ຂາຍ" ບໍ່ແມ່ນເງື່ອນໄຂ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊຳລະເງິນໃນການຊື້ຂາຍ,ໂດຍສະເພາະໃນກໍລະນີສຶກສານີ້ ສິດທວງ ເພື່ອຮຽກຮ້ອງໃຫ້ຊຳລະເງິນນັ້ນເກີດຂຶ້ນ ໂດຍທີ່ຍັງບໍ່ທັນໄດ້ມີການສົ່ງມອບກ້ອງຖ່າຍຮູບດິຈິຕອນ. ແຕ່ເຖິງຢ່າງໃດກໍຕາມ ຖ້າຫາກ **ກ** ຮ້ອງຟ້ອງ **ຂ** ກ່ອນທີ່ **ກ** ຈະສົ່ງມອບກ້ອງຖ່າຍຮູບ, **ຂ** ສາມາດໂຕ້ແຍ່ງໄດ້ວ່າ "ຂ້ອຍຍັງບໍ່ທັນໄດ້ຮັບກ້ອງຖ່າຍຮູບເທື່ອ". ດ້ວຍເຫດນີ້ ຈຶ່ງມີຄວາມເປັນໄປໄດ້ ທີ່ສານຈະພິຈາລະນາໃຫ້ **ກ** ສົ່ງມອບກ້ອງຖ່າຍຮູບໃຫ້ **ຂ** ແລະ **ຂ** ກໍຕ້ອງຈ່າຍເງິນໃຫ້ **ກ**. ການທີ່ສານຕັດສິນໃຫ້ມີການສົ່ງມອບກ້ອງຖ່າຍຮູບ ແລະ ການຊຳລະເງິນນັ້ນ ສານໄດ້ພິຈາລະນາໃຫ້ຄວາມຍຸຕິທຳແກ່ທັງສອງຝ່າຍແລ້ວ.

ເປັນຫຍັງ ການມອບຊັບສິ່ງຂອງທີ່ເປັນເປົ້າໝາຍ ຈຶ່ງບໍ່ສຳຄັນ ?

ຍ້ອນວ່າ ການມອບຊັບສິ່ງຂອງ ທີ່ເປັນເປົ້າໝາຍນັ້ນ ບໍ່ໄດ້ກ່ຽວຂ້ອງກັບສິດທວງ ເຫດຜົນຍ້ອນວ່າ ມາດຕາ 406 ວັກ 5 ຂອງປະມວນກົດໝາຍແພ່ງ ໄດ້ກຳນົດ "ຜູ້ຊື້ ເປັນເຈົ້າກຳມະສິດໃນຊັບສິ່ງຂອງທີ່ຕົນໄດ້ຊື້ນັ້ນ ນັບແຕ່ເວລາຜູ້ຊື້ ແລະ ຜູ້ຂາຍໄດ້ມອບເງິນ ແລະ ຊັບສິ່ງຂອງໃຫ້ແກ່ກັນ". ໃນມາດຕານີ້ ໄດ້ກຳນົດກ່ຽວກັບຜູ້ຊື້ເປັນເຈົ້າກຳມະສິດໃນຊັບສິ່ງຂອງ ບໍ່ໄດ້ກຳນົດ ເງື່ອນໄຂທີ່ພາໃຫ້ເກີດສິດທວງ.

ອີກເຫດຜົນໜຶ່ງ ຖ້າຖືເອົາການມອບຊັບສິ່ງຂອງທີ່ເປັນເປົ້າໝາຍມາເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງແລ້ວ ໃນກໍລະນີນີ້ ທຸກຄັ້ງທີ່ມີການຊື້ຂາຍ ເຈົ້າຂອງຊັບສິ່ງຂອງ ຕ້ອງໄດ້ມອບຊັບສິ່ງຂອງໃຫ້ຜູ້ຊື້ກ່ອນ ຈຶ່ງສາມາດທວງເອົາເງິນຄ່າຊັບສິ່ງຂອງໄດ້, ກໍລະນີດັ່ງກ່າວຈະບໍ່ຍຸຕິທຳຕໍ່ເຈົ້າຂອງຊັບສິ່ງຂອງ.

#### 2.3.2 ຕໍ່ກັບສັນຍາ ທີ່ເປັນລາຍລັກອັກສອນ

ພວກເຮົາສາມາດເວົ້າໄດ້ວ່າ ສັນຍາທີ່ເປັນລາຍລັກອັກສອນ ບໍ່ແມ່ນເງື່ອນໄຂ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊໍາລະເງິນໃນການຊື້ຂາຍ ໂດຍສະເພາະສັນຍາຊື້ຂາຍ ລະຫວ່າງ **ກ** ແລະ **ຂ** ບໍ່ໄດ້ເຮັດເປັນລາຍລັກອັກສອນ, ເຖິງຈະເຮັດທາງປາກເປົ່າກໍຕາມ ຖືວ່າສັນຍາຊື້ຂາຍມີຜົນໃນທາງກົດໝາຍ.

ເປັນຫຍັງ ການເຮັດສັນຍາຊື້ຂາຍເປັນລາຍລັກອັກສອນ ຈຶ່ງບໍ່ມີຄວາມຈໍາເປັນ ? ຍ້ອນວ່າມາດຕາ 406 ຂອງປະມວນກົດໝາຍແພ່ງ ບໍ່ໄດ້ກໍານົດໄວ້ວ່າ ສັນຍາຊື້ຂາຍຕ້ອງເຮັດເປັນລາຍລັກອັກສອນ. ດັ່ງນັ້ນ ສັນຍາຊື້ຂາຍ ຈຶ່ງເຮັດທາງປາກເປົ່າກໍໄດ້.

#### 2.3.3 ຕໍ່ກັບມາດຕາ 370 ຂອງປະມວນກົດໝາຍແພ່ງ

ພວກເຮົາສາມາດເວົ້າໄດ້ວ່າ ນອກຈາກ ຊັບ, ລາຄາ ແລະ ກໍານົດເວລາຈ່າຍເງິນ ຊຶ່ງໄດ້ກໍານົດໄວ້ໃນມາດຕາ 370 ນັ້ນແລ້ວ ຈະບໍ່ເປັນເງື່ອນໄຂ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ຊໍາລະເງິນໃນການຊື້ຂາຍ. ໂດຍສະເພາະສັນຍາຊື້ຂາຍ ລະຫວ່າງ **ກ** ແລະ **ຂ** ຈະມີຜົນໃຊ້ໄດ້ເຖິງແມ່ນວ່າຈະບໍ່ໄດ້ຕົກລົງກ່ຽວກັບ ສະຖານທີ່ເຮັດສັນຍາ, ຊື່, ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາ, ວິທີການຊໍາລະເງິນ, ຂອບເຂດຂອງການຈັດສົ່ງ, ປະລິມານ ແລະ ຄຸນນະພາບ, ສະຖານທີ່ປະຕິບັດສັນຍາ ແລະ ພັນທະໃນການແຈ້ງຜົນຈາກການລະເມີດສັນຍາ, ອີງການແກ້ໄຂຂໍ້ຂັດແຍ່ງ, ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກໍານົດກໍຕາມ.

ເປັນຫຍັງເນື້ອເຫຼົ່ານັ້ນຈຶ່ງບໍ່ຈໍາເປັນ ? ຍ້ອນວ່າ ບໍ່ແມ່ນປັດໄຈພື້ນຖານຂອງສັນຍາຊື້ຂາຍ. ຕົວຢ່າງ ເມື່ອບຸກຄົນໃດໜຶ່ງຊື້ປີ້ງໄກ່ລາຄາ 30,000 ກີບ ໃນຕະຫຼາດ, ສັນຍາດັ່ງກ່າວກໍຈະມີຜົນໃຊ້ໄດ້ເຖິງແມ່ນວ່າຈະບໍ່ຮູ້ຊື່ຜູ້ຂາຍ ແລະ ຜູ້ຊື້ ລວມທັງບ່ອນຢູ່ຂອງຄູ່ສັນຍາ, ວັນທີເຮັດສັນຍາ ແລະ ເນື້ອໃນອື່ນກໍຕາມ. ແຕ່ເພື່ອປ້ອງກັນບໍ່ໃຫ້ມີຂໍ້ຂັດແຍ່ງເກີດຂຶ້ນ ໃນອະນາຄົດ ຄູ່ສັນຍາກໍຄວນກໍານົດເນື້ອໃນຂອງສັນຍາໃຫ້ລະອຽດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 370 ຂອງປະມວນກົດໝາຍແພ່ງ.

## 3. ຄໍາຕອບ ຕໍ່ຄໍາຖາມ 2

### 3.1 ປະເດັນຂັດແຍ່ງໃນກໍລະນີສຶກສານີ້ ມີດັ່ງນີ້:

1) ການຕົກລົງຊື້ຂາຍ ລະຫວ່າງ **ກ** ແລະ **ຂ** (ເປັນປະເດັນຂັດແຍ່ງ);

2) **ກ** ເປັນເຈົ້າກໍາມະສິດຕໍ່ຊັບສິ່ງຂອງ (ບໍ່ເປັນປະເດັນຂັດແຍ່ງ);

3) **ຂ** ບໍ່ປະຕິບັດສັນຍາ (ເປັນປະເດັນຂັດແຍ່ງ).

### 3.2 ການວິເຄາະຄໍາຕອບ

#### 3.2.1 ປະເດັນທີ່ວ່າ "ການຕົກລົງຊື້ຂາຍ ລະຫວ່າງ ກ ແລະ ຂ"

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງປີ 2024 ໄດ້ກໍານົດໄວ້ວ່າ "ໃນເວລາດໍາເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄໍາຮ້ອງຟ້ອງ ຫຼື ຄໍາຟ້ອງແຍ່ງບາງສ່ວນ ສານຈະກໍານົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ອີງຕາມຄໍາກ່າວອ້າງຂອງ **ກ** ວ່າ "ໄດ້ຂາຍກ້ອງຖ່າຍຮູບໃຫ້ **ຂ** ໃນວັນທີ 1 ທັນວາ

2020" ແລະ **ຂ** ກໍກ່າວອ້າງວ່າ "ຂ້ອຍຄິດວ່າແພງເກີນໄປ ຂ້ອຍຈຶ່ງບໍ່ຊື້". ສະນັ້ນ, ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ແລະ ຄຳກ່າວອ້າງຂອງ **ກ** ແລະ **ຂ** ແລ້ວ ຈຶ່ງສາມາດກຳນົດປະເດັນຂັດແຍ່ງທີ 1 ວ່າ ໄດ້ມີການຕົກລົງຊື້ຂາຍກັນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**.

### 3.2.2 ປະເດັນທີ່ວ່າ "ກ ເປັນເຈົ້າກຳມະສິດຕໍ່ ຊັບສິ່ງຂອງ"

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ບັນຫາທີ່ ໂຈດ ແລະ ຈຳເລີຍຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຕ້ອງຊອກຫາຫຼັກຖານ..." ແລະ ຄຳກ່າວອ້າງຂອງ **ຂ** ກໍບໍ່ໄດ້ໂຕ້ແຍ່ງວ່າກ້ອງຖ່າຍຮູບດັ່ງກ່າວບໍ່ແມ່ນຂອງ **ກ**. ດັ່ງນັ້ນ, ປະເດັນທີ່ວ່າ **ກ** ເປັນເຈົ້າກຳມະສິດຕໍ່ຊັບສິ່ງຂອງ ຈຶ່ງບໍ່ຖືວ່າເປັນປະເດັນຂັດແຍ່ງລະຫວ່າງ **ກ** ແລະ **ຂ**.

### 3.2.3 ປະເດັນທີ່ວ່າ "ຂ ບໍ່ປະຕິບັດສັນຍາ"

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ໄດ້ກຳນົດໄວ້ວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ອີງຕາມມາດຕາ 391 ຂອງປະມວນກົດໝາຍແພ່ງ "ການບໍ່ປະຕິບັດສັນຍາ ແມ່ນ ການລະເມີດສັນຍາທັງໝົດ ຫຼື ບາງສ່ວນ ຫຼື ການປະຕິບັດສັນຍາ ຢ່າງບໍ່ສົມເຫດສົມຜົນຂອງຄູ່ສັນຍາຝ່າຍໃດໜຶ່ງ ເຊັ່ນ ການປະຕິບັດສັນຍາບໍ່ມີຄຸນນະພາບ, ບໍ່ທັນກັບເວລາ, ບໍ່ຖືກສະຖານທີ່" ໃນກໍລະນີດັ່ງກ່າວນີ້ ຖ້າພິຈາລະນາຈາກຄຳກ່າວອ້າງຂອງ **ກ** ແລ້ວເຫັນວ່າ **ກ** ໄດ້ຕົກລົງຂາຍກ້ອງຖ່າຍຮູບ ພ້ອມທັງມອບກ້ອງໃຫ້ **ຂ** ໃນວັນທີ 1 ທັນວາ 2020 ແລະ **ຂ** ໄດ້ສັນຍາກັບ **ກ** ວ່າຈະຈ່າຍເງິນໃຫ້ **ກ** ໃນວັນທີ 31 ທັນວາ 2020, ແຕ່ພໍຮອດກຳນົດເວລາຈ່າຍ **ຂ** ກໍຍັງບໍ່ທັນຈ່າຍເງິນໃຫ້ **ກ** ເທື່ອ. ແຕ່ຖ້າພິຈາລະນາຈາກຄຳກ່າວອ້າງຂອງ **ຂ** ແລ້ວ ເຫັນວ່າກ້ອງຖ່າຍຮູບແພງເກີນໄປຈຶ່ງບໍ່ຊື້. ສະນັ້ນ, ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ແລະ ຄຳກ່າວອ້າງຂອງ **ກ** ແລະ **ຂ** ແລ້ວ ຈຶ່ງສາມາດກຳນົດປະເດັນຂັດແຍ່ງທີສອງ ແມ່ນ **ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່.

## 4. ຄຳຕອບ ຕໍ່ຄຳຖາມ 3

### 4.1 ຫຼັກຖານເພື່ອພິຈາລະນາປະເດັນຂັດແຍ່ງ ມີດັ່ງນີ້:

**1) ປະເດັນຂັດແຍ່ງທີ 1** "ໄດ້ມີການຕົກລົງຊື້ຂາຍກັນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ວິດີໂອ, ຄລິບສຽງ ຫຼື ພະຍານທີ່ຮູ້ເຫັນກ່ຽວກັບການຕົກລົງຊື້ຂາຍ ແລະ ການມອບ-ຮັບກ້ອງຖ່າຍຮູບ.

**2) ປະເດັນຂັດແຍ່ງທີ 2** "**ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງແມ່ນ:

- ເອກະສານ, ຮູບພາບ, ຄລິບສຽງ ຫຼື ວິດີໂອ ທີ່ຢັ້ງຢືນເຖິງການຕົກລົງຊື້ຂາຍ ລະຫວ່າງ **ກ** ແລະ **ຂ**;
- ພະຍານທີ່ຮູ້ເຫັນກ່ຽວກັບການບໍ່ປະຕິບັດສັນຍາ ຂອງ **ຂ** ເຊັ່ນ: ຜູ້ເຫັນ **ກ** ໄປທວງໃຫ້ **ຂ** ຊຳລະ

ຄ່າກ້ອງຖ່າຍຮູບ, ແຕ່ **ຂ** ບໍ່ຊຳລະ.

**4.2 ການວິເຄາະຄຳຕອບ**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ໃນເວລາດຳເນີນຄະດີ ຖ້າຫາກວ່າມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ. ດັ່ງນັ້ນ **ກ** ຕ້ອງໄດ້ຊອກຫຼັກຖານມາຢັ້ງຢືນຕໍ່ປະເດັນຂັດແຍ່ງ ຊຶ່ງອີງຕາມມາດຕາ 101 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ໂຈດ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ, ຄຳຮ້ອງຂໍຂອງຕົນ ແລະ ມາດຕາ 102 ໂຈດ ແລະ ຈຳເລີຍ ຫຼື ບຸກຄົນທີສາມຕ້ອງຊອກຫາ, ນຳສະເໜີ ຂໍ້ມູນຫຼັກຖານ ທີ່ເຊື່ອຖືໄດ້ ແລະ ບັນຫາທາງດ້ານກົດໝາຍຕໍ່ສານ ເພື່ອພິສູດຂໍ້ເທັດຈິງ ຫຼື ຄວາມເປັນຈິງໃນປະເດັນ, ບັນຫາທີ່ຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ່ງຕໍ່ສານ.... ສະນັ້ນ, **ກ** ຕ້ອງນຳຫຼັກຖານມາຢັ້ງຢືນຕໍ່ສານ ເພື່ອເປັນການພິສູດຄຳກ່າວອ້າງຂອງຕົນ ແລະ ໂດຍອີງໃສ່ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ມາດຕາ 95 "ຫຼັກຖານໃນຄະດີແພ່ງແມ່ນບັນດາຂໍ້ມູນເປັນຕົ້ນວັດຖຸ, ເອກະສານ, ບຸກຄົນທີ່ພົວພັນກັບຄະດີ…", ມາດຕາ 96 "ທີ່ມາຂອງຫຼັກຖານ ຂໍ້ 1. ເອກະສານ, ວັດຖຸສິ່ງຂອງ ແລະ ສຽງ, ຂໍ້ 3 ການໃຫ້ການຂອງຄູ່ຄວາມ, ບຸກຄົນທີສາມ, ພະຍານໃນຄະດີ" ແລະ ອີງຕາມມາດຕາ 101 "ໂຈດ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ, ຄຳຮ້ອງຂໍຂອງຕົນ. ດັ່ງນັ້ນ, ຫຼັກຖານທີ່ **ກ** ຄວນນຳມາສະເໜີຕໍ່ສານຈຶ່ງປະກອບດ້ວຍ:

**4.2.1 ປະເດັນຂັດແຍ່ງທີ 1** "ໄດ້ມີການຕົກລົງຊື້ຂາຍກັນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງແມ່ນ ເອກະສານ, ຮູບພາບ, ວິດີໂອ, ຄລິບສຽງ ຫຼື ພະຍານ ທີ່ຮູ້ເຫັນກ່ຽວກັບ ການຕົກລົງຊື້ຂາຍ, ການມອບ-ຮັບກ້ອງຖ່າຍຮູບ.

ຖ້າພິຈາລະນາຈາກມາດຕາ 97 ວັກ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ໄດ້ກຳນົດວ່າ "ຫຼັກຖານທາງດ້ານເອກະສານ ແມ່ນໄດ້ມາຈາກໜັງສືຢັ້ງຢືນກຳມະສິດ, ສັນຍາ, ຮູບພາບ[6], ບັນຊີຊັບສິນ ແລະ ເອກະສານອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງ", ໃນກໍລະນີນີ້ ຫຼັກຖານທາງດ້ານເອກະສານ ໝາຍເຖິງ ສັນຍາຊື້ຂາຍ, ບົດບັນທຶກການຊື້ຂາຍ, ຮູບພາບ ແລະ ເອກະສານອື່ນທີ່ສະແດງໃຫ້ເຫັນວ່າມີການຕົກລົງຊື້ຂາຍ ຫຼື ການມອບຮັບກ້ອງຖ່າຍຮູບ. ສະນັ້ນ, ເອກະສານທີ່ສະແດງ ຫຼື ຢັ້ງຢືນໃຫ້ເຫັນວ່າ **ກ** ໄດ້ຕົກຂາຍກ້ອງຖ່າຍຮູບໃຫ້ **ຂ** ໂດຍມີລາຍເຊັນຂອງ **ຂ** ພ້ອມທັງວັນທີ, ເດືອນ, ປີ ທີ່ໄດ້ຕົກລົງກັນ ຫຼື ເອກະສານ ຫຼື ຮູບພາບທີ່ສາມາດຢັ້ງຢືນການມອບ-ຮັບກ້ອງຖ່າຍຮູບຂອງ **ກ** ແລະ **ຂ** ຫຼື ການລາຍງານການເຄື່ອນໄຫວບັນຊີຂອງທະນາຄານ ທີ່ຢັ້ງຢືນການໂອນເງິນ ຫຼື ເອກະສານອື່ນ ທີ່ຢັ້ງຢືນເຖິງການຕົກລົງຊື້ຂາຍລະຫວ່າງ **ກ** ແລະ **ຂ**, ເນື່ອງຈາກວ່າ ບັນດາເອກະສານດັ່ງກ່າວຈະຢັ້ງຢືນໄດ້ວ່າ **ກ** ແລະ **ຂ** ໄດ້ມີການຕົກລົງຊື້ຂາຍກ້ອງຖ່າຍຮູບນຳກັນແທ້ ຫຼື ບໍ່ເຖິງວ່າ **ຂ** ຈະປະຕິເສດວ່າບໍ່ໄດ້ເຮັດສັນຍາຊື້ຂາຍກ້ອງຖ່າຍຮູບກັບ **ກ** ກໍຕາມ.

---

[6]ຮູບພາບ ໝາຍເຖິງ ຮູບພາບທີ່ໄດ້ຈາກການພິມອອກມາເປັນແຜ່ນເຈ້ຍ, ແຜ່ນຢາງ ຫຼື ແຜ່ນຜ້າ ແລະ ຮູບພາບທີ່ຢູ່ໃນກ້ອງຖ່າຍຮູບ, ວິດີໂອ ແລະ ໂທລະສັບ ຫຼື ເຄື່ອງອີເລັກໂຕຣນິກຕ່າງໆ.

ສ່ວນຫຼັກຖານທາງດ້ານບຸກຄົນ ຖ້າພິຈາລະນາຈາກມາດຕາ 97 ວັກ 4 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ທີ່ກຳນົດວ່າ "ຫຼັກຖານທາງດ້ານບຸກຄົນ ແມ່ນໄດ້ມາຈາກຄຳໃຫ້ການຂອງຄູ່ຄວາມ, ຄຳໃຫ້ການ ແລະ ການຢັ້ງຢືນຂອງພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ທີ່ພົວພັນກັບຂໍ້ຂັດແຍ່ງ" ໃນກໍລະນີນີ້ຫຼັກຖານທາງດ້ານບຸກຄົນ ໝາຍເຖິງ ພະຍານທີ່ຮູ້ເຫັນກ່ຽວກັບການຕົກລົງຊື້ຂາຍ ຫຼື ການມອບຮັບກ້ອງຖ່າຍຮູບ. ດັ່ງນັ້ນ, **ກ** ຕ້ອງຫາຫຼັກຖານທາງດ້ານບຸກຄົນມາຢັ້ງຢືນໂດຍສະເພາະໃນເວລາຕົກລົງຊື້ຂາຍກັນ ຫຼື ມອບຮັບກ້ອງຖ່າຍຮູບນັ້ນມີພະຍານ ຫຼື ມີຜູ້ຮູ້ເຫັນ ຫຼື ບໍ່.

**4.2.2 ປະເດັນຂັດແຍ່ງທີ 2** "ຂ ບໍ່ປະຕິບັດສັນຍາ ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາຢັ້ງຢືນເພື່ອແກ້ປະເດັນຂັດແຍ່ງ ແມ່ນ ຮູບພາບ, ຄລິບສຽງ, ວິດີໂອ ຫຼື ພະຍານທີ່ຮູ້ເຫັນກ່ຽວກັບການຕົກລົງຊື້ຂາຍ ລະຫວ່າງ **ກ** ແລະ **ຂ**, ການທວງຄ່າກ້ອງຖ່າຍຮູບຂອງ **ກ**, ການປະຕິເສດຂອງ **ຂ** ຫຼື ການໂຕ້ຖຽງຂອງ **ກ** ແລະ **ຂ** ເປັນຕົ້ນ.

**ກໍລະນີສຶກສາ II**

# ການທວງໃຫ້ສົ່ງເງິນທີ່ກູ້ຢືມຄືນ

# ການທວງໃຫ້ສົ່ງເງິນທີ່ກູ້ຢືມຄືນ

**1. ກໍລະນີສຶກສາ ແລະ ຄໍາຖາມ**

**<u>ການກ່າວອ້າງຂອງ ກ</u>**

ໃນວັນທີ 1 ມິຖຸນາ 2020 ຂ້ອຍເອົາເງິນຈໍານວນ 30,000,000 ກີບ ໃຫ້ **ຂ** ກູ້ຢືມ ເນື່ອງຈາກ **ຂ** ຮ້ອງຂໍມາ, ກໍານົດເວລາຊໍາລະແມ່ນ ວັນທີ 1 ມິຖຸນາ 2021 ແຕ່ກາຍກໍານົດເວລາຊໍາລະແລ້ວ **ຂ** ກໍຍັງບໍ່ຈ່າຍເງິນໃຫ້ຂ້ອຍ. ດັ່ງນັ້ນ, ຂ້ອຍຈຶ່ງຮ້ອງຂໍໃຫ້ **ຂ** ສົ່ງເງິນຄືນຈໍານວນ 30,000,000 ກີບ ແລະ ໄດ້ຍື່ນຄໍາຮ້ອງຟ້ອງຕໍ່ສານໃນວັນທີ 1 ທັນວາ 2021.

**<u>ການກ່າວອ້າງຂອງ ຂ ຮູບແບບ</u> 1**

ຂ້ອຍບໍ່ໄດ້ຮັບເງິນຈາກ **ກ** ແຕ່ຕອນນັ້ນ ຂ້ອຍມີບັນຫາເລື່ອງເງິນ ກໍເລີຍຂໍກູ້ຢືມເງິນຈາກ **ກ** ແທ້ ແຕ່ສຸດທ້າຍກໍຕົກລົງກັນບໍ່ໄດ້ກ່ຽວກັບຈໍານວນເງິນ ແລະ ກໍານົດເວລາສົ່ງເງິນຄືນ.

**<u>ການກ່າວອ້າງຂອງ ຂ ຮູບແບບ 2</u>**

ຂ້ອຍໄດ້ຮັບເງິນ 30,000,000 ກີບ ຈາກ **ກ** ແທ້ ແຕ່ຫາກເປັນການຊ່ວຍເຫຼືອຂອງ **ກ** ຈຶ່ງບໍ່ຈໍາເປັນຕ້ອງສົ່ງເງິນຈໍານວນດັ່ງກ່າວຄືນ.

**<u>ການກ່າວອ້າງຂອງ ຂ ຮູບແບບ 3</u>**

ຂ້ອຍໄດ້ຮັບເງິນ 30,000,000 ກີບ ຈາກ **ກ** ແລະ ກໍໄດ້ເຮັດສັນຍາເປັນລາຍລັກອັກສອນແທ້ ວ່າຈະສົ່ງເງິນຄືນ ແຕ່ເນື່ອງຈາກວ່າຂ້ອຍບໍ່ມີເງິນ ຈຶ່ງບໍ່ສາມາດຊໍາລະໄດ້.

**ຄໍາຖາມ 1** ເງື່ອນໄຂທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ຂ** ເພື່ອໃຫ້ສົ່ງເງິນທີ່ກູ້ຢືມຄືນ ມີຫຍັງແດ່ ?

**ຄໍາຖາມ 2** ປະເດັນຂັດແຍ່ງຕາມການກ່າວອ້າງຂອງ **ຂ** ແຕ່ຮູບແບບ 1 ຫາ ຮູບແບບ 3 ໃນກໍລະນີສຶກສານີ້ແມ່ນ ຫຍັງ ?

**ຄໍາຖາມ 3** ເພື່ອພິຈາລະນາ ປະເດັນຂັດແຍ່ງຕາມການກ່າວອ້າງຂອງ **ຂ** ແຕ່ຮູບແບບ 1 ຫາ ຮູບແບບ 3 ໃນກໍລະນີສຶກສານີ້ ຕ້ອງມີຫຼັກຖານຫຍັງແດ່ ?

**2. ຄໍາຕອບ ຕໍ່ຄໍາຖາມ 1 (ການກ່າວອ້າງຂອງ ຂ ຮູບແບບ 1)**

**2.1 ການເກີດສິດທວງຂອງ ກ ຕໍ່ ຂ ເພື່ອໃຫ້ສົ່ງເງິນທີ່ກູ້ຢືມຄືນນັ້ນ ຕ້ອງມີເງື່ອນໄຂ ດັ່ງນີ້:**

1) ການຕົກລົງກູ້ຢືມເງິນ ລະຫວ່າງ **ກ** ແລະ **ຂ**;

2) **ກ** ໄດ້ມອບເງິນໃຫ້ **ຂ**;

3) **ຂ** ບໍ່ປະຕິບັດສັນຍາ.

**2.2 ການວິເຄາະຄໍາຕອບ**

**2.2.1 ກ່ຽວກັບເງື່ອນໄຂ 1**

ພວກເຮົາສາມາດເວົ້າໄດ້ວ່າ "ການຕົກລົງກູ້ຢືມເງິນ ລະຫວ່າງ **ກ** ແລະ **ຂ**" ເປັນເງື່ອນໄຂໜຶ່ງທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ສົ່ງເງິນຄືນ.

ເປັນຫຍັງເງື່ອນໄຂ 1 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ການຕົກລົງກູ້ຢືມເງິນເປັນພື້ນຖານທີ່ສຳຄັນ ທີ່ກຳນົດໄວ້ໃນເນື້ອໃນຂອງສັນຍາກູ້ຢືມ, ການຕົກລົງດັ່ງກ່າວ ປະກອບມີ ຈຳນວນເງິນ ແລະ ກຳນົດເວລາສົ່ງເງິນຄືນ ເປັນພື້ນຖານສຳຄັນ ມີລາຍລະອຽດດັ່ງນີ້:

ເມື່ອເວົ້າເຖິງການຕົກລົງກູ້ຢືມ, ຄວນພິຈາລະນາວ່າ ອັນໃດເປັນເນື້ອໃນສຳຄັນຂອງສັນຍາກູ້ຢືມ, ຖ້າພິຈາ ລະນາອີກມູມມອງໜຶ່ງ ຈະບໍ່ສາມາດເວົ້າໄດ້ວ່າ ເປັນສັນຍາກູ້ຢືມ ຖ້າຫາກຂາດການກຳນົດເນື້ອໃນດັ່ງກ່າວໄວ້ໃນສັນຍາ.

ມາດຕາ 430 ວັກ 1 ຂອງປະມວນກົດໝາຍແພ່ງ ກຳນົດວ່າ “ສັນຍາກູ້ຢືມ ແມ່ນການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ໃຫ້ຢືມໄດ້ເອົາເງິນ ຫຼື ຊັບສິ່ງຂອງ ຂອງຕົນໃຫ້ເປັນກຳມະສິດແກ່ຜູ້ກູ້ຢືມ ແລະ ຜູ້ກູ້ຢືມຕ້ອງສົ່ງຈຳນວນເງິນ ຫຼື ຊັບສິ່ງຂອງປະເພດທີ່ກູ້ຢືມນັ້ນ ຕາມຈຳນວນເທົ່າທຽມກັນ ແລະ ຄຸນນະພາບດຽວກັນ ຄືນແກ່ຜູ້ໃຫ້ຢືມ ຕາມເວລາທີ່ໄດ້ກຳນົດໄວ້ໃນສັນຍາ”. ຈຳນວນເງິນ ແລະ ກຳນົດເວລາສົ່ງຄືນ ແມ່ນເນື້ອໃນທີ່ຈຳເປັນສຳລັບສັນຍາກູ້ຢືມ.

ຕົວຢ່າງ ກ ໄດ້ຕົກລົງໃຫ້ ຂ ກູ້ຢືມເງິນ ຈຳນວນ 20,000,000 ກີບ ແລະ ກຳນົດເວລາສົ່ງເງິນຄືນແມ່ນ 6 ເດືອນ ສະນັ້ນ ສັນຍາກູ້ຢືມດັ່ງກ່າວຈຶ່ງມີຜົນໃຊ້ໄດ້ທາງກົດໝາຍ. ແຕ່ຖ້າສັນຍາກູ້ຢືມ ຫາກບໍ່ໄດ້ກຳນົດເວລາຂອງການປະຕິບັດ ສັນຍາກໍໃຫ້ປະຕິບັດຕາມມາດຕາ 430 ວັກ 2 ແລະ ມາດຕາ 380 ວັກ 2 ຂອງປະມວນກົດໝາຍແພ່ງ.

### 2.2.2 ກ່ຽວກັບເງື່ອນໄຂ 2

ພວກເຮົາສາມາດເວົ້າໄດ້ວ່າ “**ກ** ໄດ້ມອບເງິນໃຫ້ **ຂ**” ເປັນເງື່ອນໄຂໜຶ່ງ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ສົ່ງເງິນທີ່ກູ້ຢືມຄືນ.

ເປັນຫຍັງເງື່ອນໄຂ 2 ຈຶ່ງມີຄວາມສຳຄັນ ?

ເນື່ອງຈາກວ່າ ເງື່ອນໄຂ 2 ໄດ້ກຳນົດໄວ້ໃນມາດຕາ 430 ວັກ 1 ຂອງປະມວນກົດໝາຍແພ່ງ ວ່າ: “ຜູ້ໃຫ້ຢືມໄດ້ເອົາເງິນ ຫຼື ຊັບສິ່ງຂອງ ຂອງຕົນໃຫ້ເປັນກຳມະສິດແກ່ຜູ້ກູ້ຢືມ”. ແຕ່ຖ້າຫາກຜູ້ໃຫ້ຢືມບໍ່ໄດ້ເອົາເງິນ ຫຼື ຊັບສິ່ງຂອງໃຫ້ແກ່ຜູ້ກູ້ຢືມແລ້ວ ສິດທວງຂອງ **ກ** ກໍຈະບໍ່ເກີດຂຶ້ນ.

### 2.2.3 ກ່ຽວກັບ ເງື່ອນໄຂ 3

ພວກເຮົາສາມາດເວົ້າໄດ້ວ່າ **ຂ** ບໍ່ປະຕິບັດສັນຍາ” ເປັນເງື່ອນໄຂໜຶ່ງ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ສົ່ງເງິນທີ່ກູ້ຢືມຄືນ ໂດຍສະເພາະ ໃນກໍລະນີສຶກສານີ້ ເປັນເງື່ອນໄຂຈຳເປັນ ເມື່ອ **ຂ** ບໍ່ໄດ້ສົ່ງເງິນຄືນຫຼັງວັນທີ 1 ມິຖຸນາ 2021.

ເປັນຫຍັງເງື່ອນໄຂ 3 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ເງື່ອນໄຂ 3 ໄດ້ກຳນົດໄວ້ໃນມາດຕາ 392 ແລະ 393 ຂອງປະມວນກົດໝາຍແພ່ງ ຊຶ່ງມີລາຍລະອຽດ ດັ່ງນີ້:

ຕາມປະມວນກົດໝາຍແພ່ງ ສາມາດເວົ້າໄດ້ວ່າ ສິດ ແລະ ສິດທວງ ແມ່ນແຍກອອກຈາກກັນ ໂດຍອີງຕາມມາດຕາ 364 ຂອງປະມວນກົດໝາຍແພ່ງ ສິດເກີດຂຶ້ນນັບແຕ່ວັນໄດ້ເຮັດສັນຍາ ແລະ ອີງຕາມມາດຕາ 392 ສິດທວງຈະເກີດຂຶ້ນ ເມື່ອຝ່າຍໃດຝ່າຍໃດໜຶ່ງ ຫາກບໍ່ປະຕິບັດສັນຍາ ຕາມທີ່ຕົກລົງກັນໄວ້.

ນັກວິຊາການກົດໝາຍ ຈຳນວນໜຶ່ງມີແນວຄວາມຄິດທີ່ວ່າ ເງື່ອນໄຂ 3 ນັ້ນມີຄວາມສຳຄັນ ຊຶ່ງເອີ້ນວ່າ "ທັດສະນະ A".

ກົງກັນຂ້າມ ນັກວິຊາການກົດໝາຍ ອີກຈຳນວນໜຶ່ງທີ່ມີແນວຄວາມຄິດທີ່ວ່າ ເງື່ອນໄຂ 3 ບໍ່ມີຄວາມສຳຄັນ ແລະ ມີພຽງ ເງື່ອນໄຂ 1 ແລະ 2 ທີ່ມີຄວາມສຳຄັນ ພໍຈະເປັນເງື່ອນໄຂ ທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ສົ່ງເງິນຄືນ ຊຶ່ງເອີ້ນວ່າ "ທັດສະນະ B".

ອີງຕາມທັດສະນະ B ນີ້ ສັນຍາ ມີຜົນ ທີ່ພາໃຫ້ເກີດສິດທວງ ຕາມມາດຕາ 375 ຂອງປະມວນກົດໝາຍແພ່ງ ແລະ ບໍ່ແມ່ນພຽງແຕ່ສິດ ແຕ່ຍັງລວມເຖິງ ສິດທວງ ທີ່ຈະເກີດຂຶ້ນໄດ້ ເມື່ອມີການເຮັດສັນຍາ ຕາມມາດຕາ 364 ຂອງປະມວນກົດໝາຍແພ່ງ. ທັດສະນະ B ໄດ້ເວົ້າວ່າ ມາດຕາ 392 ຂອງປະມວນກົດໝາຍແພ່ງ ກຳນົດວ່າ "ສິດທວງ" ໃນເວລາຮ້ອງຟ້ອງ ເມື່ອອີກຝ່າຍຫາກບໍ່ປະຕິບັດສັນຍາ.

## 2.3 ບັນຫາອື່ນທີ່ຄວນພິຈາລະນາ

### 2.3.1 ຕໍ່ກັບສັນຍາທີ່ເປັນລາຍລັກອັກສອນ

ໃນປຶ້ມຄູ່ມືຫົວນີ້ ບໍ່ໄດ້ຖືເອົາສັນຍາເປັນລາຍລັກອັກສອນມາເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງ ທັງທີ່ປະມວນກົດໝາຍແພ່ງ ມາດຕາ 430 ວັກ 5 ກຳນົດໄວ້ ທັງນີ້ ກໍຍ້ອນວ່າ ໄດ້ມີການຈັດຕັ້ງໃນພາກປະຕິບັດຕົວຈິງ ເພື່ອເປັນການແກ້ໄຂບັນຫາທາງແພ່ງ ທີ່ເກີດຈາກສັນຍາກູ້ຢືມ ທີ່ບໍ່ໄດ້ເຮັດເປັນລາຍລັກອັກສອນ ແຕ່ຖ້າຄູ່ສັນຍາຫາກມີຫຼັກຖານທີ່ໜ້າເຊື່ອຖືມາຢັ້ງຢືນຕໍ່ສານ, ສານກໍຈະພິຈາລະນາຕາມການຮ້ອງຟ້ອງຂອງໂຈດ ຖືວ່າມີສາຍພົວພັນທາງແພ່ງເກີດຂຶ້ນລະຫວ່າງຄູ່ຄວາມແລ້ວ. ສະນັ້ນ, ໃນປຶ້ມຄູ່ມືຫົວນີ້ ຈຶ່ງບໍ່ເອົາສັນຍາເປັນລາຍລັກອັກສອນມາເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງ ຂອງ ກ ຕໍ່ ຂ.

ການກຳນົດໃຫ້ເຮັດສັນຍາກູ້ຢືມເປັນລາຍລັກອັກສອນ ຕາມມາດຕາ 430 ວັກ 5 ຂອງປະມວນກົດໝາຍແພ່ງ ກໍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພ້ອມທັງເປັນການຍົກສູງສະຕິທາງດ້ານກົດໝາຍໃນການເຮັດສັນຍາ. ໃນກໍລະນີມີການຮ້ອງຟ້ອງຕໍ່ສານ ກໍສາມາດນຳເອົາສັນຍາທີ່ເປັນລາຍລັກອັກສອນນັ້ນ ມາເປັນຫຼັກຖານຢັ້ງຢືນ ເພື່ອໃຫ້ສານສາມາດພິຈາລະນາຕັດສິນໄດ້ຢ່າງຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ.

ແນວໃດກໍຕາມເຖິງວ່າ ມາດຕາ 430 ວັກ 5 ຂອງປະມວນກົດໝາຍແພ່ງ ໄດ້ກຳນົດໃຫ້ສັນຍາກູ້ຢືມຕ້ອງເຮັດເປັນລາຍລັກອັກສອນ ແຕ່ໃນກໍລະນີສັນຍາກູ້ຢືມ ຫາກເຮັດທາງປາກເປົ່ານັ້ນ ສັນຍາດັ່ງກ່າວຈະມີຜົນທາງດ້ານກົດໝາຍໄດ້ ກໍຕໍ່ເມື່ອໂຈດ ແລະ ຈຳເລີຍຫາກຮັບຮູ້ນຳກັນ ສານກໍບໍ່ຈຳເປັນ

ຊອກຫາຫຼັກຖານ ໂດຍອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024.

**2.3.2 ຕໍ່ກັບ ການກຳນົດດອກເບ້ຍໃນສັນຍາກູ້ຢືມ**

ການຕົກລົງກ່ຽວກັບດອກເບ້ຍໃນສັນຍາກູ້ຢືມ ບໍ່ຖືເປັນເນື້ອໃນສຳຄັນຂອງສັນຍາ ໂດຍອີງຕາມ ມາດຕາ 430 ວັກ 3 ຂອງປະມວນກົດໝາຍແພ່ງ ທີ່ໄດ້ກຳນົດວ່າ ການກູ້ຢືມເງິນຈະມີດອກເບ້ຍ ຫຼື ບໍ່ ມີດອກເບ້ຍກໍໄດ້ ແຕ່ຕ້ອງກຳນົດໄວ້ໃນສັນຍາ.

ໃນກໍລະນີລູກໜີ້ຫາກໃຊ້ແທນໜີ້ສິນຊັກຊ້າ ຊຶ່ງສ້າງຄວາມເສັຍປະໂຫຍດໃຫ້ແກ່ເຈົ້າໜີ້, ເຈົ້າໜີ້ກໍ ມີສິດຮ້ອງຟ້ອງໃຫ້ລູກໜີ້ຮັບຜິດຊອບຄ່າປ່ອຍການຊັບ.

**2.3.3 ຕໍ່ກັບ ມາດຕາ 370 ຂອງປະມວນກົດໝາຍແພ່ງ**

ນອກຈາກເນື້ອໃນຂອງສັນຍາກູ້ຢືມກ່ຽວກັບ ຈຳນວນເງິນທີ່ກູ້ຢືມ ແລະ ກຳນົດເວລາສົ່ງເງິນຄືນ ຊຶ່ງກຳນົດໃນມາດຕາ 370 ນັ້ນ ຈະບໍ່ເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ສົ່ງເງິນ ຄືນ ໂດຍສະເພາະໃນສັນຍາກູ້ຢືມ ລະຫວ່າງ **ກ** ແລະ **ຂ** ຈະມີຜົນໃຊ້ໄດ້ ເຖິງວ່າ ຈະບໍ່ໄດ້ຕົກລົງກັນກ່ຽວ ກັບ ສະຖານທີ່ເຮັດສັນຍາ, ຊື່, ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາ, ວິທີການສົ່ງເງິນຄືນ, ຄຸນນະພາບ ແລະ ສະຖານທີ່ ປະຕິບັດສັນຍາ ແລະ ພັນທະໃນການແຈ້ງຜົນຈາກການລະເມີດສັນຍາ, ວິທີການແກ້ໄຂຂໍ້ຂັດແຍ່ງ, ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ ກໍຕາມ.

ດ້ວຍສາເຫດໃດ ເນື້ອໃນເຫຼົ່ານັ້ນຈຶ່ງບໍ່ເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງ ?

ຍ້ອນວ່າ ເນື້ອໃນດັ່ງກ່າວ ບໍ່ແມ່ນປັດໄຈພື້ນຖານຂອງສັນຍາກູ້ຢືມ. ຕົວຢ່າງ ເມື່ອບຸກຄົນໃດໜຶ່ງ ກູ້ຢືມເງິນ ຈຳນວນ 2,000,000 ກີບ ສັນຍາດັ່ງກ່າວກໍຈະມີຜົນໃຊ້ໄດ້ ເຖິງວ່າ ຈະບໍ່ກຳນົດ ສະຖານທີ່ ເຮັດສັນຍາ, ສະຖານທີ່ປະຕິບັດສັນຍາ ລວມທັງບ່ອນຢູ່ຂອງຄູ່ສັນຍາ, ວັນທີເຮັດສັນຍາ ແລະ ເນື້ອໃນ ອື່ນກໍຕາມ. ເຖິງຢ່າງໃດກໍດີ ເພື່ອປ້ອງກັນບໍ່ໃຫ້ມີບັນຫາເກີດຂຶ້ນໃນອະນາຄົດ ການເຮັດສັນຍານັ້ນ ຕ້ອງ ກຳນົດເນື້ອໃນລະອຽດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 370 ຂອງປະມວນກົດໝາຍແພ່ງ, ໃນພາກ ປະຕິບັດຕົວຈິງເວລາບຸກຄົນໃດໜຶ່ງຍື່ນຄຳຮ້ອງຟ້ອງ ກໍເປັນເລື່ອງປົກກະຕິ ທີ່ບຸກຄົນນັ້ນຈະຕ້ອງຍືນຢັນ ວັນທີເຮັດສັນຍາ ເພື່ອພິສູດຄວາມຖືກຕ້ອງຂອງສັນຍາ.

**3. ຄຳຕອບ ຕໍ່ຄຳຖາມ 2 (ການກ່າວອ້າງຂອງ ຂ ຮູບແບບ 1)**

**3.1 ປະເດັນຂັດແຍ່ງຕາມການກ່າວອ້າງຂອງ ຂ ໃນກໍລະນີສຶກສານີ້ ມີດັ່ງນີ້:**

1) ການຕົກລົງກູ້ຢືມເງິນ ລະຫວ່າງ **ກ** ແລະ **ຂ** (ເປັນປະເດັນຂັດແຍ່ງ);

2) **ກ** ໄດ້ມອບເງິນໃຫ້ **ຂ** (ເປັນປະເດັນຂັດແຍ່ງ);

3) **ຂ** ບໍ່ປະຕິບັດສັນຍາ (ເປັນປະເດັນຂັດແຍ່ງ).

**3.2 ການວິເຄາະຄຳຕອບ**

**3.2.1 ປະເດັນທີ່ວ່າ "ການຕົກລົງກູ້ຢືມເງິນ ລະຫວ່າງ ກ ແລະ ຂ"**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 ທີ່ໄດ້ກຳນົດໄວ້ວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ຖ້າອີງຕາມຄຳກ່າວອ້າງຂອງ **ກ** ວ່າ "ໄດ້ເອົາເງິນໃຫ້ **ຂ** ກູ້ຢືມ ຈຳນວນ 30,000,000 ກີບ. ໃນວັນທີ 1 ມິຖຸນາ 2020 ແລະ **ຂ** ກໍກ່າວວ່າ "ຂ້ອຍເຄີຍມີບັນຫາເລື່ອງເງິນ ກໍເລີຍຂໍກູ້ຢືມເງິນຈາກ **ກ** ແທ້ ແຕ່ສຸດທ້າຍກໍຕົກລົງກັນບໍ່ໄດ້ກ່ຽວກັບຈຳນວນເງິນ". ສະນັ້ນ ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ແລະ ຄຳກ່າວອ້າງຂອງ **ກ** ແລະ **ຂ** ແລ້ວ ສາມາດກຳນົດປະເດັນຂັດແຍ່ງທີ 1 ວ່າ ໄດ້ມີການຕົກລົງກູ້ຢືມເງິນກັນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**.

**3.2.2 ປະເດັນທີ່ວ່າ "ກ ໄດ້ມອບເງິນໃຫ້ ຂ"**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 ທີ່ໄດ້ກຳນົດໄວ້ວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ຄຳກ່າວອ້າງຂອງ **ກ** ແລະ **ຂ** ແລ້ວ ສາມາດກຳນົດປະເດັນຂັດແຍ່ງທີ 2 ວ່າ **ກ** ໄດ້ມອບເງິນໃຫ້ **ຂ** ຫຼື ບໍ່.

**3.2.3 ປະເດັນທີ່ວ່າ "ຂ ບໍ່ປະຕິບັດສັນຍາ"**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 ທີ່ໄດ້ກຳນົດວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ອີງຕາມມາດຕາ 391 ຂອງປະມວນກົດໝາຍແພ່ງ ທີ່ໄດ້ກຳນົດວ່າ "ການບໍ່ປະຕິບັດສັນຍາ ແມ່ນການລະເມີດສັນຍາທັງໝົດ ຫຼື ບາງສ່ວນ ຫຼື ການປະຕິບັດສັນຍາ ໂດຍບໍ່ສົມເຫດສົມຜົນຂອງຄູ່ສັນຍາຝ່າຍໃດໜຶ່ງ ເຊັ່ນ ການປະຕິບັດສັນຍາ ບໍ່ມີຄຸນນະພາບ, ບໍ່ທັນກັບເວລາ, ບໍ່ຖືກສະຖານທີ່". ໃນກໍລະນີດັ່ງກ່າວນີ້ ເມື່ອພິຈາລະນາຄຳກ່າວອ້າງຂອງ **ກ** ແລ້ວ ເຫັນວ່າ **ກ** ໄດ້ມອບເງິນ ຈຳນວນ 30,000,000 ກີບ ໃຫ້ **ຂ** ໃນວັນທີ 1 ມິຖຸນາ 2020. ເມື່ອຮອດກຳນົດເວລາສົ່ງເງິນຄືນ **ຂ** ກໍຍັງບໍ່ທັນໄດ້ສົ່ງເງິນໃຫ້ **ກ** ເທື່ອ. ແຕ່ຖ້າພິຈາລະນາຄຳກ່າວອ້າງຂອງ **ຂ** ວ່າ **ຂ** ມີບັນຫາເລື່ອງເງິນ ກໍເລີຍຂໍກູ້ຢືມເງິນຈາກ **ກ** ແທ້ ແຕ່ສຸດທ້າຍກໍຕົກລົງກັນບໍ່ໄດ້ກ່ຽວກັບຈຳນວນເງິນ ແລະ ກຳນົດເວລາສົ່ງເງິນຄືນ ສະນັ້ນ ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 ແລະ ຄຳກ່າວອ້າງຂອງ **ກ** ແລະ **ຂ** ແລ້ວ ສາມາດກຳນົດປະເດັນຂັດແຍ່ງທີ 3 ວ່າ **ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່.

**4. ຄຳຕອບ ຕໍ່ ຄຳຖາມ 3 (ການກ່າວອ້າງຂອງ ຂ ຮູບແບບ 1)**

**4.1 ຫຼັກຖານ ເພື່ອພິຈາລະນາປະເດັນຂັດແຍ່ງ ມີດັ່ງນີ້:**

**1) ປະເດັນຂັດແຍ່ງທີ 1** "ໄດ້ມີການຕົກລົງກູ້ຢືມເງິນກັນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ວິດີໂອ, ຄລິບສຽງ ຫຼື ພະຍານ ທີ່ຮູ້ເຫັນກ່ຽວກັບການຕົກລົງກູ້ຢືມ ແລະ ການມອບ-ຮັບເງິນ.

**2) ປະເດັນຂັດແຍ່ງທີ 2** "**ກ** ໄດ້ມອບເງິນໃຫ້ **ຂ** ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ຄລິບສຽງ, ວິດີໂອ ຫຼື ພະຍານທີ່ຮູ້ເຫັນກ່ຽວກັບການມອບ-ຮັບເງິນ.

**3) ປະເດັນຂັດແຍ່ງທີ 3** "**ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ຄລິບສຽງ ຫຼື ວິດີໂອ ທີ່ຢັ້ງຢືນເຖິງການຕົກລົງກູ້ຢືມເງິນລະຫວ່າງ **ກ** ແລະ **ຂ**, ພະຍານທີ່ຮູ້ເຫັນກ່ຽວກັບການບໍ່ປະຕິບັດສັນຍາ ຂອງ **ຂ** ເຊັ່ນ ຜູ້ເຫັນ **ກ** ໄປທວງໃຫ້ **ຂ** ສົ່ງເງິນຄືນ ແຕ່ **ຂ** ກໍບໍ່ສົ່ງ.

**4.2 ການວິເຄາະ ຄຳຕອບ**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ກຳນົດວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ດັ່ງນັ້ນ, **ກ** ຕ້ອງໄດ້ຊອກຫຼັກຖານມາຢັ້ງຢືນຕໍ່ປະເດັນຂັດແຍ່ງ ຊຶ່ງອີງຕາມມາດຕາ 101, ວັກ2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ກຳນົດວ່າ "ໂຈດ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຂອງຕົນ" ແລະ ຕາມມາດຕາ 102, ວັກ 1 ໄດ້ກຳນົດວ່າ"ໂຈດ ແລະ ຈຳເລີຍ ຫຼື ບຸກຄົນທີສາມ ຕ້ອງຊອກຫາ, ນຳສະເໜີຂໍ້ມູນ ຫຼັກຖານ ທີ່ເຊື່ອຖືໄດ້ ແລະ ບັນຫາທາງດ້ານກົດໝາຍຕໍ່ສານ ເພື່ອພິສູດຂໍ້ເທັດຈິງ ຫຼື ຄວາມເປັນຈິງໃນປະເດັນ, ບັນຫາທີ່ຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ່ງຕໍ່ສານ... "

ສະນັ້ນ **ກ** ຕ້ອງນຳຫຼັກຖານມາຢັ້ງຢືນຕໍ່ສານ ເພື່ອເປັນການພິສູດຄຳກ່າວອ້າງຂອງຕົນ ແລະ ໂດຍອີງໃສ່ມາດຕາ 95 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ທີ່ກຳນົດວ່າ "ຫຼັກຖານໃນຄະດີແພ່ງ ແມ່ນບັນດາຂໍ້ມູນ ເປັນຕົ້ນ ວັດຖຸ, ເອກະສານທີ່ພົວພັນກັບຄະດີ", ມາດຕາ 96 ທີ່ກຳນົດວ່າ "ທີ່ມາຂອງຫຼັກຖານ ຂໍ້ 1. ເອກະສານ, ວັດຖຸສິ່ງຂອງ ແລະ ສຽງ, ຂໍ້ 3 ການໃຫ້ການຂອງຄູ່ຄວາມ, ບຸກຄົນທີສາມ, ພະຍານໃນຄະດີ" ແລະ ອີງຕາມມາດຕາ 101 "ໂຈດ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຂອງຕົນ". ດັ່ງນັ້ນ, ຫຼັກຖານທີ່ **ກ** ຄວນນຳມາສະເໜີຕໍ່ສານຈຶ່ງປະກອບດ້ວຍ:

**4.2.1 ປະເດັນຂັດແຍ່ງທີ 1** "ໄດ້ມີການຕົກລົງກູ້ຢືມເງິນກັນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ວິດີໂອ, ຄລິບສຽງ ທີ່ກ່ຽວຂ້ອງກັບສັນຍາກູ້ຢືມ ຫຼື ພະຍານ ທີ່ຮູ້ເຫັນກ່ຽວກັບການຕົກລົງກູ້ຢືມ ຫຼື ການມອບ-ຮັບເງິນ ທີ່ສະແດງໃຫ້ເຫັນວ່າ **ກ** ແລະ **ຂ** ໄດ້ມີການຕົກລົງກູ້ຢືມເງິນກັນ ໂດຍມີການເຊັນຂອງ **ຂ** ພ້ອມທັງວັນທີ, ເດືອນ, ປີ ໃນສັນຍາກູ້ຢືມ ຫຼື ໃບມອບຮັບເງິນ ຫຼື ການໂອນເງິນ ຕາມຈຳນວນທີ່ກູ້ຢືມເຂົ້າບັນຊີທະນາຄານຂອງ **ຂ**, ນີ້ກໍສາມາດຢັ້ງຢືນໄດ້ວ່າ **ຂ** ໄດ້ກູ້ຢືມເງິນນຳ **ກ**, ເຖິງວ່າ **ຂ** ຈະປະຕິເສດວ່າ ບໍ່ໄດ້ເຮັດສັນຍາກູ້ຢືມເງິນ ຫຼື ບໍ່ໄດ້ຮັບເງິນຈາກ **ກ** ກໍຕາມ.

ອີງຕາມມາດຕາ 97 ວັກ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ກຳນົດວ່າ "ຫຼັກຖານທາງດ້ານເອກະສານ ແມ່ນໄດ້ມາຈາກໜັງສືຢັ້ງຢືນກຳມະສິດ, ສັນຍາ, ຮູບພາບ[7], ບັນຊີຊັບສິນ ແລະ ເອກະສານອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງ" ໃນກໍລະນີນີ້ ຫຼັກຖານທາງດ້ານເອກະສານ ໝາຍເຖິງ ສັນຍາ ກູ້ຢືມເງິນ ແລະ ໃບມອບ-ຮັບເງິນລະຫວ່າງ **ກ** ແລະ **ຂ**.

ອີງຕາມມາດຕາ 97 ວັກ 4 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ທີ່ກຳນົດວ່າ "ຫຼັກຖານທາງດ້ານບຸກຄົນ ແມ່ນໄດ້ມາຈາກຄຳໃຫ້ການຂອງຄູ່ຄວາມ, ຄຳໃຫ້ການ ແລະ ການຢັ້ງຢືນຂອງພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ທີ່ພົວພັນກັບຂໍ້ຂັດແຍ່ງ" ໃນກໍລະນີນີ້ ຫຼັກຖານທາງດ້ານບຸກຄົນ ໝາຍເຖິງ ພະຍານທີ່ໄດ້ຮູ້ເຫັນການຕົກລົງກູ້ຢືມ ຫຼື ການມອບ-ຮັບເງິນ ເຊັ່ນ ນາຍບ້ານ ຫຼື ນາຍທະບຽນສານ ທີ່ຢັ້ງຢືນສັນຍາ ຫຼື ບຸກຄົນອື່ນທີ່ພົວພັນກັບຂໍ້ຂັດແຍ່ງ.

**4.2.2 ປະເດັນຂັດແຍ່ງທີ 2** "**ກ** ໄດ້ມອບເງິນໃຫ້ **ຂ** ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ຄລິບສຽງ, ວິດີໂອ ຫຼື ພະຍານທີ່ຮູ້ເຫັນກ່ຽວກັບການມອບ-ຮັບເງິນ ລະຫວ່າງ **ກ** ແລະ **ຂ** ເປັນຕົ້ນ ໃບມອບຮັບເງິນທີ່ມີລາຍເຊັນຂອງ **ຂ** ພ້ອມທັງວັນທີ, ເດືອນ, ປີ ຫຼື ການໂອນເງິນ ຕາມຈຳນວນທີ່ກູ້ຢືມເຂົ້າບັນຊີທະນາຄານຂອງ **ຂ**, ຮູບພາບ, ຄລິບສຽງ, ວິດີໂອ ໃນເວລາມອບ-ຮັບເງິນກັນ ແລະ ພະຍານທີ່ເຫັນການມອບເງິນໃຫ້ **ຂ** ທີ່ໄດ້ຮູ້ ຫຼື ເຫັນ **ຂ** ໃຊ້ຈ່າຍເງິນຈຳນວນດັ່ງກ່າວ ພາຍຫຼັງ ວັນທີ 1 ມິຖຸນາ 2020.

**4.2.3 ປະເດັນຂັດແຍ່ງທີ 3** "**ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງແມ່ນ ຮູບພາບ, ຄລິບສຽງ ຫຼື ວິດີໂອ ຫຼື ພະຍານ ທີ່ຮູ້ເຫັນການຕົກລົງກູ້ຢືມເງິນ ລະຫວ່າງ **ກ** ແລະ **ຂ**; ການທວງເອົາເງິນຄືນຂອງ **ກ**, ການປະຕິເສດຂອງ **ຂ** ຫຼື ການໂຕ້ຖຽງຂອງ **ກ** ແລະ **ຂ** ກ່ຽວກັບການບໍ່ສົ່ງເງິນຄືນ.

---

[7] ຮູບພາບ ໝາຍເຖິງ ຮູບພາບທີ່ໄດ້ຈາກການພິມອອກມາເປັນແຜ່ນເຈ້ຍ, ແຜ່ນຢາງ ຫຼື ແຜ່ນຜ້າ ແລະ ຮູບພາບທີ່ຢູ່ໃນກ້ອງຖ່າຍຮູບ, ວິດີໂອ ແລະ ໂທລະສັບ ຫຼື ເຄື່ອງເອເລັກໂຕຣນິກຕ່າງໆ.

**5. ຄຳຕອບ ຕໍ່ຄຳຖາມ 1 (ການກ່າວອ້າງຂອງ ຂ ຮູບແບບ 2)**

ການເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ສົ່ງເງິນທີ່ກູ້ຢືມນັ້ນຄືນ ໃນຮູບແບບ 2 ແມ່ນໃຫ້ປະຕິບັດຄືກັນກັບເງື່ອນໄຂ ແລະ ການວິເຄາະຄຳຕອບທີ່ໄດ້ກ່າວໄວ້ໃນຂໍ້ 2.

**6. ຄຳຕອບ ຕໍ່ຄຳຖາມ 2 (ການກ່າວອ້າງຂອງ ຂ ຮູບແບບ 2)**

**6.1 ປະເດັນຂັດແຍ່ງໃນກໍລະນີສຶກສານີ້ມີ ດັ່ງນີ້:**

1) ການຕົກລົງກູ້ຢືມເງິນ ລະຫວ່າງ **ກ** ແລະ **ຂ** (ເປັນປະເດັນຂັດແຍ່ງ);

2) **ກ** ໄດ້ມອບເງິນໃຫ້ **ຂ** (ບໍ່ເປັນປະເດັນຂັດແຍ່ງ);

3) **ຂ** ບໍ່ປະຕິບັດສັນຍາ (ເປັນປະເດັນຂັດແຍ່ງ).

**6.2 ການວິເຄາະຄຳຕອບ**

**6.2.1 ປະເດັນທີ່ວ່າ "ກ ແລະ ຂ ໄດ້ມີການຕົກລົງກູ້ຢືມເງິນກັນ"**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ກຳນົດວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ອີງຕາມຄຳກ່າວອ້າງຂອງ **ກ** ວ່າ "ໃນວັນທີ 1 ມິຖຸນາ 2020 ຕົນໄດ້ເອົາເງິນຈຳນວນ 30,000,000 ກີບ ໃຫ້ **ຂ** ກູ້ຢືມ" ແລະ **ຂ** ກໍກ່າວອ້າງວ່າ "ບໍ່ໄດ້ກູ້ຢືມ ແຕ່ຫາກເປັນການຊ່ວຍເຫຼືອຂອງ **ກ**" ສະນັ້ນ ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ແລະ ຄຳກ່າວອ້າງຂອງ **ກ** ແລະ **ຂ** ແລ້ວ ສາມາດກຳນົດປະເດັນຂັດແຍ່ງທີ 1 ວ່າໄດ້ມີການຕົກລົງກູ້ຢືມເງິນກັນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**.

**6.2.2 ປະເດັນທີ່ວ່າ "ກ ໄດ້ມອບເງິນໃຫ້ ຂ"**

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ກຳນົດວ່າ "ບັນຫາທີ່ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຊອກຫາຫຼັກຖານ..." ແລະ ຄຳກ່າວອ້າງຂອງ **ຂ** ກໍບໍ່ໄດ້ໂຕ້ແຍ່ງວ່າ ບໍ່ໄດ້ຮັບເງິນຈາກ **ກ** ພ້ອມນັ້ນ ຍັງຮັບຮູ້ວ່າໄດ້ຮັບເງິນ ຈຳນວນ 30,000,000 ກີບ ຈາກ **ກ** ແທ້. ດັ່ງນັ້ນ, ປະເດັນທີ່ວ່າ **ກ** ໄດ້ເອົາເງິນຈຳນວນ 30,000,000 ກີບ ໃຫ້ **ຂ** ຈຶ່ງບໍ່ຖືວ່າ ເປັນປະເດັນຂັດແຍ່ງ.

**6.2.3 ປະເດັນທີ່ວ່າ "ຂ ບໍ່ປະຕິບັດສັນຍາ"**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ກຳນົດ ວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ອີງຕາມມາດຕາ 391 ຂອງປະມວນກົດໝາຍແພ່ງ ແລະ ຄຳກ່າວອ້າງຂອງ **ກ** ແລ້ວ ເຫັນວ່າ **ກ** ໄດ້ເອົາເງິນ ຈຳນວນ 30,000,000 ກີບ ໃຫ້ **ຂ** ກູ້ຢືມ ດັ່ງນັ້ນ ເມື່ອຮອດກຳນົດເວລາສົ່ງເງິນຄືນ **ຂ** ກໍຍັງບໍ່ທັນ

ໄດ້ສົ່ງເງິນໃຫ້ **ກ** ເທື່ອ ແຕ່ຖ້າພິຈາລະນາຕາມຄຳກ່າວອ້າງຂອງ **ຂ** ແລ້ວ, **ຂ** ໄດ້ອ້າງວ່າ ເປັນການຊ່ວຍເຫຼືອ ບໍ່ແມ່ນການກູ້ຢືມເງິນ ສະນັ້ນ ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ແລະ ຄຳກ່າວອ້າງຂອງ **ກ** ແລະ **ຂ** ແລ້ວ ສາມາດກຳນົດປະເດັນຂັດແຍ່ງທີ 2 ວ່າ **ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່.

**7. ຄຳຕອບ ຕໍ່ຄຳຖາມ 3 (ການກ່າວອ້າງຂອງ ຂ ຮູບແບບ 2)**

**7.1 ຫຼັກຖານ ເພື່ອພິຈາລະນາປະເດັນຂັດແຍ່ງ ມີ ດັ່ງນີ້:**

**1) ປະເດັນຂັດແຍ່ງທີ 1** "ໄດ້ມີການຕົກລົງກູ້ຢືມເງິນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ວິດີໂອ, ຄລິບສຽງ ຫຼື ພະຍານ ທີ່ຮູ້ເຫັນກ່ຽວກັບການຕົກລົງກູ້ຢືມ ແລະ ການມອບ-ຮັບເງິນ.

**2) ປະເດັນຂັດແຍ່ງທີ 2** "**ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ຄລິບສຽງ ຫຼື ວິດີໂອ ທີ່ຢັ້ງຢືນເຖິງການຕົກລົງກູ້ຢືມເງິນລະຫວ່າງ **ກ** ແລະ **ຂ**, ພະຍານທີ່ຮູ້ເຫັນກ່ຽວກັບການບໍ່ປະຕິບັດສັນຍາ ຂອງ **ຂ** ເຊັ່ນ ຜູ້ເຫັນ **ກ** ໄປທວງ **ຂ** ໃຫ້ສົ່ງເງິນຄືນ, ແຕ່ **ຂ** ກໍບໍ່ສົ່ງ.

**7.2 ການວິເຄາະຄຳຕອບ**

**3) ປະເດັນຂັດແຍ່ງທີ 1** "ໄດ້ມີການຕົກລົງກູ້ຢືມເງິນ ຫຼື ບໍ່ ລະຫວ່າງ **ກ** ແລະ **ຂ**" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ, ຮູບພາບ, ວິດີໂອ, ຄລິບສຽງ ທີ່ກ່ຽວຂ້ອງກັບສັນຍາກູ້ຢືມ ຫຼື ພະຍານ ທີ່ຮູ້ເຫັນກ່ຽວກັບການຕົກລົງກູ້ຢືມ ຫຼື ການມອບ-ຮັບເງິນ ທີ່ສະແດງໃຫ້ເຫັນວ່າ **ກ** ແລະ **ຂ** ໄດ້ມີການຕົກລົງກູ້ຢືມເງິນ ໂດຍມີລາຍເຊັນຂອງ **ຂ** ພ້ອມທັງວັນທີ, ເດືອນ, ປີ ໃນສັນຍາກູ້ຢືມ ຫຼື ໃບມອບຮັບເງິນ ຫຼື ການໂອນເງິນ ຕາມຈຳນວນທີ່ກູ້ຢືມເຂົ້າບັນຊີທະນາຄານຂອງ **ຂ**, ນີ້ກໍສາມາດຢັ້ງຢືນໄດ້ວ່າ **ຂ** ໄດ້ກູ້ຢືມເງິນນຳ **ກ**, ເຖິງວ່າ **ຂ** ຈະປະຕິເສດວ່າ ບໍ່ໄດ້ເຮັດສັນຍາກູ້ຢືມເງິນ ຫຼື ບໍ່ໄດ້ຮັບເງິນຈາກ **ກ** ກໍຕາມ.

ນອກຈາກຫຼັກຖານ ທີ່ກ່າວມາຂ້າງເທິງນັ້ນແລ້ວ ຍັງຕ້ອງພິຈາລະນາຕື່ມອີກວ່າ **ກ** ໄດ້ມີການທວງໃຫ້ **ຂ** ຊຳລະເງິນ; **ຂ** ໄດ້ຂໍຮ້ອງໃຫ້ມີການເລື່ອນຊຳລະເງິນອອກໄປ; ພ້ອມນັ້ນ ກໍໃຫ້ເບິ່ງສາຍພົວພັນລະຫວ່າງ **ກ** ແລະ **ຂ** ວ່າເປັນຍາດພີ່ນ້ອງ, ເພື່ອນຮ່ວມງານ, ລູກນ້ອງ, ໝູ່ເພື່ອນ...

**4) ປະເດັນຂັດແຍ່ງທີ 2** "**ຂ** ບໍ່ປະຕິບັດສັນຍາ ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງແມ່ນ ຮູບພາບ, ຄລິບສຽງ ຫຼື ວິດີໂອ ຫຼື ພະຍານ ທີ່ຮູ້ເຫັນການຕົກລົງກູ້ຢືມເງິນ ລະຫວ່າງ **ກ** ແລະ **ຂ**; ການທວງເອົາເງິນຄືນຂອງ **ກ**, ການປະຕິເສດຂອງ **ຂ** ຫຼື ການໂຕ້ຖຽງຂອງ **ກ** ແລະ **ຂ** ກ່ຽວກັບການບໍ່ສົ່ງເງິນຄືນ.

**8. ຄຳຕອບ ຕໍ່ຄຳຖາມ 1 (ການກ່າວອ້າງຂອງ ຂ ຮູບແບບ 3)**

ການເກີດສິດທວງຂອງ **ກ** ເພື່ອໃຫ້ **ຂ** ສົ່ງເງິນທີ່ກູ້ຢືມນັ້ນຄືນ ໃນຮູບແບບ 3 ແມ່ນໃຫ້ປະຕິບັດຄືກັນກັບເງື່ອນໄຂ ແລະ ການວິເຄາະຄຳຕອບທີ່ໄດ້ກ່າວໄວ້ໃນຂໍ້ 2.

**9. ຄຳຕອບ ຕໍ່ຄຳຖາມ 2 (ການກ່າວອ້າງຂອງ ຂ ຮູບແບບ 3)**

**9.1 ປະເດັນຂັດແຍ່ງໃນກໍລະນີສຶກສານີ້ມີ ດັ່ງນີ້:**

1) ການຕົກລົງກູ້ຢືມເງິນ ລະຫວ່າງ **ກ** ແລະ **ຂ** (ບໍ່ເປັນປະເດັນຂັດແຍ່ງ);

2) **ກ** ໄດ້ມອບເງິນໃຫ້ **ຂ** (ບໍ່ເປັນປະເດັນຂັດແຍ່ງ);

3) **ຂ** ບໍ່ປະຕິບັດສັນຍາ (ບໍ່ເປັນປະເດັນຂັດແຍ່ງ).

**9.2 ການວິເຄາະຄຳຕອບ**

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ກຳນົດວ່າ "ບັນຫາທີ່ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຊອກຫາຫຼັກຖານ..." ແລະ ຄຳກ່າວອ້າງຂອງ **ຂ** ກໍບໍ່ໄດ້ໂຕ້ແຍ່ງ ພ້ອມນັ້ນ ຍັງຮັບຮູ້ວ່າ ໄດ້ຮັບເງິນ 30,000,000 ກີບ ຈາກ **ກ** ແລະ ກໍໄດ້ເຮັດສັນຍາວ່າ ຈະສົ່ງເງິນຄືນ ແຕ່ເນື່ອງຈາກວ່າ **ຂ** ບໍ່ມີເງິນ ຈຶ່ງບໍ່ສາມາດສົ່ງເງິນຄືນໄດ້. ສະນັ້ນ ທັງ 3 ປະເດັນທີ່ກ່າວມາຂ້າງເທິງ ຈຶ່ງບໍ່ຖືວ່າ ເປັນປະເດັນຂັດແຍ່ງ.

**10. ຄຳຕອບ ຕໍ່ຄຳຖາມ 3 (ການກ່າວອ້າງຂອງ ຂ ຮູບແບບ 3)**

ອີງຕາມປະເດັນດັ່ງກ່າວ **ກ** ແລະ **ຂ** ໄດ້ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຊອກຫາຫຼັກຖານ ຫຼື ສອບສວນ ອີກ ຫຼື ສານອາດທຳການໄກ່ເກ່ຍ ຕາມການສະເໜີຂອງ **ກ** ຫຼື **ຂ** ແລ້ວອອກຄຳສັ່ງປະຕິບັດຜົນຂອງການໄກ່ເກ່ຍນັ້ນ. ສານຈະພິຈາລະນາຕັດສິນ ຕາມມາດຕາ 263 ຂໍ້ 2; 2.3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໝາຍຄວາມວ່າ ຄຳຮ້ອງຟ້ອງຂອງ **ກ** ມີເຫດຜົນພຽງພໍ ໃຫ້ **ຂ** ສົ່ງເງິນທີ່ກູ້ຢືມນັ້ນຄືນໃຫ້ແກ່ **ກ.**

**ກໍລະນີສຶກສາ III**

# ການຮ້ອງຂໍໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບ

# ການຮ້ອງຂໍໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບ (ອາຄານ)
# (ກໍລະນີ ລະເມີດເປົ້າໝາຍການນໍາໃຊ້)

## 1. ກໍລະນີສຶກສາ ແລະ ຄໍາຖາມ

**<u>ການກ່າວອ້າງຂອງ ກ</u>**

ໃນວັນທີ 8 ກັນຍາ 2020 ຂ້ອຍໄດ້ມອບອະສັງຫາລິມະຊັບ (ອາຄານ) ທີ່ເປັນກໍາມະສິດຂອງຕົນໃຫ້ **ຂ** ເຊົ່າເພື່ອນໍາໃຊ້ເປັນທີ່ຢູ່ອາໄສ ໂດຍຕົກລົງເອົາຄ່າເຊົ່າເດືອນ ລະ 5,000,000 ກີບກໍານົດເວລາ 2 ປີ, ໄລຍະເວລາເຊົ່າເລີ່ມແຕ່ ວັນທີ 8 ກັນຍາ 2020 ຫາ ວັນທີ 7 ກັນຍາ 2022.

ພາຍຫຼັງມອບຮັບກັນແລ້ວ **ຂ** ໄດ້ປັບປຸງບາງສ່ວນຂອງອະສັງຫາລິມະຊັບ (ອາຄານ) ໂດຍທັນທີ, ຈາກນັ້ນໄດ້ເລີ່ມປະກອບການເປັນຮ້ານກາເຟນ້ອຍ ທີ່ໃຫ້ບໍລິການເຄື່ອງດື່ມ ແລະ ອາຫານເບົາ ຊຶ່ງຕາມສັນຍານັ້ນ ຂ້ອຍໃຫ້ **ຂ** ເຊົ່າເພື່ອນໍາໃຊ້ເປັນທີ່ຢູ່ອາໄສ ແຕ່ການກະທໍາຂອງ **ຂ** ນີ້ ເປັນການລະເມີດສັນຍາ. ສະນັ້ນ ຈຶ່ງຂໍໃຫ້ຜູ່ກ່ຽວຍົກຍ້າຍອອກຈາກອະສັງຫາລິມະຊັບ (ອາຄານ) ດັ່ງກ່າວ.

ດັ່ງນັ້ນ, ຂ້ອຍຈຶ່ງຮ້ອງຟ້ອງຕໍ່ສານ ໃນວັນທີ 14 ຕຸລາ 2021 ເພື່ອໃຫ້ **ຂ** ຍົກຍ້າຍອອກຈາກອະສັງຫາລິມະຊັບ (ອາຄານ).

**<u>ການກ່າວອ້າງຂອງ ຂ</u>**

ຂ້ອຍຮັບຮູ້ວ່າ ໄດ້ເຮັດສັນຍາເຊົ່າ ອະສັງຫາລິມະຊັບ (ອາຄານ) ນີ້ກັບ **ກ** ແທ້ ພາຍໃຕ້ການຕົກລົງເພື່ອນໍາໃຊ້ເປັນທີ່ຢູ່ອາໄສ.

ພາຍຫຼັງ ໄດ້ເຂົ້າມາຢູ່ ຂ້ອຍກໍໄດ້ຕົບແຕ່ງພາຍໃນຫ້ອງບາງສ່ວນ ແລ້ວກໍໄດ້ເລີ່ມເຮັດເປັນຮ້ານກາເຟນ້ອຍ ຊຶ່ງວັດຖຸປະກອບສ່ວນຫຼາຍ ແມ່ນນໍາໃຊ້ສິ່ງເດີມທີ່ມີຢູ່ໃນອາຄານ. ສ່ວນໂຕ໊ະ, ຕັ່ງຕ່າງໆ ນັ້ນແມ່ນຕົນເປັນຜູ້ຊື້ມາ ແລະ ກໍເປັນສິ່ງທີ່ຍ້າຍອອກໄດ້. ສະນັ້ນ ການນໍາໃຊ້ກໍບໍ່ແຕກຕ່າງຫຍັງຫຼາຍ ກັບການນໍາໃຊ້ກໍລະນີເປັນທີ່ພັກອາໄສ.

ໃນໄລຍະນີ້ ຫຼານຂອງ **ກ** ມີແຜນຈະອອກຈາກບ້ານ ມາຢູ່ເຮືອນສ່ວນຕົວ ແລະ ພວມຊອກຫາເຮືອນຢູ່, ຂ້ອຍຈຶ່ງຄິດວ່າການທີ່ **ກ** ກ່າວອ້າງມານັ້ນ ຄົງຈະເຮັດ ເພື່ອໄລ່ຂ້ອຍອອກຈາກອາຄານເທົ່ານັ້ນ.

**ຄໍາຖາມ 1** ເງື່ອນໄຂທີ່ພາໃຫ້ເກີດສິດທວງໃຫ້ຍົກຍ້າຍອອກຈາກອະສັງລິມະຊັບ (ອາຄານ) ຂອງ **ກ** ຕໍ່ **ຂ** ມີຫຍັງແດ່ ?

**ຄໍາຖາມ 2** ປະເດັນຂັດແຍ່ງໃນກໍລະສຶກສານີ້ ແມ່ນຫຍັງ ?

**ຄໍາຖາມ 3** ເພື່ອພິຈາລະນາ ປະເດັນຂັດແຍ່ງ ກໍລະນີສຶກສານີ້ ຕ້ອງມີຫຼັກຖານຫຍັງແດ່ ?

## 2. ຄໍາຕອບ ຕໍ່ຄໍາຖາມ 1

**2.1 ການເກີດສິດທວງຂອງ ກ ຕໍ່ ຂ ເພື່ອໃຫ້ຍົກຍ້າຍອອກຈາກອະສັງລິມະຊັບ (ອາຄານ)** ຕ້ອງມີເງື່ອນໄຂ ດັ່ງນີ້:

**1) ກ** ແລະ **ຂ** ໄດ້ມີການຕົກລົງເຊົ່າອະສັງຫາລິມະຊັບ;

**2) ກ** ເປັນເຈົ້າກໍາມະສິດຕໍ່ ອະສັງຫາລິມະຊັບ ທີ່ໃຫ້ເຊົ່າ;

**3) ກ** ໄດ້ມອບອະສັງຫາລິມະຊັບຂອງຕົນໃຫ້ ຂ;

**4) ກ** ຍົກເລີກສັນຍາ ເນື່ອງຈາກ ຂ ລະເມີດ ເນື້ອໃນສຳຄັນຂອງສັນຍາ.

## 2.2 ການວິເຄາະຄຳຕອບ

### 2.2.1 ກ່ຽວກັບເງື່ອນໄຂ 1

ພວກເຮົາສາມາດເວົ້າໄດ້ວ່າ "**ກ** ແລະ **ຂ** ໄດ້ຕົກລົງເຊົ່າອະສັງຫາລິມະຊັບ" ເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ຂ** ເພື່ອໃຫ້ຍົກຍ້າຍອອກຈາກອະສັງລິມະຊັບດັ່ງກ່າວ.

ເປັນຫຍັງເງື່ອນໄຂທີ 1 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ການທວງໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບໃນກໍລະນີສຶກສານີ້ ແມ່ນອີງໃສ່ການຍົກເລີກສັນຍາເຊົ່າອະສັງຫາລິມະຊັບ. ຊຶ່ງໃນສັນຍາເຊົ່າອະສັງຫາລິມະຊັບນັ້ນ ຈະມີການຕົກລົງ. ໃນການຕົກລົງນັ້ນຈະປະກອບດ້ວຍ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ ແລະ ກຳນົດເວລາ ເປັນເນື້ອໃນພື້ນຖານຂອງການຕົກລົງເຊົ່າ.

ອີງຕາມ ມາດຕາ 434 ວັກ 1 ຂອງປະມວນກົດໝາຍແພ່ງ ໄດ້ກຳນົດວ່າ "ສັນຍາເຊົ່າຊັບ ແມ່ນການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ໃຫ້ເຊົ່າ ໄດ້ມອບຊັບທີ່ເປັນກຳມະສິດຂອງຕົນ ໃຫ້ຜູ້ເຊົ່າ ນຳໃຊ້ຊົ່ວຄາວ ແລະ ຜູ້ເຊົ່າ ຕ້ອງນຳໃຊ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບສັນຍາ ແລະ ຄຸນປະໂຫຍດຂອງຊັບທີ່ເຊົ່າ, ຈ່າຍຄ່າເຊົ່າຕາມລາຄາ ແລະ ກຳນົດເວລາ ທີ່ໄດ້ຕົກລົງກັນ ໝາຍຄວາມວ່າ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ ແລະ ກຳນົດເວລາ ແມ່ນເນື້ອໃນພື້ນຖານຂອງສັນຍາເຊົ່າຊັບ ທັງເປັນເງື່ອນໄຂ ເພື່ອໃຫ້ຄູ່ສັນຍາຕ້ອງປະຕິບັດ, ຖ້າຫາກຂາດເນື້ອໃນເຫຼົ່ານີ້ ສັນຍາເຊົ່າຊັບກໍຈະບໍ່ເກີດຂຶ້ນໄດ້.

**ຕົວຢ່າງ: ກ** (ຜູ້ໃຫ້ເຊົ່າ) ແລະ **ຂ** (ຜູ້ເຊົ່າ) ໄດ້ຕົກລົງເຊົ່າຫ້ອງແຖວ ເພື່ອເຮັດເປັນຮ້ານສ້ອມແປງລົດຈັກ ໃນລາຄາເດືອນລະ 500,000 ກີບ ແລະ ກຳນົດເວລາ 2 ປີ. ເນື້ອໃນຂອງສັນຍາເຊົ່າລະຫວ່າງ **ກ** ແລະ **ຂ**ໄດ້ກຳນົດກ່ຽວກັບ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ ແລະ ກຳນົດເວລາ ໃນສັນຍາເຊົ່າ ສາມາດເວົ້າໄດ້ວ່າ **ກ** ແລະ **ຂ** ໄດ້ບັນລຸຂໍ້ຕົກລົງກ່ຽວກັບສັນຍາເຊົ່າຊັບ.

### 2.2.2 ກ່ຽວກັບເງື່ອນໄຂ 2

ພວກເຮົາສາມາດເວົ້າໄດ້ວ່າ "**ກ** ເປັນເຈົ້າກຳມະສິດຕໍ່ ອະສັງຫາລິມະຊັບ ທີ່ໃຫ້ເຊົ່າ" ເປັນເງື່ອນໄຂ ທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ຂ** ເພື່ອໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບ.

ເປັນຫຍັງເງື່ອນໄຂ 2 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າເງື່ອນໄຂ 2 ໄດ້ກຳນົດໄວ້ໃນມາດຕາ 434 ວັກ 1 ຂອງປະມວນກົດໝາຍແພ່ງ ວ່າ "ຜູ້ໃຫ້ເຊົ່າ ໄດ້ມອບຊັບທີ່ເປັນກຳມະສິດຂອງຕົນ ໃຫ້ຜູ້ເຊົ່າ ນຳໃຊ້ຊົ່ວຄາວ".

### 2.2.3 ກ່ຽວກັບເງື່ອນໄຂ 3

ພວກເຮົາສາມາດເວົ້າໄດ້ວ່າ "**ກ** ໄດ້ມອບອະສັງຫາລິມະຊັບຂອງຕົນໃຫ້ **ຂ**" ເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ຂ** ເພື່ອໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບ.

ເປັນຫຍັງເງື່ອນໄຂ 3 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າເງື່ອນໄຂ 3 ໄດ້ກຳນົດໄວ້ໃນ ມາດຕາ 434 ວັກ 1 ຂອງປະມວນກົດໝາຍແພ່ງ ວ່າ "ຜູ້ໃຫ້ເຊົ່າ ໄດ້ມອບຊັບທີ່ເປັນກຳມະສິດຂອງຕົນ ໃຫ້ຜູ້ເຊົ່າ ນຳໃຊ້ຊົ່ວຄາວ" ແລະ ອີງໃສ່ ປຶ້ມບົດອະທິບາຍປະມວນກົດໝາຍແພ່ງ ໜ້າ 394 ໄດ້ອະທິບາຍບັນຫານີ້ໄວ້[8].

ເຖິງແມ່ນວ່າການສົ່ງມອບຊັບສິນທີ່ເຊົ່າຈະບໍ່ຖືເປັນເງື່ອນໄຂຂອງສັນຍາເຊົ່າໂດຍກົງ ແຕ່ການທີ່ຊັບສິນນັ້ນໄດ້ຖືກສົ່ງມອບແລ້ວ ຖືເປັນເງື່ອນໄຂພື້ນຖານທີ່ຂາດບໍ່ໄດ້ ທີ່ພາໃຫ້ເກີດສິດທວງໃນການຮ້ອງຂໍໃຫ້ສົ່ງຄືນ (ອອກຈາກ) ອະສັງຫາລິມະຊັບນັ້ນ. ດັ່ງນັ້ນ ບໍ່ວ່າຈະຖືຕາມທັດສະນະໃດ ການສົ່ງມອບຊັບສິນທີ່ເຊົ່າຈຳເປັນຕ້ອງຖືເປັນເງື່ອນໄຂ.

### 2.2.4 ກ່ຽວກັບເງື່ອນໄຂ 4

ພວກເຮົາສາມາດເວົ້າໄດ້ວ່າ "**ກ** ຍົກເລີກສັນຍາ ເນື່ອງຈາກ **ຂ** ໄດ້ລະເມີດເນື້ອໃນສຳຄັນຂອງສັນຍາ" ເປັນເງື່ອນໄຂ ທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ຂ** ເພື່ອໃຫ້ຍົກຍ້າຍອອກຈາກອະສັງຫາລິມະຊັບ. ໃນກໍລະນີສຶກສານີ້ແມ່ນອີງໃສ່ ສັນຍາເຊົ່າອາຄານ ເພື່ອນຳໃຊ້ເປັນທີ່ຢູ່ອາໄສ ແຕ່ **ຂ** ພັດໄດ້ປັບປຸງບາງສ່ວນຂອງອາຄານ ເຮັດເປັນຮ້ານກາເຟນ້ອຍ ຊຶ່ງເປັນການລະເມີດເນື້ອໃນ ທີ່ໄດ້ຕົກລົງໄວ້ໃນສັນຍາ ຈຶ່ງເປັນສາເຫດທີ່ພາໃຫ້ **ກ** ຍົກເລີກສັນຍາ.

ເປັນຫຍັງເງື່ອນໄຂ 3 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ເງື່ອນໄຂ 3 ໄດ້ກຳນົດໄວ້ໃນມາດຕາ 392 ແລະ 395 ວັກ 1 ຂອງປະມວນກົດໝາຍແພ່ງ ດັ່ງນີ້:

ມາດຕາ 392 ໄດ້ກຳນົດວ່າ "ຖ້າຄູ່ສັນຍາຝ່າຍໃດໜຶ່ງ ຫາກບໍ່ປະຕິບັດສັນຍາ ຝ່າຍທີ່ຖືກລະເມີດມີສິດທວງໃຫ້ປະຕິບັດສັນຍາ, ໃຊ້ແທນຄວາມເສຍຫາຍ ຫຼື ຍົກເລີກສັນຍາ" ແລະ ມາດຕາ 395 ວັກ 1 ໄດ້ກຳນົດວ່າ "ໃນກໍລະນີທີ່ມີການລະເມີດເນື້ອໃນສຳຄັນຂອງສັນຍາ, ຄູ່ສັນຍາ ຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ຈະຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້, ເວັ້ນເສຍແຕ່ ຄູ່ສັນຍາຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ".

- ໃນກໍລະນີທີ່ມີການລະເມີດເນື້ອໃນສຳຄັນຂອງສັນຍາເຊົ່າ ຕາມມາດຕາ 395 ຂອງປະມວນກົດໝາຍແພ່ງ ຊຶ່ງຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ຈະຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້ນັ້ນ ຕ້ອງເປັນການລະເມີດເນື້ອໃນສຳຄັນຂອງສັນຍາກ່ຽວກັບ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ, ກຳນົດເວລາ ແລະ ກໍລະນີອື່ນ, ຍ້ອນຫຍັງ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ, ກຳນົດເວລາ ຈຶ່ງເປັນເນື້ອໃນສຳຄັນຂອງສັນຍາ ຕາມມາດຕາ 395 ວັກ 1 ຂອງປະມວນກົດໝາຍແພ່ງ ຍ້ອນວ່າ ອີງຕາມ 2.2 ຂໍ້ 2.2.1 ໄດ້ຂຽນໄວ້ວ່າ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ, ກຳນົດເວລາ ເປັນເນື້ອໃນພື້ນຖານຂອງການຕົກລົງເຊົ່າ.

---

[8] ບົດອະທິບາຍປະມວນກົດໝາຍແພ່ງ ໜ້າ 394

- ຄູ່ສັນຍາ ຝ່າຍທີ່ໄດ້ຮັບຄວາມເສຍຫາຍ ຈະຍົກເລີກສັນຍາແຕ່ຝ່າຍດຽວໄດ້ ກໍຕໍ່ເມື່ອຝ່າຍທີ່ບໍ່ປະຕິບັດສັນຍານັ້ນ ບໍ່ພຽງແຕ່ເປັນການລະເມີດໂດຍທົ່ວໄປ ແຕ່ໄດ້ລະເມີດເນື້ອໃນສຳຄັນທີ່ໄດ້ຕົກລົງໄວ້ໃນສັນຍາດັ່ງກ່າວ. ເຫດຜົນທີ່ກຳນົດແນວນັ້ນ ກໍເພື່ອເປັນການຍົກສູງຄວາມສຳຄັນຂອງສັນຍາ ແລະ ໃຫ້ສັນຍານັ້ນໄດ້ຮັບການປະຕິບັດ. ສະນັ້ນ, ການທີ່ຈະຮູ້ໄດ້ວ່າ ເນື້ອໃນດັ່ງກ່າວເປັນເນື້ອໃນສຳຄັນຂອງສັນຍາ ຫຼື ບໍ່ນັ້ນ ໃຫ້ພິຈາລະນາເບິ່ງວ່າ ການລະເມີດນັ້ນ ເຖິງຂັ້ນທີ່ບໍ່ສາມາດບັນລຸວັດຖຸປະສົງຂອງສັນຍາ ຫຼື ບໍ່ ເພາະວ່າ ເມື່ອມີການລະເມີດເນື້ອໃນດັ່ງກ່າວແລ້ວ ຈະເຮັດໃຫ້ວັດຖຸປະສົງຂອງສັນຍາບໍ່ສາມາດບັນລຸໄດ້ ກໍບໍ່ມີເຫດຜົນທີ່ຈະຕ້ອງຜູກມັດຄູ່ສັນຍາອີກຕໍ່ໄປ.

ສະຫຼຸບ:

1. ຕ້ອງມີການລະເມີດ ກ່ຽວກັບ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ, ກຳນົດເວລາ ແລະ ກໍລະນີອື່ນ.

2. ການລະເມີດຂໍ້ 1 ຕ້ອງເປັນການລະເມີດ ເຖິງຂັ້ນບໍ່ສາມາດບັນລຸວັດຖຸປະສົງຂອງສັນຍາ.

**ຕົວຢ່າງ 1 ກ** (ຜູ້ໃຫ້ເຊົ່າ) ແລະ ຂ (ຜູ້ເຊົ່າ) ໄດ້ຕົກລົງເຊົ່າລົດຕູ້ 15 ບ່ອນນັ່ງ, ແຕ່ໃນເວລາມອບລົດ **ກ** ໄດ້ເອົາລົດຕູ້ 9 ບ່ອນນັ່ງໃຫ້ **ຂ** ຊຶ່ງບໍ່ແມ່ນລົດທີ່ໄດ້ຕົກລົງກັນໃນເບື້ອງຕົ້ນ. ດັ່ງນັ້ນ, **ຂ** ຈຶ່ງທວງໃຫ້ **ກ** ເອົາລົດຕູ້ 15 ບ່ອນນັ່ງ ມາໃຫ້ຕາມທີ່ຕົກລົງກັນໄວ້ໃນສັນຍາ, ແຕ່ **ກ** ປະຕິເສດ ໂດຍອ້າງເຫດຜົນວ່າ ລົດຕູ້ 15 ບ່ອນນັ່ງໄດ້ໃຫ້ຜູ້ອື່ນເຊົ່າໄປແລ້ວ. ກໍລະນີນີ້ **ຂ** ສາມາດຍົກເລີກສັນຍາດັ່ງກ່າວໄດ້ ເນື່ອງຈາກເປັນການລະເມີດກ່ຽວກັບຊັບ ແລະ ບໍ່ສາມາດບັນລຸຕາມວັດຖຸປະສົງຂອງສັນຍາໄດ້ ຊຶ່ງເປັນການລະເມີດເນື້ອໃນສຳຄັນຂອງສັນຍາ.

**ຕົວຢ່າງ 2 ກ** (ຜູ້ໃຫ້ເຊົ່າ) ແລະ **ຂ** (ຜູ້ເຊົ່າ) ໄດ້ຕົກລົງເຊົ່າທີ່ດິນນາ ເພື່ອເຮັດນາປູກເຂົ້າ, ແຕ່ **ຂ** ໄດ້ຂຸດທີ່ດິນນາເຮັດເປັນໜອງປາ ໂດຍບໍ່ແຈ້ງ ແລະ ບໍ່ໄດ້ຮັບການເຫັນດີຈາກ **ກ**. **ກ** ຈຶ່ງທວງໃຫ້ **ຂ** ປັບປຸງທີ່ດິນນາໃຫ້ຢູ່ໃນສະພາບເດີມ ແຕ່ **ຂ** ປະຕິເສດ. ກໍລະນີນີ້ **ກ** ສາມາດຍົກເລີກສັນຍາດັ່ງກ່າວໄດ້, ເນື່ອງຈາກວ່າ **ຂ** ລະເມີດເປົ້າໝາຍການນຳໃຊ້ທີ່ດິນນາ ແລະ ສັນຍາດັ່ງກ່າວບໍ່ສາມາດບັນລຸຕາມວັດຖຸປະສົງທີ່ໄດ້ຕົກລົງກັນໄວ້ ຊຶ່ງເປັນເນື້ອໃນສຳຄັນຂອງສັນຍາ.

**ຕົວຢ່າງ 3 ກ** (ຜູ້ໃຫ້ເຊົ່າ) ແລະ **ຂ** (ຜູ້ເຊົ່າ) ໄດ້ເຮັດສັນຍາເຊົ່າຫ້ອງການ ກຳນົດເວລາ 2 ປີຊຶ່ງເລີ່ມແຕ່ວັນທີ 1 ເມສາ 2020 ຫາ ວັນທີ 31 ມີນາ 2022, ຄ່າເຊົ່າ 30,000 ດອນລາຕໍ່ປີ, ການຈ່າຍຄ່າເຊົ່າໄດ້ຕົກລົງເຮັດເປັນສອງງວດ, ງວດທີໜຶ່ງໃຫ້ຈ່າຍໃນວັນທີ 1 ເມສາ 2020 ຈຳນວນ 30,000 ດອນລາ, ງວດທີສອງ ໃຫ້ຈ່າຍໃນວັນທີ 1 ເມສາ 2021, ເມື່ອເຖິງເວລາຊຳລະຄ່າເຊົ່າງວດທີສອງ **ຂ** ບໍ່ຊຳລະຕາມກຳນົດເວລາ, **ກ** ໄດ້ທວງຄ່າເຊົ່າຫຼາຍຄັ້ງ ແຕ່ **ຂ** ກໍຍັງບໍ່ປະຕິບັດພັນທະຂອງຕົນ ຈົນກາຍເວລາມາເປັນສາມເດືອນ, ເຮັດໃຫ້ **ກ** ເສຍຫາຍ ຈຶ່ງແຈ້ງຍົກເລີກສັນຍາ ແລະ ທວງເອົາຄ່າເຊົ່າ ແຕ່ **ຂ** ຍັງບໍ່ປະຕິບັດພັນທະຂອງຕົນ. ກໍລະນີນີ້ **ກ** ສາມາດຍົກເລີກສັນຍາດັ່ງກ່າວໄດ້ ເນື່ອງຈາກວ່າ **ຂ** ບໍ່ຈ່າຍຄ່າເຊົ່າຕາມກຳນົດເວລາ ແລະ ສັນຍາດັ່ງກ່າວບໍ່ສາມາດບັນລຸຕາມວັດຖຸປະສົງທີ່ໄດ້ຕົກລົງກັນໄວ້ ຊຶ່ງເປັນເນື້ອໃນສຳຄັນຂອງສັນຍາ.

**ຕົວຢ່າງ 4 ກ** (ຜູ້ໃຫ້ເຊົ່າ) ແລະ **ຂ** (ຜູ້ເຊົ່າ) ໄດ້ເຮັດສັນຍາເຊົ່າເຮືອນ 1 ຫຼັງ, ກຳນົດເວລາເຊົ່າ 1 ປີ, ຊຶ່ງເລີ່ມແຕ່ ວັນທີ 1 ມັງກອນ 2021 ຫາ 31 ທັນວາ 2021. ໃນສັນຍາໄດ້ຕົກລົງກັນໄວ້ວ່າ ວັນທີ 1 ມັງກອນ 2021 **ຂ** ສາມາດເຂົ້າຢູ່ອາໄສໃນເຮືອນດັ່ງກ່າວ ແຕ່ **ຂ** ບໍ່ສາມາດເຂົ້າຢູ່ເຮືອນນັ້ນໄດ້ ຍ້ອນວ່າຜູ້ເຊົ່າກ່ອນໜ້ານີ້ບໍ່ຍອມອອກຈາກເຮືອນຫຼັງດັ່ງກ່າວ ຊຶ່ງ **ຂ** ໄດ້ແຈ້ງໃຫ້ **ກ** ຫຼາຍຄັ້ງແລ້ວ ແຕ່ **ກ** ຍັງເມີນເສີຍໂດຍບໍ່ໄດ້ຈັດການເລື່ອງນີ້ ເຮັດໃຫ້ **ຂ** ອັບປະໂຫຍດບໍ່ໄດ້ເຂົ້າຢູ່ອາໄສຕາມກຳນົດເວລາ, ກໍລະນີນີ້ **ຂ** ສາມາດຍົກເລີກສັນຍາດັ່ງກ່າວໄດ້ ເນື່ອງຈາກວ່າ **ກ** ລະເມີດກຳນົດເວລາເຂົ້າຢູ່ເຮືອນທີ່ເຊົ່າ ແລະ ສັນຍາດັ່ງກ່າວບໍ່ສາມາດບັນລຸຕາມວັດຖຸປະສົງທີ່ໄດ້ຕົກລົງກັນໄວ້ ຊຶ່ງເປັນເນື້ອໃນສຳຄັນຂອງສັນຍາ.

**ຕົວຢ່າງ 5 ກ** (ຜູ້ໃຫ້ເຊົ່າ) ແລະ ຂ (ຜູ້ເຊົ່າ) ໄດ້ເຮັດສັນຍາເຊົ່າອາພັດເມັນ 1 ຫ້ອງ ປະກອບດ້ວຍສິ່ງອຳນວຍຄວາມສະດວກຄົບຊຸດ ເປັນຕົ້ນ ເຄື່ອງໃຊ້ເຮືອນຄົວ ແລະ ເຄື່ອງເຟີນິເຈີ ຄົບຊຸດ, ຄ່າເຊົ່າເດືອນລະ 10,000,000 ກີບ, ກຳນົດເວລາເຊົ່າ 1 ປີ ເລີ່ມແຕ່ ວັນທີ 1 ມັງກອນ 2021 ຫາ 31 ທັນວາ 2021. ພາຍຫລັງ **ຂ** ໄດ້ເຂົ້າມາຢູ່ອາພັດເມັນແລ້ວ ໄດ້ສ້າງຄວາມເປິະເປື້ອນ, ເຮັດເຄື່ອງໃຊ້ເຮືອນຄົວ ແລະ ເຟີນີເຈີເປ່ເພ. ຜ່ານມາ **ກ** ໄດ້ແຈ້ງຫຼາຍຄັ້ງໃຫ້ **ຂ** ທຳຄວາມສະອາດ, ສ້ອມແປງເຄື່ອງໃຊ້ເຮືອນຄົວ ແລະ ເຟີນີເຈີ ແຕ່ **ຂ** ບໍ່ປະຕິບັດຕາມການແຈ້ງຂອງ **ກ**. ກໍລະນີນີ້ **ກ** ສາມາດຍົກເລີກສັນຍາດັ່ງກ່າວ ເນື່ອງຈາກວ່າ **ຂ** ລະເມີດສັນຍາເຊົ່າ ໂດຍນຳໃຊ້ຊັບບໍ່ສອດຄ່ອງກັບຄຸນປະໂຫຍດ, ບໍ່ຄຸ້ມຄອງ ແລະ ບໍ່ຮັກສາໃຫ້ຢູ່ໃນສະພາບອັນເໝາະສົມ ແລະ ສັນຍາດັ່ງກ່າວບໍ່ສາມາດບັນລຸຕາມວັດຖຸປະສົງທີ່ໄດ້ຕົກລົງກັນໄວ້ ຊຶ່ງເປັນເນື້ອໃນສຳຄັນຂອງສັນຍາ.

### 2.3 ບັນຫາອື່ນທີ່ຄວນພິຈາລະນາ

#### 2.3.1 ຕໍ່ກັບສັນຍາ ທີ່ເປັນລາຍລັກອັກສອນ ຫຼື ທາງປາກເປົ່າ

ໃນປຶ້ມຄູ່ມືຫົວນີ້ ບໍ່ໄດ້ຖືເອົາສັນຍາເປັນລາຍລັກອັກສອນມາເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງ ທັງທີ່ປະມວນກົດໝາຍແພ່ງ ມາດຕາ 434 ວັກ 6 ກຳນົດໄວ້ ທັງນີ້ ກໍຍ້ອນວ່າ ໄດ້ມີການຈັດຕັ້ງໃນພາກປະຕິບັດຕົວຈິງ ເພື່ອເປັນການແກ້ໄຂບັນຫາທາງແພ່ງ ທີ່ເກີດຈາກສັນຍາເຊົ່າ ທີ່ບໍ່ໄດ້ເຮັດເປັນລາຍລັກອັກສອນ ແຕ່ຖ້າຄູ່ສັນຍາຫາກມີຫຼັກຖານທີ່ໜ້າເຊື່ອຖືມາຢັ້ງຢືນຕໍ່ສານ, ສານກໍຈະພິຈາລະນາຕາມການຮ້ອງຟ້ອງຂອງໂຈດ. ສະນັ້ນ, ໃນປຶ້ມຄູ່ມືຫົວນີ້ ຈຶ່ງບໍ່ເອົາສັນຍາເປັນລາຍລັກອັກສອນມາເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງ ຂອງ **ກ** ຕໍ່ **ຂ**.

ການກຳນົດໃຫ້ສັນຍາເຊົ່າຊັບ ຕ້ອງເຮັດເປັນລາຍລັກອັກສອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 434 ວັກ 6 ຂອງປະມວນກົດໝາຍແພ່ງ. ແມ່ນການເຮັດສັນຍາໃຫ້ຖືກຕ້ອງຕາມກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນການຍົກສູງສະຕິ ທາງດ້ານກົດໝາຍ ໃນການເຮັດສັນຍາ ໃນກໍລະນີທີ່ມີການຮ້ອງຟ້ອງ ຄູ່ສັນຍາສາມາດເອົາສັນຍາທີ່ເປັນລາຍລັກອັກສອນນັ້ນມາຢັ້ງຢືນຕໍ່ສານ.

ແນວໃດກໍຕາມ ເຖິງວ່າປະມວນກົດໝາຍແພ່ງ ມາດຕາ 434 ວັກ 6 ໄດ້ກຳນົດໃຫ້ເຮັດສັນຍາເຊົ່າຊັບເປັນລາຍລັກອັກສອນ, ແຕ່ໃນກໍລະນີສັນຍາເຊົ່າຊັບຫາກເຮັດທາງປາກເປົ່ານັ້ນ ສັນຍາເຊົ່າທາງປາກເປົ່າຈະມີຜົນທາງດ້ານກົດໝາຍໄດ້ກໍຕໍ່ເມື່ອຄູ່ສັນຍາຫາກຮັບຮູ້, ສານກໍບໍ່ຈຳເປັນຊອກຫາຫຼັກຖານ ໂດຍອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ. ບັນຫາທີ່ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຊອກຫາຫຼັກຖານ ຖ້າຫາກການຮັບຮູ້ນັ້ນບໍ່ຂັດກັບຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສັງຄົມ ແລະ ກົດໝາຍ.

### 2.3.2 ຕໍ່ກັບ ການແຈ້ງຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບ

ການແຈ້ງຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບໃນສັນຍາເຊົ່າຊັບ ຈະບໍ່ເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ຂ** ເພື່ອໃຫ້ຍົກຍ້າຍອອກຈາກອາຄານທີ່ເຊົ່າ ເພາະເປັນພັນທະຂອງຜູ້ໃຫ້ເຊົ່າທີ່ຕ້ອງໄດ້ແຈ້ງ. ໃນກໍລະນີ ຜູ້ໃຫ້ເຊົ່າຫາກບໍ່ໄດ້ແຈ້ງ, ຖ້າຫາກມີຄວາມເສຍຫາຍເກີດຂຶ້ນຍ້ອນການບໍ່ໄດ້ແຈ້ງນັ້ນ ຜູ້ໃຫ້ເຊົ່າຕ້ອງຮັບຜິດຊອບດ້ວຍຕົນເອງ ສ່ວນຜູ້ເຊົ່າກໍຈະບໍ່ມີຄວາມຮັບຜິດຊອບແຕ່ຢ່າງໃດ ຕາມມາດຕາ 434 ວັກ 4 ແລະ 5 ຂອງປະມວນກົດໝາຍແພ່ງ.

### 2.3.3 ຕໍ່ກັບ ມາດຕາ 370 ຂອງປະມວນກົດໝາຍແພ່ງ

ພວກເຮົາສາມາດເວົ້າໄດ້ວ່າ ຊັບ, ເປົ້າໝາຍການນຳໃຊ້, ຄ່າເຊົ່າ ແລະ ກຳນົດເວລາ ເປັນເນື້ອໃນສຳຄັນຂອງສັນຍາເຊົ່າຊັບ (ອາຄານ). ສ່ວນເນື້ອໃນອື່ນທີ່ກຳນົດໄວ້ໃນມາດຕາ 370 ເຊັ່ນ ສະຖານທີ່ເຮັດສັນຍາ, ຊື່, ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາ, ການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ ນັ້ນ ບໍ່ເປັນເງື່ອນໄຂ ທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ຂ** ເພື່ອໃຫ້ຍົກຍ້າຍອອກຈາກອາຄານ.

ດ້ວຍສາເຫດໃດ ເນື້ອໃນເຫຼົ່ານັ້ນຈຶ່ງບໍ່ເປັນເງື່ອນໄຂທີ່ພາໃຫ້ເກີດສິດທວງ ?

ຍ້ອນວ່າ ເນື້ອໃນດັ່ງກ່າວບໍ່ແມ່ນປັດໄຈພື້ນຖານຂອງສັນຍາເຊົ່າຊັບ. ຕົວຢ່າງ ເມື່ອບຸກຄົນໃດໜຶ່ງມາເຊົ່າເຮືອນ ຄ່າເຊົ່າເດືອນລະ 1,000,000 ກີບ, ສັນຍາດັ່ງກ່າວກໍຈະມີຜົນໃຊ້ໄດ້ ເຖິງແມ່ນວ່າ ຈະບໍ່ກຳນົດ ສະຖານທີ່ເຮັດສັນຍາ, ສະຖານທີ່ປະຕິບັດສັນຍາ ລວມທັງບ່ອນຢູ່ຂອງຄູ່ສັນຍາ, ວັນທີເຮັດສັນຍາ ແລະ ເນື້ອໃນອື່ນກໍຕາມ. ເຖິງຢ່າງໃດກໍດີ, ການປ້ອງກັນບໍ່ໃຫ້ມີບັນຫາເກີດຂຶ້ນໃນອະນາຄົດໃນການເຮັດສັນຍານັ້ນ ຕ້ອງກຳນົດເນື້ອໃນລະອຽດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 370 ຂອງປະມວນກົດໝາຍແພ່ງ ຊຶ່ງໃນເວລາບຸກຄົນໃດໜຶ່ງຍື່ນຄຳຮ້ອງຟ້ອງກໍເປັນເລື່ອງປົກກະຕິ ທີ່ບຸກຄົນນັ້ນຈະຕ້ອງຢືນຢັນ ວັນທີເຮັດສັນຍາ ເພື່ອພິສູດຄວາມຖືກຕ້ອງຂອງສັນຍາ.

## 3. ຄຳຕອບ ຕໍ່ຄຳຖາມ 2

### 3.1 ປະເດັນຂັດແຍ່ງ ໃນກໍລະນີສຶກສານີ້ ມີດັ່ງນີ້:

**1) ກ** ແລະ **ຂ** ໄດ້ມີການຕົກລົງເຊົ່າອະສັງຫາລິມະຊັບ (ບໍ່ເປັນປະເດັນຂັດແຍ່ງ)

**2) ກ** ເປັນເຈົ້າກຳມະສິດຕໍ່ ອະສັງຫາລິມະຊັບ ທີ່ໃຫ້ເຊົ່າ (ບໍ່ເປັນປະເດັນຂັດແຍ່ງ)

**3) ກ** ໄດ້ມອບອະສັງຫາລິມະຊັບຂອງຕົນໃຫ້ **ຂ** (ບໍ່ເປັນປະເດັນຂັດແຍ່ງ)

**4) ກ** ຍົກເລີກສັນຍາ ເນື່ອງຈາກ **ຂ** ລະເມີດ ເນື້ອໃນສຳຄັນຂອງສັນຍາ (ເປັນປະເດັນຂັດແຍ່ງ)

**3.2 ການວິເຄາະຄຳຕອບ**

**3.2.1 ປະເດັນທີ່ວ່າ "ກ** ແລະ **ຂ** ໄດ້ມີການຕົກລົງເຊົ່າອະສັງຫາລິມະຊັບ"

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ໄດ້ກຳນົດໄວ້ວ່າ "ບັນຫາທີ່ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຊອກຫາຫຼັກຖານ ຖ້າຫາກການຮັບຮູ້ນັ້ນບໍ່ຂັດກັບຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສັງຄົມ ແລະ ກົດໝາຍ" ແລະ ຄຳກ່າວອ້າງຂອງ **ຂ** ກໍບໍ່ໄດ້ໂຕ້ແຍ່ງກ່ຽວກັບການຕົກລົງເຊົ່າອະສັງຫາລິມະຊັບ. ດັ່ງນັ້ນ, ປະເດັນທີ່ວ່າ ການຕົກລົງເຊົ່າອະສັງຫາລິມະຊັບ ຈຶ່ງບໍ່ຖືວ່າເປັນປະເດັນຂັດແຍ່ງລະຫວ່າງ **ກ** ແລະ **ຂ**.

**3.2.2 ປະເດັນທີ່ວ່າ "ກ ເປັນເຈົ້າກຳມະສິດຕໍ່ຊັບ ທີ່ໃຫ້ເຊົ່າ"**

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ບັນຫາທີ່ ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຕ້ອງຊອກຫາຫຼັກຖານ..." ແລະ ຄຳກ່າວອ້າງຂອງ **ຂ** ກໍບໍ່ໄດ້ໂຕ້ແຍ່ງກ່ຽວກັບກຳມະສິດຕໍ່ຊັບທີ່ໃຫ້ເຊົ່າ. ດັ່ງນັ້ນ, ປະເດັນທີ່ວ່າ **ກ** ເປັນເຈົ້າກຳມະສິດຕໍ່ ຊັບທີ່ໃຫ້ເຊົ່າ ຈຶ່ງບໍ່ຖືວ່າເປັນປະເດັນຂັດແຍ່ງລະຫວ່າງ **ກ** ແລະ **ຂ**.

**3.2.3 ປະເດັນທີ່ວ່າ "ກ** ໄດ້ມອບອະສັງຫາລິມະຊັບຂອງຕົນໃຫ້ **ຂ"**

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ບັນຫາທີ່ ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຕ້ອງຊອກຫາຫຼັກຖານ..." ແລະ ຄຳກ່າວອ້າງຂອງ **ຂ** ກໍບໍ່ໄດ້ໂຕ້ແຍ່ງກ່ຽວກັບການມອບອະສັງຫາລິມະຊັບທີ່ຕົນເຊົ່າ. ດັ່ງນັ້ນ, ປະເດັນທີ່ວ່າ **ກ ໄດ້ມອບອະສັງຫາລິມະຊັບຂອງຕົນທີ່ເປັນເປົ້າໝາຍໃຫ້ ຂ** ເຊົ່າ ຈຶ່ງບໍ່ຖືວ່າເປັນປະເດັນຂັດແຍ່ງລະຫວ່າງ **ກ** ແລະ **ຂ**.

**3.2.4 ປະເດັນທີ່ວ່າ "ກ ຍົກເລີກສັນຍາ ເນື່ອງຈາກ ຂ ລະເມີດ ເນື້ອໃນສຳຄັນຂອງສັນຍາ"**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ໄດ້ກຳນົດໄວ້ວ່າ " ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ ແລະ ອີງຕາມມາດຕາ 395 ຂອງປະມວນກົດໝາຍແພ່ງ ໄດ້ກຳນົດໄວ້ວ່າ "ໃນກໍລະນີ ທີ່ມີການລະເມີດເນື້ອໃນສຳຄັນຂອງສັນຍາ, ຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມເສັຍປະໂຫຍດ ຈະຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້, ເວັ້ນເສຍແຕ່ຄູ່ສັນຍາຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ", ຖ້າຫາກພິຈາລະນາຕາມຄຳກ່າວອ້າງຂອງ **ກ** ນັ້ນ **ຂ** ໄດ້ລະເມີດເນື້ອໃນສຳຄັນຂອງສັນຍາ ເນື່ອງຈາກວ່າ **ກ** ມອບອາຄານທີ່ເປັນກຳມະສິດຂອງຕົນໃຫ້ **ຂ** ເຊົ່າເພື່ອນຳໃຊ້ເປັນທີ່ຢູ່ອາໄສ ແຕ່ພາຍຫຼັງມອບຮັບກັນແລ້ວ **ຂ** ໄດ້ປັບປຸງບາງສ່ວນຂອງອາຄານໂດຍທັນທີ ແລ້ວກໍໄດ້ເລີ່ມປະກອບການເປັນຮ້ານກາເຟນ້ອຍ. ແຕ່ຖ້າ

ພິຈາລະນາຄຳກ່າວອ້າງຂອງ **ຂ** ເຫັນວ່າ **ຂ** ບໍ່ໄດ້ລະເມີດ ເປັນພຽງການຕົບແຕ່ງພາຍໃນຫ້ອງບາງສ່ວນແລ້ວກໍເຮັດເປັນຮ້ານກາເຟນ້ອຍ ຊຶ່ງວັດຖຸທີ່ປະກອບສ່ວນຫຼາຍໄດ້ນຳໃຊ້ສິ່ງເດີມທີ່ມີຢູ່ໃນອາຄານ. ສ່ວນໂຕະ, ຕັ່ງຕ່າງໆ ນັ້ນ ແມ່ນຕົນເປັນຜູ້ຊື້ມາ ແລະ ກໍເປັນສິ່ງທີ່ສາມາດຍ້າຍອອກໄດ້ທັນທີ ການນຳໃຊ້ກໍບໍ່ແຕກຕ່າງຫຍັງຫຼາຍກັບການນຳໃຊ້ເປັນທີ່ພັກອາໄສ ເຫັນວ່າ ຕໍ່ກັບການກ່າວອ້າງຂອງ **ກ** ເປັນການລະເມີດເນື້ອໃນສຳຄັນຂອງສັນຍາ ແລະ ການກ່າວອ້າງຂອງ **ຂ** ທີ່ປະຕິເສດບໍ່ໄດ້ລະເມີດ ຈຶ່ງເປັນປະເດັນຂັດແຍ່ງ.

ສະນັ້ນ, ປະເດັນຂັດແຍ່ງແມ່ນ **ກ** ສາມາດຍົກເລີກສັນຍາເຊົ່າໄດ້ ຫຼື ບໍ່ ໂດຍອີງໃສ່ເຫດຜົນທີ່ວ່າ **ຂ** ລະເມີດເນື້ອໃນສຳຄັນຂອງສັນຍາ.

## 4. ຄຳຕອບ ຕໍ່ຄຳຖາມ 3

### 4.1 ຫຼັກຖານ ເພື່ອພິຈາລະນາ ປະເດັນຂັດແຍ່ງ ມີດັ່ງນີ້:

ປະເດັນຂັດແຍ່ງ ແມ່ນ “**ກ** ສາມາດຍົກເລີກສັນຍາເຊົ່າໄດ້ ຫຼື ບໍ່ ເນື່ອງຈາກ **ຂ** ໄດ້ລະເມີດເນື້ອໃນສຳຄັນຂອງສັນຍາ” ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງ ແມ່ນ ເອກະສານ (ສັນຍາເຊົ່າ), ບົດບັນທຶກການໄກ່ເກ່ຍ (ການກວດກາຕີລາຄາຄວາມເສຍຫາຍຂອງອາຄານ), ຮ້ານກາເຟ, ຮູບພາບການຕໍ່ເຕີມ.

### 4.2 ການວິເຄາະຄຳຕອບ

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 “ ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ”. ດັ່ງນັ້ນ, **ກ** ຕ້ອງໄດ້ຊອກຫຼັກຖານມາຢັ້ງຢືນຕໍ່ປະເດັນຂັດແຍ່ງ ຊຶ່ງອີງຕາມມາດຕາ 101 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 “ໂຈດ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ, ຄຳຮ້ອງຂໍຂອງຕົນ ແລະ ມາດຕາ 102 ໂຈດ ແລະ ຈຳເລີຍ ຫຼື ບຸກຄົນທີສາມ ຕ້ອງຊອກຫາ, ນຳສະເໜີ ຂໍ້ມູນ ຫຼັກຖານ ທີ່ເຊື່ອຖືໄດ້ ແລະ ບັນຫາທາງດ້ານກົດໝາຍຕໍ່ສານ ເພື່ອພິສູດຂໍ້ເທັດຈິງ ຫຼື ຄວາມເປັນຈິງໃນປະເດັນ, ບັນຫາທີ່ຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ່ງຕໍ່ສານ... ສະນັ້ນ, **ກ** ຕ້ອງນຳຫຼັກຖານມາຢັ້ງຢືນຕໍ່ສານ ເພື່ອເປັນການພິສູດຄຳກ່າວອ້າງຂອງຕົນ ແລະ ໂດຍອີງໃສ່ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ມາດຕາ 95 “ຫຼັກຖານໃນຄະດີທາງແພ່ງ ແມ່ນ ບັນດາຂໍ້ມູນ ເປັນຕົ້ນ ວັດຖຸ, ເອກະສານ, ບຸກຄົນ ທີ່ພົວພັນກັບຄະດີ “ທີ່ມາຂອງຫຼັກຖານ ຂໍ້ 1. ເອກະສານ, ວັດຖຸສິ່ງຂອງ ແລະ ສຽງ, ຂໍ້ 3 ການໃຫ້ ການຂອງຄູ່ຄວາມ, ບຸກຄົນທີສາມ, ພະຍານໃນຄະດີ” ແລະ ອີງຕາມມາດຕາ 101 “ ຄູ່ຄວາມ ແລະ ບຸກຄົນທີສາມມີພັນທະຊອກຫາຫຼັກຖານໃຫ້ແກ່ສານ”. ດັ່ງນັ້ນ, ຫຼັກຖານທີ່ **ກ** ຄວນນຳມາ ສະເໜີຕໍ່ສານຈຶ່ງປະກອບດ້ວຍ:

ອີງຕາມມາດຕາ 97 ວັກສອງ 2 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ກໍານົດວ່າ "ຫຼັກຖານທາງດ້ານວັດຖຸ ໄດ້ມາຈາກວັດຖຸສິ່ງຂອງ ທີ່ພົວພັນກັບຂໍ້ຂັດແຍ່ງ ເຊັ່ນ ພາຫະນະ, ຮົ້ວ, ຜົນລະປູກ ແລະ ວັດຖຸສິ່ງຂອງອື່ນ", ໃນກໍລະນີນີ້ ຫຼັກຖານທາງດ້ານວັດຖຸ ໝາຍເຖິງ ຮ້ານກາເຟ;

ອີງຕາມມາດຕາ 97 ວັກສາມ 3 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ກໍານົດວ່າ "ຫຼັກຖານທາງດ້ານເອກະສານ ໄດ້ມາຈາກໜັງສືຢັ້ງຢືນກໍາມະສິດ, ສັນຍາ, ຮູບພາບ, ບັນຊີຊັບສິນ ແລະ ເອກະສານອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງ, ໃນກໍລະນີນີ້ ຫຼັກຖານທາງດ້ານ ເອກະສານ ໝາຍເຖິງ ສັນຍາເຊົ່າອະສັງຫາລິມະຊັບ, ຮູບພາບການຕໍ່ເຕີມ ແລະ ບົດບັນທຶກການໄກ່ເກ່ຍ (ການກວດກາຕີລາຄາຄວາມເສຍຫາຍຂອງອາຄານ);

ອີງຕາມມາດຕາ 97 ວັກສີ່ 4 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ກໍານົດວ່າ " ຫຼັກຖານ ທາງດ້ານບຸກຄົນ ໄດ້ມາຈາກຄໍາໃຫ້ການຂອງຄູ່ຄວາມ, ຄໍາໃຫ້ການ ແລະ ການຢັ້ງຢືນຂອງພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດໍາເນີນຄະດີ ທີ່ພົວພັນກັບຂໍ້ຂັດແຍ່ງ" ໃນກໍລະນີນີ້ ຫຼັກຖານທາງດ້ານບຸກຄົນ ໝາຍເຖິງ ບຸກຄົນຜູ້ໄດ້ຮູ້ເຫັນການຕົກລົງເຊົ່າອະສັງຫາລິມະຊັບລະຫວ່າງ **ກ** ແລະ **ຂ** ເຊັ່ນ ຜູ້ເຂົ້າຮ່ວມ ເປັນພະຍານໃນການເຊັນສັນຍາ, ນາຍ ບ້ານ, ນາຍທະບຽນສານ.

## ກໍລະນີສຶກສາ IV

# ການທວງເອົາການໃຊ້ແທນຄ່າເສຍຫາຍ

# ການທວງເອົາການໃຊ້ແທນຄ່າເສຍຫາຍ

**1. ກໍລະນີສຶກສາ ແລະ ຄໍາຖາມ**

**<u>ການກ່າວອ້າງຂອງ ກ</u>**

ໃນວັນທີ 27 ມິຖຸນາ 2021 ເວລາ 15 ໂມງ **ງ** ໄດ້ຂັບລົດເກັງ ແຄມເມີລີ ດ້ວຍຄວາມໄວເກີນຂອບເຂດ ມາແຕ່ທາງໂພນທັນ ມຸ່ງໜ້າໄປສາມແຍກໂພນປ່າເປົ້າ ພໍມາຮອດໜ້າໂຮງງານແຫ່ງໜຶ່ງ **ງ** ກໍໄດ້ກົ້ມຈັບເອົາໂທລະສັບທີ່ຕົກຢູ່ພື້ນຂຶ້ນມາເພື່ອຮັບສາຍ ເລີຍເຮັດໃຫ້ລົດເສຍຫຼັກອອກຈາກຊ່ອງຈະລາຈອນ ແລ້ວໄປຕໍາເອົາ **ຄ** ຜູ້ເປັນລູກຊາຍ ແລະ ເຈືອກໄປຕໍາເອົາ **ຂ** ຜູ້ເປັນຜົວຂອງຂ້າພະເຈົ້າທີ່ເປັນພະນັກງານຮັກສາຄວາມປອດໄພຢູ່ໂຮງງານແຫ່ງນັ້ນຄືກັນ ຈາກນັ້ນ ກໍເຈືອກໄປຕໍາເອົາລົດຈັກຂອງ **ຂ** ທີ່ຈອດໄວ້ໃກ້ປ້ອມຍາມນັ້ນ; ເຫດການເກີດຂຶ້ນຄັ້ງນີ້ໄດ້ເຮັດໃຫ້ **ຄ** ຜູ້ເປັນລູກຊາຍຂອງຂ້າພະເຈົ້າໄດ້ຮັບບາດເຈັບສາຫັດ ເຂົ້າປິ່ນປົວຢູ່ໂຮງໝໍ ເປັນເວລາ 5 ວັນ ແລ້ວເສຍຊີວິດໃນເວລາຕໍ່ມາ, ສ່ວນ **ຂ** ຜູ້ເປັນຜົວຂອງຂ້າພະເຈົ້າ ກໍໄດ້ຮັບບາດເຈັບສາຫັດ ແຂນຫັກເບື້ອງຂວາ, ຂາຫັກເບື້ອງຊ້າຍ, ກະດູກກະໂພກແຕກ ເຂົ້າປິ່ນປົວຢູ່ໂຮງໝໍ ເປັນເວລາ 6 ເດືອນ ແລະ ເສຍອົງຄະ, ສ່ວນລົດຈັກນັ້ນໄດ້ເປ່ເພລີມຄວນ.

ໃນວັນທີ 25 ທັນວາ 2021 ສານປະຊາຊົນຂັ້ນຕົ້ນນະຄອນຫຼວງວຽງຈັນ ໄດ້ພິຈາລະນາຕັດສີນບອກວ່າ **ງ** ໄດ້ກະທໍາຜິດໃນສະຖານລະເມີດກົດຈະລາຈອນພາໃຫ້ເກີດອຸບປະຕິເຫດ ແລະ ໃຫ້ **ງ** ໃຊ້ແທນຄ່າປິ່ນປົວ, ຄ່າມ້ຽນສົບສິ່ງສະການ ແລະ ຄ່າປົວແປງຈິດໃຈຂອງ **ຄ** ຜູ້ເສຍຊີວິດແລ້ວ.

ສ່ວນຄ່າເສຍຫາຍທາງແພ່ງກ່ຽວກັບ **ຂ** ຄະນະສານບໍ່ສາມາດພິຈາລະນາໃຫ້ໄດ້ ເນື່ອງຈາກວ່າ **ຂ** ຍັງສືບຕໍ່ປິ່ນປົວ ຈຶ່ງຍັງບໍ່ທັນໄດ້ລວບລວມກ່ຽວກັບຜົນເສຍຫາຍ. ສະນັ້ນ ການໃຊ້ແທນຄ່າເສຍຫາຍຂອງ **ຂ** ແມ່ນໃຫ້ດໍາເນີນການແກ້ໄຂທາງແພ່ງ.

ຕົກມາຮອດວັນທີ 15 ກຸມພາ 2022, ຂ້າພະເຈົ້າຈຶ່ງໄດ້ທວງໃຫ້ **ງ** ໃຊ້ແທນຄ່າເສຍຫາຍ ແລະຄ່າໃຊ້ຈ່າຍອື່ນໆ ຂອງ **ຂ**, ແຕ່ **ງ** ບໍ່ຍອມຈ່າຍ. ດັ່ງນັ້ນ, ໃນວັນທີ 27 ມິຖຸນາ 2022 ຂ້າພະເຈົ້າຈຶ່ງຮ້ອງຟ້ອງຕໍ່ສານເພື່ອທວງໃຫ້ **ງ** ໃຊ້ແທນຄ່າເສຍຫາຍ ຄື:

- ຄ່າສູ່ຂວັນ ຂອງຜູ້ເສຍອົງຄະ 5,000,000 ກີບ;
- ຄ່າປິ່ນປົວຢູ່ໂຮງໝໍ 6 ເດືອນ ຕາມບິນຢາຕົວຈິງ 40,000,000 ກີບ;
- ຄ່າປ່ອຍການ 18,000,000 ກີບ ເນື່ອງຈາກວ່າ ພາຍຫຼັງເກີດອຸບປະຕິເຫດນັ້ນ ທາງບໍລິສັດໄດ້ຢຸດຈ່າຍເງິນເດືອນຂອງຜູ້ກ່ຽວ ເປັນເວລາ 1 ປີ ຊຶ່ງເງິນຂອງຜູ້ກ່ຽວທີ່ໄດ້ຮັບແຕ່ລະເດືອນແມ່ນ 1,500,000 ກີບ;
- ຄ່າເສຍອົງຄະ 100,000,000 ກີບ ຊຶ່ງປັດຈຸບັນຜູ້ກ່ຽວກໍບໍ່ສາມາດອອກແຮງງານໄດ້;
- ຂໍໃຫ້ຊື້ລົດຈັກຄັນໃໝ່ (ມືໜຶ່ງ) ທົດແທນຄັນເກົ່າ;
- ຄ່າໃຊ້ຈ່າຍອື່ນ 2,000,000 ກີບ.

**ການກ່າວອ້າງຂອງ ງ**

ຂ້າພະເຈົ້າຍອມຮັບວ່າອຸບປະຕິເຫດ ທີ່ເກີດຂຶ້ນຍ້ອນຄວາມປະໝາດຂອງຕົນແທ້. ສຳລັບຄ່າເສຍຫາຍຂອງ **ຄ** ນັ້ນ ຂ້າພະເຈົ້າ ແມ່ນເຫັນດີປະຕິບັດຕາມຄຳຕັດສິນຂອງສານ, ສ່ວນຄ່າເສຍຫາຍຂອງ **ຂ** ນັ້ນ ຂ້າພະເຈົ້າກໍໄດ້ຈ່າຍຄ່າປິ່ນປົວໃນເບື້ອງຕົ້ນໄປແລ້ວ ຈຳນວນ 7,000,000 ກີບ ຊຶ່ງມີໃບບິນລະອຽດຕາມທີ່ໄດ້ຄັດຕິດມາພ້ອມນີ້. ການທີ່ **ກ** ໄດ້ຮຽກຮ້ອງຄ່າປິ່ນປົວ, ຄ່າເສຍອົງຄະ ແລະ ຂໍໃຫ້ຊື້ລົດຈັກຄັນໃໝ່ (ມືໜຶ່ງ) ນັ້ນ ເຫັນວ່າເປັນການຮຽກຮ້ອງຄ່າເສຍຫາຍທີ່ ສູງເກີນຄວາມເສຍຫາຍຕົວຈິງ. ສະນັ້ນ ຂ້າພະເຈົ້າບໍ່ສາມາດໃຊ້ແທນໄດ້ ແລະ ລົດຈັກນັ້ນກໍຂໍສ້ອມແປງໃຫ້ຢູ່ໃນສະພາບເດີມ.

**ຄຳຖາມ 1** ເງື່ອນໄຂທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ງ** ເພື່ອທວງເອົາການໃຊ້ແທນຄ່າເສຍຫາຍມີຫຍັງແດ່ ?

**ຄຳຖາມ 2** ປະເດັນຂັດແຍ່ງຂອງກໍລະນີສຶກສານີ້ ແມ່ນຫຍັງ ?

**ຄຳຖາມ 3** ເພື່ອພິຈາລະນາປະເດັນຂັດແຍ່ງໃນກໍລະນີສຶກສານີ້ ຕ້ອງມີຫຼັກຖານຫຍັງແດ່ ?

**ຄຳຖາມ 4** ຍ້ອນເຫດຜົນໃດ **ກ** ຈຶ່ງສາມາດນຳໃຊ້ສິດທວງຂອງ **ຂ** ໃນການຮ້ອງຟ້ອງເພື່ອທວງໃຫ້ **ງ** ໃຊ້ແທນຄ່າເສຍຫາຍ ?

## 2. ຄຳຕອບ ຕໍ່ຄຳຖາມ 1

### 2.1 ການເກີດສິດທວງຂອງ ກ ຕໍ່ ງ ເພື່ອໃຫ້ໃຊ້ແທນຄ່າເສຍຫາຍຕ້ອງມີເງື່ອນໄຂ ດັ່ງນີ້[9]:

1) ມີການກະທຳ ດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ;
2) ມີຄວາມເສຍຫາຍ;
3) ມີສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ;
4) ມີຄ່າເສຍຫາຍ;

### 2.2 ການວິເຄາະຄຳຕອບ

#### 2.2.1 ກ່ຽວກັບເງື່ອນໄຂ 1

ພວກເຮົາສາມາດເວົ້າໄດ້ວ່າ "ມີການກະທຳ ດ້ວຍຄວາມບໍ່ລະມັດລະວັງທີ່ຂັດກັບກົດໝາຍ" ເປັນເງື່ອນໄຂ ໜຶ່ງ ທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ງ** ເພື່ອໃຫ້ໃຊ້ແທນຄ່າເສຍຫາຍ ໂດຍສະເພາະໃນກໍລະນີສຶກສານີ້ ການທີ່ **ງ** ໄດ້ຂັບລົດດ້ວຍຄວາມໄວເກີນຂອບເຂດ ແລະ ໄດ້ກົ້ມຈັບເອົາໂທລະສັບທີ່ຕົກຢູ່ພື້ນຂຶ້ນມາ ເພື່ອຮັບສາຍ ເລີຍເຮັດໃຫ້ລົດເສຍຫຼັກອອກຈາກຊ່ອງຈະລາຈອນ ແມ່ນການກະທຳດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ.[10]

---

[9] ໃນພາກປະຕິບັດຕົວຈິງ ການພິຈາລະນາ ການໃຊ້ແທນຄ່າເສຍຫາຍທາງແພ່ງໃນກໍລະນີນີ້ ເງື່ອນໄຂ 1-3 ຈະບໍ່ນຳມາຄົ້ນຄວ້າອີກເນື່ອງຈາກວ່າ ຄະນະສານອາຍາມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ບອກວ່າ **ງ** ມີຄວາມຜິດໃນຂໍ້ຫາ ລະເມີດກົດຈະລາຈອນພາໃຫ້ເກີດອຸບປະຕິເຫດ. ແຕ່ເພື່ອຈຸດປະສົງຂອງການສຶກສາ ຈຶ່ງນຳມາຄົ້ນຄວ້າທັງ 4 ເງື່ອນໄຂ.

[10] ກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບປັບປຸງປີ 2012, ມາດຕາ 51 ຂໍ້ 2, ຂໍ້ 4 ແລະ ປະມວນກົດໝາຍອາຍາ ປີ 2017,

ເປັນຫຍັງເງື່ອນໄຂ 1 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ການກະທຳ ດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ ແມ່ນການລະເມີດ ທີ່ໄດ້ກຳນົດໄວ້ໃນມາດຕາ 472 ຂອງປະມວນກົດໝາຍແພ່ງ ວ່າ "ການລະເມີດ ແມ່ນການກະທຳ ຫຼື ການເມີນເສີຍ ໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ ຂອງບຸກຄົນໃດໜຶ່ງ ທີ່ຂັດກັບກົດໝາຍ ແລະ ລະບຽບການ...".

**ຕົວຢ່າງ 1**: **ກ** ເປັນພະນັກງານຄວບຄຸມເຄນ ຂອງບໍລິສັດຮັບເໝົາກໍ່ສ້າງແຫ່ງໜຶ່ງ ໄດ້ໃຊ້ເຄນທີ່ເກົ່າແກ່ ແລະ ຂາດການບຳລຸງຮັກສາ ຍົກແຜ່ນເບຕົງ ຊຶ່ງເຄນດັ່ງກ່າວສາມາດຍົກນ້ຳໜັກສູງສຸດໄດ້ພຽງແຕ່ 5 ໂຕນ, ໃນເວລາຈະໃຊ້ເຄນຍົກແຜ່ນເບຕົງ **ກ** ຄິດວ່ານ້ຳໜັກເກີນພຽງເລັກໜ້ອຍ ຄົງຈະບໍ່ມີບັນຫາຫຍັງ ລາວຈຶ່ງໃຊ້ເຄນດັ່ງກ່າວ ຍົກແຜ່ນເບຕົງທີ່ມີນ້ຳໜັກເກີນ 5 ໂຕນ ເຮັດໃຫ້ເຄນຍົກນັ້ນຫັກລົ້ມໃສ່ເຮືອນຂອງ **ຂ** ໄດ້ຮັບຄວາມເສຍຫາຍຢ່າງຫຼວງຫຼາຍ. ການທີ່ **ກ** ນຳໃຊ້ເຄນທີ່ມີສະພາບເກົ່າແກ່ ໂດຍບໍ່ຄຳນຶງເຖິງນ້ຳໜັກຂອງແຜ່ນເບຕົງ ຈຶ່ງເຮັດໃຫ້ເຄນນັ້ນຫັກ ແລ້ວສ້າງຄວາມເສຍຫາຍ; ການກະທຳຂອງ **ກ** ເປັນການກະທຳດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ[11].

**ຕົວຢ່າງ 2:** **ກ** ຂັບລົດບັນທຸກເຄື່ອງທີ່ມີນ້ຳໜັກ 35 ໂຕນ, ເມື່ອແລ່ນມາຮອດຂົວແຫ່ງໜຶ່ງຢູ່ແຂວງວຽງຈັນ ຊຶ່ງມີປ້າຍຫ້າມ ນ້ຳໜັກບໍ່ເກີນ 20 ໂຕນ ແຕ່ **ກ** ໄດ້ຂັບລົດແລ່ນຜ່ານຂົວ ເຮັດໃຫ້ຂົວດັ່ງກ່າວຫັກ. ສະນັ້ນ, ພະແນກຄົມມະນາຄົມຂົນສົ່ງແຂວງວຽງຈັນ ຈຶ່ງໄດ້ທວງໃຫ້ **ກ** ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຕາມມາດຕາ 472 ຂອງປະມວນກົດໝາຍແພ່ງ.

### 2.2.2 ກ່ຽວກັບເງື່ອນໄຂ 2

ພວກເຮົາສາມາດເວົ້າໄດ້ວ່າ ມີຄວາມເສຍຫາຍ" ເປັນເງື່ອນໄຂໜຶ່ງທີ່ພາໃຫ້ເກີດສິດທວງຂອງ **ກ ຕໍ່ ງ** ເພື່ອໃຫ້ໃຊ້ແທນຄ່າເສຍຫາຍ.

ເປັນຫຍັງເງື່ອນໄຂ 2 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ຄວາມເສຍຫາຍໄດ້ເກີດຂຶ້ນຈາກ ການກະທຳ ດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ ຂອງ **ງ** ນັ້ນ ຖ້າອີງຕາມປະມວນກົດໝາຍແພ່ງ ມາດຕາ 472 ແລ້ວ ຜູ້ລະເມີດຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### 2.2.3 ກ່ຽວກັບເງື່ອນໄຂ 3

ພວກເຮົາສາມາດເວົ້າໄດ້ວ່າ "ມີສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ" ເປັນເງື່ອນໄຂໜຶ່ງທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ງ** ເພື່ອໃຫ້ໃຊ້ແທນຄ່າເສຍເຫຍທີ່ເກີດຂຶ້ນ.

ເປັນຫຍັງ ເງື່ອນໄຂ 3 ຈຶ່ງມີຄວາມສຳຄັນ ?

---

ມາດຕາ 145 ວັກ 2.

[11] ກົດໝາຍວ່າດ້ວຍການກໍ່ສ້າງ ສະບັບປີ 2009 ມາດຕາ 5 ຂໍ້ 2, ມາດຕາ 35 ຂໍ້ 1, ມາດຕາ 40 ຂໍ້ 4, ມາດຕາ 53 ຂໍ້ 5.

ຍ້ອນວ່າ ເງື່ອນໄຂ 3 ໄດ້ກຳນົດໄວ້ໃນມາດຕາ 474 ຂອງປະມວນກົດໝາຍແພ່ງ ວ່າ ບຸກຄົນໃດໜຶ່ງ ຈະມີຄວາມຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍ ກໍຕໍ່ເມື່ອຫາກມີສາຍພົວພັນເຫດ ແລະ ຜົນລະຫວ່າງ ການກະທຳກັບຄວາມເສຍຫາຍທີ່ເກີດຂຶ້ນ.

ສຳລັບ "ຄວາມເສຍຫາຍ" ທີ່ກຳນົດໄວ້ໃນ ຂໍ້ 2.2.2 ມີຄວາມໝາຍຄືກັນກັບ "ຜົນເສຍຫາຍ" ທີ່ກຳນົດໄວ້ໃນຂໍ້ 2.2.3 ນີ້.

**2.2.4 ກ່ຽວກັບເງື່ອນໄຂ 4**

ພວກເຮົາສາມາດເວົ້າໄດ້ວ່າ "ມີຄ່າເສຍຫາຍ" ເປັນເງື່ອນໄຂໜຶ່ງທີ່ພາໃຫ້ເກີດສິດທວງຂອງ **ກ** ຕໍ່ **ງ** ເພື່ອໃຫ້ໃຊ້ແທນຄ່າເສຍຫາຍ.

ເປັນຫຍັງເງື່ອນໄຂ 4 ຈຶ່ງມີຄວາມສຳຄັນ ?

ຍ້ອນວ່າ ຄ່າເສຍຫາຍ ແມ່ນຈຳນວນເງິນ ຫຼື ວັດຖຸສິ່ງຂອງ ຂອງ **ງ** ທີ່ຕ້ອງຮັບຜິດຊອບເພື່ອໃຊ້ແທນຄວາມເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນແກ່ຜູ້ອື່ນ, ອີງຕາມປະມວນກົດໝາຍແພ່ງ ມາດຕາ 3 ຂໍ້ 4 ແລະ ມາດຕາ 472 "...ຊຶ່ງຜູ້ລະເມີດນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ".

**3. ຄຳຕອບ ຕໍ່ຄຳຖາມ 2**

**3.1 ປະເດັນຂັດແຍ່ງໃນກໍລະນີສຶກສານີ້** ມີດັ່ງລຸ່ມນີ້:

1) ມີການກະທຳດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ (ບໍ່ເປັນປະເດັນຂັດແຍ່ງ)
2) ມີຄວາມເສຍຫາຍ (ບໍ່ເປັນປະເດັນຂັດແຍ່ງ)
3) ມີສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ (ບໍ່ເປັນປະເດັນຂັດແຍ່ງ)
4) ມີຄ່າເສຍຫາຍ (ເປັນປະເດັນຂັດແຍ່ງ)

**3.2 ການວິເຄາະຄຳຕອບ**

**3.2.1 ປະເດັນທີ່ວ່າ "ມີການກະທຳ ດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ"**

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 "ບັນຫາທີ່ ໂຈດ ແລະ ຈຳເລີຍຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຕ້ອງຊອກຫາຫຼັກຖານ..." ແລະ ເຫັນວ່າຄຳກ່າວອ້າງຂອງ **ງ** ກໍຍອມຮັບວ່າອຸບປະຕິເຫດ ທີ່ເກີດຂຶ້ນຍ້ອນຄວາມປະໝາດຂອງຕົນແທ້. ດັ່ງນັ້ນ, ປະເດັນທີ່ວ່າ ມີການກະທຳ ດ້ວຍຄວາມບໍ່ລະມັດລະວັງ ທີ່ຂັດກັບກົດໝາຍ ຈຶ່ງບໍ່ເປັນປະເດັນຂັດແຍ່ງລະຫວ່າງ **ກ** ແລະ **ງ**.

**3.2.2 ປະເດັນທີ່ວ່າ "ມີຄວາມເສຍຫາຍ"**

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 "ບັນຫາທີ່ ໂຈດ ແລະ ຈຳເລີຍຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຕ້ອງຊອກຫາຫຼັກຖານ..." ຊຶ່ງຄວາມເສຍຫາຍໃນກໍລະນີນີ້ **ຂ** ໄດ້ຮັບບາດເຈັບສາຫັດແຂນຫັກເບື້ອງຂວາ, ຂາຫັກເບື້ອງຊ້າຍ,

ກະດູກກະໂພກແຕກ ແລະ ເສຍອົງຄະ ເປັນຄວາມເສຍຫາຍທາງດ້ານ ສຸຂະພາບ ແລະ ຈິດໃຈ. ສ່ວນລົດຈັກເປ່ເພນັ້ນ ເປັນຄວາມເສຍຫາຍທາງດ້ານຊັບ. ແຕ່ອີງຕາມຄຳກ່າວອ້າງຂອງ **ງ** ກໍບໍ່ໄດ້ໂຕ້ແຍ່ງຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ. ດັ່ງນັ້ນ, ປະເດັນທີ່ວ່າ "ມີຄວາມເສຍຫາຍ" ຈຶ່ງບໍ່ເປັນປະເດັນຂັດແຍ່ງລະຫວ່າງ **ກ** ແລະ **ງ**.

**3.2.3 ປະເດັນທີ່ວ່າ "ມີສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ"**

ອີງຕາມມາດຕາ 194 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 "ບັນຫາທີ່ ໂຈດ ແລະ ຈຳເລີຍຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຕ້ອງຊອກຫາຫຼັກຖານ..." ແລະ ອີງຕາມຄຳກ່າວອ້າງຂອງ **ກ** ທີ່ວ່າ "**ງ** ໄດ້ຂີ່ລົດເກັ໋ງ ແຄມເມີລີ ດ້ວຍຄວາມໄວເກີນຂອບເຂດ ພ້ອມທັງ **ງ** ກໍໄດ້ກົ້ມຈັບເອົາໂທລະສັບທີ່ຕົກຢູ່ພື້ນຂຶ້ນມາເພື່ອຮັບສາຍ ເຮັດໃຫ້ລົດເສຍຫຼັກອອກຈາກຊ່ອງຈະລາຈອນ ແລ້ວໄປຕຳເອົາ **ຄ** ຜູ້ເປັນລູກຊາຍ ແລະ ເຈືອກໄປຕຳເອົາ **ຂ** ຜູ້ເປັນຜົວຂອງຂ້າພະເຈົ້າ. ຈາກນັ້ນ, ກໍເຈືອກໄປຕຳເອົາລົດຈັກ **ຂ** ທີ່ຈອດໄວ້ ຊຶ່ງເປັນສາເຫດເຮັດໃຫ້ **ຄ** ເສຍຊີວິດ, **ຂ** ບາດເຈັບສາຫັດ, ສ່ວນລົດຈັກນັ້ນ ກໍເປ່ເພສິ້ນຄວນ" ແລະ ຄຳກ່າວອ້າງຂອງ **ງ** ທີ່ວ່າ "ອຸບປະຕິເຫດ ທີ່ເກີດຂຶ້ນນັ້ນຍ້ອນຄວາມປະໝາດຂອງຕົນແທ້". ສະນັ້ນ, ສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ ຈຶ່ງບໍ່ເປັນປະເດັນຂັດແຍ່ງລະຫວ່າງ **ກ** ແລະ **ງ**.

**3.2.4 ປະເດັນທີ່ວ່າ "ມີຄ່າເສຍຫາຍ"**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2024 ໄດ້ກຳນົດວ່າ "ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ" ແລະ ອີງຕາມຄຳກ່າວອ້າງຂອງ **ງ** ວ່າ ການທີ່ **ກ** ໄດ້ຮຽກຮ້ອງຄ່າປິ່ນປົວ, ຄ່າເສຍອົງຄະ ແລະ ຂໍໃຫ້ຊື້ລົດຈັກຄັນໃໝ່ນັ້ນ ເປັນການຮຽກຮ້ອງຄ່າເສຍຫາຍທີ່ສູງເກີນຄ່າເສຍຫາຍຕົວຈິງ, **ງ** ຈຶ່ງບໍ່ສາມາດໃຊ້ແທນໃຫ້ໄດ້ຕາມການຮ້ອງຂໍ, ສ່ວນລົດຈັກນັ້ນຈະຂໍສ້ອມແປງໃຫ້ຢູ່ໃນສະພາບເດີມ. ສະນັ້ນ, ອີງຕາມມາດຕາ 194 ວັກ 1 ທີ່ກ່າວມາຂ້າງເທິງນີ້ ແລະ ອີງຕາມການກ່າວອ້າງຂອງ **ກ** ແລະ **ງ** ແລ້ວ ປະເດັນຂັດແຍ່ງແມ່ນຄ່າເສຍຫາຍທີ່ **ກ** ຮ້ອງຂໍນັ້ນເໝາະສົມ ຫຼື ບໍ່.

## 4. ຄຳຕອບ ຕໍ່ຄຳຖາມ 3

### 4.1 ຫຼັກຖານເພື່ອພິຈາລະນາປະເດັນຂັດແຍ່ງ ມີດັ່ງນີ້:

ປະເດັນຂັດແຍ່ງ ແມ່ນ"ຄ່າເສຍຫາຍທີ່ **ກ** ຮ້ອງຂໍນັ້ນເໝາະສົມ ຫຼື ບໍ່" ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງດັ່ງກ່າວ ແມ່ນ ເອກະສານ, ຮູບພາບ, ວິດີໂອ, ພາຫະນະ, ພະຍານ ຫຼື ຫຼັກຖານອື່ນ ທີ່ສາມາດຢັ້ງຢືນກ່ຽວກັບການປິ່ນປົວ, ການເສຍອົງຄະ ແລະ ການເປ່ເພຂອງພາຫະນະ.

**4.2 ການວິເຄາະຄຳຕອບ**

ອີງຕາມມາດຕາ 194 ວັກ 1 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ໃນເວລາດຳເນີນຄະດີ ຖ້າຫາກວ່າມີການຮັບຮູ້ ຫຼື ປະຕິເສດຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ້ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ". ດັ່ງນັ້ນ , **ກ** ຕ້ອງໄດ້ຊອກຫຼັກຖານມາຢັ້ງຢືນຕໍ່ປະເດັນຂັດແຍ່ງ

ອີງຕາມມາດຕາ 101 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ໂຈດ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ, ຄຳຮ້ອງຂໍຂອງຕົນ ແລະ ມາດຕາ 102 ໂຈດ ແລະ ຈຳເລີຍ ຫຼື ບຸກຄົນທີສາມ ຕ້ອງຊອກຫາ, ນຳສະເໜີ ຂໍ້ມູນ ຫຼັກຖານ ທີ່ເຊື່ອຖືໄດ້ ແລະ ບັນຫາທາງດ້ານກົດໝາຍຕໍ່ສານ ເພື່ອພິສູດຂໍ້ເທັດຈິງ ຫຼື ຄວາມເປັນຈິງໃນປະເດັນ,  ບັນຫາທີ່ຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ້ງຕໍ່ສານ...ສະນັ້ນ, **ກ** ຕ້ອງນຳຫຼັກຖານມາຢັ້ງຢືນຕໍ່ສານ ເພື່ອເປັນການພິສູດຄຳກ່າວອ້າງຂອງຕົນ ແລະ ອີງໃສ່ ມາດຕາ 95 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ຫຼັກຖານໃນຄະດີແພ່ງ ແມ່ນບັນດາຂໍ້ມູນ ເປັນຕົ້ນ ວັດຖຸ, ເອກະສານ ທີ່ພົວພັນກັບຄະດີ...", ມາດຕາ 96 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ທີ່ມາຂອງຫຼັກຖານ ຂໍ້ 1. ເອກະສານ, ວັດຖຸສິ່ງຂອງ ແລະ ສຽງ, ຂໍ້ 3 ການໃຫ້ການຂອງຄູ່ຄວາມ, ບຸກຄົນທີສາມ, ພະຍານໃນຄະດີ, ຂໍ້ 4 ບົດສະຫຼຸບ ຫຼື ບົດລາຍງານຂອງຜູ້ຊ່ຽວຊານ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ".

"ປະເດັນຂັດແຍ່ງ ກ່ຽວກັບຄ່າເສຍຫາຍ ລະຫວ່າງ **ກ** ກັບ **ງ**" ນັ້ນ ຫຼັກຖານທີ່ **ກ** ຕ້ອງໄດ້ນຳມາແກ້ປະເດັນຂັດແຍ່ງດັ່ງກ່າວ ແມ່ນ ເອກະສານ, ຮູບພາບ, ວິດີໂອ, ພາຫະນະ, ພະຍານ ຫຼື ຫຼັກຖານອື່ນທີ່ສາມາດຢັ້ງຢືນກ່ຽວກັບການປິ່ນປົວ, ການເສຍອົງຄະ ແລະ ການເປ່ເພຂອງພາຫະນະ.

ຖ້າພິຈາລະນາຈາກມາດຕາ 97 ວັກ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 ທີ່ໄດ້ກຳນົດວ່າ "ຫຼັກຖານທາງດ້ານວັດຖຸ ແມ່ນໄດ້ມາຈາກ ວັດຖຸສິ່ງຂອງ ທີ່ພົວພັນກັບຂໍ້ຂັດແຍ່ງ ເຊັ່ນ ພາຫະນະ..." ຊຶ່ງໃນກໍລະນີສຶກສານີ້ ຫຼັກຖານທາງດ້ານວັດຖຸແມ່ນ ລົດຈັກທີ່ເປ່ເພນັ້ນ.

ມາດຕາ 97 ວັກ 3 ໄດ້ກຳນົດວ່າ "ຫຼັກຖານທາງດ້ານເອກະສານ ແມ່ນໄດ້ມາຈາກໜັງສືຢັ້ງຢືນກຳມະສິດ, ສັນຍາ, ຮູບພາບ , ບັນຊີຊັບສິນ ແລະ ເອກະສານອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງ" ຊຶ່ງໃນກໍລະນີສຶກສານີ້ ຫຼັກຖານທາງດ້ານເອກະສານ ແມ່ນ ເອກະສານຢັ້ງຢືນຄ່າໃຊ້ຈ່າຍໃນການປິ່ນປົວ, ໃບຢັ້ງຢືນການຕີລາຄາ ແລະ ລະດັບການເສຍອົງຄະ, ຮູບພາບ ຫຼື ວິດີໂອ ທີ່ຢັ້ງຢືນຄວາມເສຍຫາຍຂອງລົດຈັກ, ໃບປະເມີນລາຄາກ່ຽວກັບການສ້ອມແປງລົດ ຈາກຮ້ານທີ່ຄູ່ກໍລະນີເຫັນດີຮ່ວມກັນ ແລະ ບົດບັນທຶກໄກ່ເກ່ຍ ຂອງຄະນະກຳມະການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຊຶ່ງຫຼັກຖານທີ່ກ່າວມານັ້ນຕ້ອງມີລາຍເຊັນຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງ ລົງວັນທີ, ເດືອນ, ປີ.

ສ່ວນຫຼັກຖານທາງດ້ານບຸກຄົນ ຖ້າພິຈາລະນາຈາກມາດຕາ 97 ວັກ 4 ທີ່ກຳນົດວ່າ "ຫຼັກຖານທາງດ້ານບຸກຄົນ ແມ່ນໄດ້ມາຈາກຄຳໃຫ້ການຂອງຄູ່ຄວາມ, ຄຳໃຫ້ການ ແລະ ການຢັ້ງຢືນຂອງ

ພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ທີ່ພົວພັນກັບຂໍ້ຂັດແຍ່ງ ໃນກໍລະນີສຶກສານີ້ ຫຼັກຖານທາງດ້ານບຸກຄົນ ແມ່ນ ຄຳໃຫ້ການຂອງ **ກ, ງ, ຂ** ແລະ ການຢັ້ງຢືນຈາກທ່ານໝໍຊ່ຽວຊານສະເພາະດ້ານໃນທີ່ປະຊຸມສານ.

**5. ຄຳຕອບ ຕໍ່ ຄຳຖາມ 4**

ອີງຕາມ ມາດຕາ 161 ວັກ 2 ຂອງປະມວນກົດໝາຍແພ່ງ ໄດ້ກຳນົດວ່າ "ຜົວເມຍ ມີສິດຕາງໜ້າຊຶ່ງກັນ ແລະ ກັນ ຕາມທີ່ກຳນົດໄວ້ໃນກົດໝາຍ", ໃນກໍລະນີນີ້ **ກ** ສາມາດຮ້ອງຟ້ອງເອົາການໃຊ້ແທນຄ່າເສຍຫາຍຈາກ **ງ** ໄດ້ໃນຖານະເປັນຜູ້ຕາງໜ້າ **ຂ** ແລະ ອີງຕາມ ມາດຕາ 88 ຂໍ້ 4 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2024 "ຜົວ ຫຼື ເມັຍ ເປັນຜູ້ຕາງໜ້າກັນກ່ຽວກັບສິນສົມສ້າງ ແລະ ໜີ້ສິນ" ຊຶ່ງໃນກໍລະນີ້ ຄ່າເສຍຫາຍ ຂອງ **ຂ** ທີ່ໄດ້ມາຖືເປັນໜີ້ຕ້ອງຮັບ ແລະ ຈະເປັນສິນສົມສ້າງຂອງ **ກ** ແລະ **ຂ** ຕາມມາດຕາ 168 ວັກ 1 ແລະ ວັກ 2 ຂອງປະມວນກົດໝາຍແພ່ງ. ດັ່ງນັ້ນ, **ກ** ຈຶ່ງສາມາດຮ້ອງຟ້ອງໃຫ້ **ງ** ໃຊ້ແທນຄ່າເສຍຫາຍໄດ້ ໃນຖານະເປັນຜູ້ຕາງໜ້າຕາມກົດໝາຍ.

## ຈັດພິມເພື່ອແຈກຢາຍ ຫ້າມ ຊື້ - ຂາຍ

## ສະໜັບສະໜູນການພິມໂດຍ:

ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ

(ໄລຍະທີ 2)

JICA

JICA Project for Promoting Development and Strengthening of the Rule of Law

J•ROL

Phase II

ຈັດພິມຄັ້ງທີ I: ຈຳນວນ 2.000 ຫົວ, ທີ່ໂຮງພິມ ປານຄຳ ຈຳປາ.